ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------===000===-------

# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ຂອງແຂວງອັດຕະປື

ອັດຕະປື, 7 ສິງຫາ 2015

# ສາລະບານ

ໜ້າ

ພາກທີ I: ........ 5

ຕີລາຄາສະພາບການຈັດຕັ້ງປະຕິບັດ ........ 5

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ........ 5

I. ສະພາບແວດລ້ອມຂອງສາກົນ, ພາກພື້ນ ແລະ ພາຍໃນ: ........ 5

(1). ສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ........ 5

(2). ສະພາບແວດລ້ອມພາຍໃນປະເທດ ........ 5

(3). ສະພາບພາຍໃນແຂວງ ........ 6

II. ຕີລາຄາການປະຕິບັດບັນດາຄາດໝາຍສູ້ຊົນຕົ້ນຕໍ ........ 6

2.1. ຄາດໝາຍລວມ ........ 6

2.1.1. ດ້ານສະຖຽນລະພາບທາງດ້ານການເມືອງ ........ 6

2.1.3. ຄາດໝາຍສູ້ຊົນຂອງຂະແໜງເສດຖິດ ........ 7

2.1.4. ຄາດໝາຍສູ້ຊົນຂອງຂະແໜງສັງຄົມແລະເປົ້າໝາຍສະຫັດສະຫວັດທາງດ້ານ ການພັດທະນາ ........ 7

2.1.5. ຄາດໝາຍສູ້ຊົນດ້ານສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ........ 8

2.2. ການເຕີບໂຕທາງເສດຖະກິດແລະການດຸນດ່ຽງເສດຖະກິດມະຫາພາກ ........ 8

2.2.1. ການເຕີບໂຕທາງດ້ານເສດຖະກິດ ........ 8

2.2.2. ໂຄງປະກອບທາງເສດຖະກິດ ........ 9

2.2.3. ການດຸນດ່ຽງການລົງທຶນ ........ 9

1). ການລົງທຶນຂອງງົບປະມານພາຍໃນ ........ 9

4). ການປ່ອຍສິນເຊື່ອ ແລະ ທຶນປະຊາຊົນ ........ 10

2.2.5. ບັນຫານະໂຍບາຍປະຊາກອນ ແລະ ການດຸ່ນດ່ຽງແຮງງານ ........ 11

1). ດ້ານປະຊາກອນ ........ 11

2). ການດຸນດ່ຽງແຮງງານ ........ 11

2.4. ການພັດທະນາຂະແໜງການ ........ 12

2.4.1. ການພັດທະນາຂົງເຂດເສດຖະກິດ ........ 12

1). ການພັດທະນາວຽກງານຂະແໜງກະສິກຳ ແລະ ປ່າໄມ້ ........ 12

ແຫຼ່ງຂໍ້ມູນພະແນກອຸດສະຫະກຳ-ການຄ້າແຂວງ ........ 15

4). ການພັດທະນາວຽກງານໂຍທາທິການ ແລະ ຂົນສົ່ງ ........ 15

5). ດ້ານໄປສະນີ, ໂທລະມະນາຄົມ ແລະ ການສື່ສານ ........ 18

6). ການພັດທະນາຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມ ........ 18

2.4.2. ການພັດທະນາຂົງເຂດວັດທະນະທຳ-ສັງຄົມ, ວິທະຍາສາດ ແລະ ເຕັກໂນໂລຊີ ....20
1). ການສຶກສາ ແລະ ກິລາກາຍຍະກຳ (ການພັດທະນາຊັບພະຍາກອນມະນຸດ) ....20
2). ສາທາລະນະສຸກ .... 21
3). ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ....22
4). ຖະແຫລ່ງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ ....23
(1). ດ້ານຖະແຫລ່ງຂ່າວ ແລະ ວັດທະນະທາ....23
(2). ດ້ານການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ....23
5). ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ ....24
6). ການພັດທະນາເຍົາວະຊົນ ແລະ ຊາວໜຸ່ມ ....24
7). ການພັດທະນາດ້ານວິທະຍາສາດ ແລະ ເຕັກໂນໂລຊີ ....25
2.5. ວຽກງານການຕ່າງປະເທດແລະການເຊື່ອມໂຍງກັບສາກົນ....25
2.6. ການຄຸ້ມຄອງບໍລິຫານລັດ....26
2.7.ການປະສານສົມທົບແຜນພັດທະນາເສດຖະກິດ-ສັງຄົມກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ....28
2.8. ສັງລວມຜົນສຳເລັດທີ່ພົ້ນເດັ່ນ ແລະ ສາຍເຫດທີ່ພາໃຫ້ບັນລຸຜົນ ....28
ຜົນສຳເລັດທີ່ພົ້ນເດັ່ນ: ....28
ສາຍເຫດທີ່ພາໃຫ້ມີຜົນສຳເລັດ:....28
ບັນດາຂໍ້ຄົງຄ້າງແລະສິ່ງທ້າທາຍ: ....29
⊕ສາເຫດພາໃຫ້ມີຈຸດອ່ອນ ແລະ ຂໍ້ຄົງຄ້າງ....30
ພາກທີII: .... 31
ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ .... 31
ຄັ້ງທີ VIII (2016-2020).... 31
I. ສະພາບແວດລ້ອມທີ່ອຳນວຍ ແລະ ສິ່ງທ້າທາຍ .... 31
1.1. ສະພາບແວດລ້ອມທີ່ອຳນວຍ....31
(1). ສະພາບພາກພື້ນ ແລະ ສາກົນ.... 31
(2). ສະພາບພາຍໃນປະເທດ .... 31
1.2. ສິ່ງທ້າທາຍ .... 32
(1). ສະພາບພາກພື້ນ ແລະ ສາກົນ....32
(2). ສະພາບພາຍໃນ ....32
II. ເປົ້າໝາຍ, ທິດທາງ ແລະ ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)...32
2.1. ເປົ້າໝາຍລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມ5 ປີ ຄັ້ງທີ VIII .... 33
2.2. ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມ5 ປີ ຄັ້ງທີ VIII.... 33
2.3. ຄາດໝາຍສູ້ຊົນ....33
2.3.1. ຄາດໝາຍດ້ານເສດຖະກິດ ແລະ ການດຸ່ນດ່ຽງມະຫາພາກ.... 33

2). ການດຸ່ນດ່ຽງມະຫາພາກ ........................................................................................34

III. ບັນດາໜ້າທີ່ຈຸດສຸມຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມ5 ປີ ຄັ້ງທີ VIII (2016-2020)................35
(1). ພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ..................................................................35
(2). ການພັດທະນາຂະແໜງການ ....................................................................................36
2.1. ການພັດທະນາຂົງເຂດເສດຖະກິດ.................................................................................36
2.1.1. ກະສິກຳ-ປ່າໄມ້ ..........................................................................................36
2.1.2. ອຸດສາຫະກຳ ແລະ ການຄ້າ ............................................................................39
2.1.3. ພະລັງງານ-ບໍ່ແຮ່ ...........................................................................................40
2.1.4. ໂຍທາທິການ-ຂົນສົ່ງ........................................................................................ 41
2.1.5. ໄປສະນີ ແລະ ໂທລະຄົມມະນາຄົມ .....................................................................43
2.1.6. ການເງິນ-ການທະນາຄານ ..................................................................................43
2.2. ການພັດທະນາຂົງເຂດສັງຄົມ ...................................................................................45
2.2.1. ການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ແລະ ກິລາ ......................................45
2.2.2. ສາທາລະນະສຸກ ແລະ ໂພສະນາການ....................................................................46
2.2.3. ແຮງງານ ແລະ ສະຫວັດດີການສັງຄົມ. .................................................................48
1). ພັດທະນາກຳລັງແຮງງານ. .......................................................................................48
2.2.4. ຖະແຫລ່ງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ .........................................................49
2.2.5. ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ,ພັດທະນາແມ່ຍິງ, ຄວາມກ້າວໜ້າຂອງແມ່ຍິງ ແລະ ວຽກແມ່ ແລະ ເດັກ 51
2.2.6. ການພັດທະນາເຍົາວະຊົນ ແລະ ໄວໜຸ່ມ...............................................................52
2.2.7. ວິທະຍາສາດ ແລະ ເຕັກໂນໂລຊີ............................................................................53
2.2.8. ການເສີມສ້າງຄວາມສາມັກຄີທົ່ວປວງຊົນ...............................................................53
2.2.9. ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ...............................................54
2.3. ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການຄຸ້ມຄອງພັດທະນາທີ່ດິນ 54
(3). ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ.............................................. 57
(4). ການຄຸ້ມຄອງ ແລະ ບໍລິຫານລັດ..................................................................................58
(5). ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ....................................................................60
5.1. ວຽກງານປ້ອງກັນຊາດ ...............................................................................................60
5.2. ວຽກງານປ້ອງກັນຄວາມສະຫງົບ ..................................................................................60
(6).ການຮ່ວມມືກັບສາກົນ ແລະ ພາກພື້ນ ..........................................................................60

IV. ມາດຕະການຈັດຕັ້ງປະຕິບັດ ແລະ ການແບ່ງຄວາມຮັບຜິດຊອບໃນແຜນພັດທະນາເສດຖະກິດ-ສັງຄົມ5 ປີ ຄັ້ງທີ VIII (2016-2020) .........................................................................................60

## ພາກທີ I
## ຕີລາຄາສະພາບການຈັດຕັ້ງປະຕິບັດ
## ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015)

# I. ສະພາບແວດລ້ອມຂອງສາກົນ, ພາກພື້ນ ແລະ ພາຍໃນ:

### (1). ສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ

ໃນໄລຍະ 5 ປີຜ່ານມາການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ເຫັນວ່າດຳເນີນໄປໃນທ່າມກາງສະພາບແວດລ້ອມທີ່ທ້າທາຍພໍສົມຄວນ, ໂດຍສະເພາະໄດ້ມີຫລາຍເຫດການເກີດຂຶ້ນໃນສາກົນແລະພາກພື້ນ ເຊິ່ງສະພາບດັ່ງກ່າວໄດ້ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ການຂະຫຍາຍຕົວຂອງເສດຖະກິດ ແລະ ຄວາມບໍ່ສະຫງົບໃນສັງຄົມ, ສ້າງຄວາມຫຍຸ້ງຍາກໃຫ້ແກ່ການດຳລົງຊີວິດ ແລະ ການເປັນຢູ່ຂອງປະຊາຊົນໃນທົ່ວໂລກ ເປັນຕົ້ນ:ສະພາບໜີ້ສິນ ແລະ ບັນຫາວິກິດການດ້ານການເງິນທີ່ເກີດຂຶ້ນຢູ່ສະຫະລັດອາເມລິກາ, ປະເທດໃນກຸ່ມສະຫະພາບເອີຣົບ,ການເໜັງຕີງຂອງລາຄານ້ຳມັນ, ລາຄາສິນຄ້າສະບຽງອາຫານບາງຊະນິດໃນຕະຫລາດໂລກໂດຍສະເພາະແມ່ນລາຄາຄຳທີ່ມີທ່າອ່ຽງຫລຸດລົງຫລາຍທຽບໃສ່ຊຸມປີຜ່ານມາ, ສະພາບຄວາມວຸ້ນວາຍທາງການເມືອງຢູ່ເຂດຕາເວັນອອກກາງ, ອາຣັບ ແລະ ເຂດອື່ນໆ, ເຫດການແຜ່ນດິນໄຫວ ແລະ ຊູນາມິຄັ້ງຮຸນແຮງຢູ່ປະເທດຍີ່ປຸ່ນ ແລະ ຢູ່ປະເທດອື່ນໆໃນຂົງເຂດອາຊີ.

### (2). ສະພາບແວດລ້ອມພາຍໃນປະເທດ

ສະພາບເສດຖະກິດມະຫາພາກຂອງປະເທດ ກໍ່ມີບັນຫາຫລາຍສົມຄວນເປັນຕົ້ນ: ສະພາບໜີ້ສິນໂຄງການລົງທຶນຂອງລັດ, ການດຸ່ນດ່ຽງງົບປະມານລາຍຮັບ-ລາຍຈ່າຍ ຍັງບໍ່ທັນສົມດຸນ; ນອກນັ້ນ, ສະພາບໄພທຳມະຊາດຍັງສືບຕໍ່ຂົ່ມຂູ່ຢ່າງຕໍ່ເນື່ອງເປັນຕົ້ນແມ່ນໄພນ້ຳຖ້ວມອັນໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຊັບສິນ ແລະ ພື້ນຖານໂຄງລ່າງເສດຖະກິດເປັນຈຳນວນບໍ່ໜ້ອຍ; ບັນຫາປະກົດການຫຍໍ້ທໍ້ໃນສັງຄົມຍັງແກ້ໄຂຍັງບໍ່ທັນຕົກຢ່າງຂາດຕົວ ເຊັ່ນ: ບັນຫາການລະບາດຂອງຢາເສບຕິດ, ການຂີ້ລັກງັດແງະ-ປຸ້ນຈີ້, ການເຂົ້າ-ອອກເມືອງຜິດກົດໝາຍ ແລະ ການຄ້າຂາຍເຖື່ອນ.

ເຖິງແມ່ນວ່າສະພາບແວດລ້ອມຂອງພາກພື້ນ, ສາກົນ ແລະ ພາຍໃນຈະມີການຜັນແປໄປຢ່າງສັບສົນກໍ່ຕາມແຕ່ຍ້ອນການຊີ້ນຳ-ນຳພາຂອງພັກ ແລະ ລັດຖະບານ ບວກກັບຄວາມບຸກບືນເພື່ອສ້າງຜົນງານຂອງບັນດາສະມາຊິກພັກ-ພະນັກງານ ແລະ ຄວາມກະຕືລືລົ້ນຂອງປະຊາຊົນທຸກຊັ້ນຄົນໃນທົ່ວສັງຄົມ, ລ້ວນແຕ່ເປັນເງື່ອນໄຂເຮັດໃຫ້ເສດຖະກິດຂອງປະເທດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງຢູ່ໃນລະດັບ 8% ຕໍ່ປີ ບັນລຸໄດ້ຕາມຄາດທີ່ວາງໄວ້, ເຮັດໃຫ້ປະເທດເຮົາມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຢ່າງໜັກແໜ້ນ, ອັນທີ່ພົ້ນເດັ່ນແມ່ນໄດ້ສຳເລັດກອງປະຊຸມສຸດຍອດເອເຊຍ-ເອີຣົບ, ສຳເລັດການເປັນເຈົ້າພາບໃນການຈັດງານກິລາມະຫາວິທະຍາໄລອາຊຽນ ແລະ ເຫດການສຳຄັນອື່ນໆ. ທັງໝົດນີ້, ໄດ້ກາຍເປັນປັດໃຈພື້ນຖານອັນໜັກແໜ້ນໃຫ້ແກ່ການພັດທະນາ ເພື່ອບັນລຸຄາດໝາຍສູ່ຊົນຕົ້ນຕໍໃນປີ 2015, ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຍັງສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອ, ໃນນີ້: ບາງປະເທດກໍ່ໄດ້ຍົກລະດັບການພົວພັນສູງຂຶ້ນ ແລະ ຂະຫຍາຍການຮ່ວມມືກວ້າງຂວາງກວ່າເກົ່າ.

**(3). ສະພາບພາຍໃນແຂວງ**

ສະເພາະຢູ່ໃນແຂວງຂອງພວກເຮົາ, ກຸ່ມຄົນບໍ່ຫວັງດີຈຳນວນໜຶ່ງຍັງສືບຕໍ່ເຄື່ອນໄຫວ ແລະ ບໍ່ລົດລະໃນການມ້າງເພທຳລາຍຄວາມສະຫງົບພາຍໃນດ້ວຍຫລາຍຮູບການ ເປັນຕົ້ນ: ບັນຫາສາສະໜາ, ສິດທິມະນຸດ, ຂໍ້ຂັດແຍ່ງທາງດ້ານທີ່ດິນບວກກັບພະນັກງານພັກ-ລັດຈຳນວນໜຶ່ງທີ່ພົວພັນກັບຜົນປະໂຫຍດທາງດ້ານເສດຖະກິດ ແລະ ບັນດາປະກົດການຫຍໍ້ທໍ້ໃນສັງຄົມຍັງເກີດຂຶ້ນຢ່າງເນື່ອງນິດລຽນຕິດ. ການຄຸ້ມຄອງບໍລິຫານລັດຍັງມີຫລາຍຂອດບໍ່ທັນຮັດກຸມເສດຖະກິດຂະຫຍາຍຕົວໄວແຕ່ຄວາມສົມດຸນດ້ານສັງຄົມ ແລະ ສິ່ງແວດລ້ອມຍັງບໍ່ທັນສົມຄູ່ກັນ.

ແຕ່ເຖິງຢ່າງໃດກໍ່ດີບັນດາປັດໃຈພື້ນຖານທີ່ເອື້ອອຳນວຍ ແລະ ທ່າແຮງທີ່ຂຸດຄົ້ນໃນໄລຍະຜ່ານມານັ້ນ, ຍັງເປັນຜົນບວກທີ່ສະໜັບສະໜູນທັງຜັກດັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງແຂວງອັດຕະປືພວກເຮົາຢ່າງຕໍ່ເນື່ອງລວມເຖິງຄວາມເປັນໄປໄດ້ທີ່ມີລັກສະນະກ້າວກະໂດດໃນໄລຍະທ້າຍຂອງແຜນການ 5 ປີ ຫລື ໄລຍະຕົ້ນຂອງຊຸມປີຕໍ່ໜ້າເປັນຕົ້ນແມ່ນການຜະລິດຢາງພາລາ, ອ້ອຍ, ມັນຕົ້ນ, ກາເຟທີ່ຕິດພັນກັບການປຸງແຕ່ງແລະພະລັງງານໄຟຟ້າ.

# II. ຕີລາຄາການປະຕິບັດບັນດາຄາດໝາຍສູ້ຊົນຕົ້ນຕໍ

## 2.1. ຄາດໝາຍລວມ

### 2.1.1. ດ້ານສະຖຽນລະພາບທາງດ້ານການເມືອງ

ໂດຍພື້ນຖານເຫັນໄດ້ວ່າສັງຄົມໃນຂອບເຂດທົ່ວແຂວງມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ລະບົບການເມືອງຢູ່ຂັ້ນຮາກຖານໄດ້ຮັບການປັບປຸງຢ່າງເປັນລະບົບຕໍ່ເນື່ອງ ສາມາດຕ້ານ ແລະ ສະກັດກັ້ນບັນດາປະກົດການຫຍໍ້ທໍ້ດ້ານຕ່າງໆທີ່ເກີດຂຶ້ນໄດ້ຢ່າງທັນການ, ເປັນເຈົ້າການກຳແໜ້ນສະພາບກົນອຸບາຍມ້າງເພຂອງສັດຕູ ແລະ ກຸ່ມຄົນບໍ່ດີ. ຮັກສາໄດ້ຄວາມໝັ້ນຄົງຕາມຊາຍແດນ ແລະ ຄວາມສະຫງົບສຸກຂອງປະຊາຊົນ, ເຊິ່ງໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການທຳມາຫາກິນຂອງປະຊາຊົນ, ເຮັດໃຫ້ບັນຍາກາດການສ້າງສາພັດທະນາໃນທຸກຂົງເຂດ ໄດ້ດຳເນີນໄປຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດ.

### 2.1.2. ດ້ານເສດຖະກິດມະຫາພາກ

- ພື້ນຖານເສດຖະກິດຫັນປ່ຽນຢ່າງກ້າວກະໂດດເມື່ອທຽບໃສ່ແຜນການເບື້ອງຕົ້ນ ແລະ 5 ປີກ່ອນ, ຄາດຄະເນ 5 ປີ ສະເລ່ຍເສດຖະກິດຈະຂະຫຍາຍຕົວ ປະມານ 13,8%/ປີ (ແຜນການ 13-14%) ບັນລຸຕາມແຜນ, ສະເລ່ຍ GDP ຕໍ່ຫົວຄົນບັນລຸໄດ້ 1.770ໂດລາ/ຫົວຄົນ (ແຜນການ 1.500) ລື່ນແຜນ; ໂຄງປະກອບເສດຖະກິດໄດ້ຫັນໄປຕາມທິດຫັນເປັນອຸດສາຫະກຳທັນສະໄໝແລະການບໍລິການເທື່ອລະກ້າວ, ບັນດາພື້ນຖານຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການໄດ້ມີການຂະຫຍາຍຕົວນັບທັງເຂດຕົວເມືອງ ແລະ ເຂດຊົນນະບົດ.
- ການເກັບລາຍຮັບກໍ່ມີອັນຕັ້ງໜ້າຕະຫລອດ5ປີຜ່ານມາ, ຄາດຄະເນ 5 ປີ ຈະສາມາດເກັບລາຍຮັບໄດ້ 1.184,48 ຕື້ກີບ ຫລື່ນແຜນການ 3 ເທົ່າຕົວ (ແຜນການ 272 ຕື້ກີບ), ໃນນີ້: ພູດລາຍຮັບຂອງແຂວງສັງລວມຈະໄດ້ປະມານ 416,45 ຕື້ກີບ ຫລື່ນແຜນ 1 ເທົ່າຕົວ(ແຜນການ 202,8 ຕື້ກີບ), ສະເລ່ຍເພີ່ມຂຶ້ນ 21% ຕໍ່ປີກວມເອົາ 5,16% ຂອງ GDP; ລາຍຈ່າຍລວມປະຕິບັດໄດ້ 1.176,40 ຕື້ກີບລື່ນແຜນ 1 ເທົ່າຕົວ (ແຜນການ 585,1 ຕື້ກີບ), ໃນນີ້: ລາຍຈ່າຍເພື່ອການລົງທຶນ 182.20 ຕື້ກີບ (ແຜນການ 290 ຕື້ກີບ). ໃນໄລຍະ 5 ປີ ງົບປະມານຂາດດຸນ 768 ຕື້ກີບ (ແຜນການ 393.13 ຕື້ກີບ) ເທົ່າກັບ 9,6% ຂອງ GDP.
- ລວມຍອດມູນຄ່າການສົ່ງອອກ 5 ປີບັນລຸໄດ້ 60,28 ລ້ານໂດລາສະຫາລັດ ຫລື ເທົ່າກັບ 482,24 ຕື້ກີບກວມເອົາ 5,9% ຂອງ GDP, ເພີ່ມຂຶ້ນສະເລ່ຍປະມານ 18%/ປີ; ລວມຍອດການນຳເຂົ້າໃນ 5 ປີ ບັນລຸ 59,87ລ້ານໂດລາ ຫລື ເທົ່າກັບ 478,96 ຕື້ກີບກວມເອົາ5,9% ຂອງ GDP,ຫລຸດລົງສະເລ່ຍປະມານ 8%/ປີ.

### 2.1.3. ຄາດໝາຍສູ້ຊົນຂອງຂະແໜງເສດຖະກິດ

- ຮອດປີ 2015 ສາມາດຜະລິດເຂົ້າໄດ້ 99.234 ໂຕນ, ສະເລ່ຍຕໍ່ຫົວຄົນບັນລຸ 700 ກິໂລ/ຄົນ/ປີ (ແຜນການ 118.000 ໂຕນ) ສະເລ່ຍຕໍ່ຫົວຄົນບັນລຸໄດ້ 867 ກິໂລ/ຄົນ/ປີ ).
- ສາມາດຂະຫຍາຍຕະຂ່າຍໄຟຟ້າ 22 Kv ແລະ 0,4 Kv ກວມ 90% ຂອງບ້ານ-ກຸ່ມບ້ານ ແລະ ເຂດຈຸດສຸມພັດທະນາ ສາມາດປະຕິບັດໄດ້ຫລື່ນແຜນ 10% ແລະ ການຊົມໃຊ້ໄຟຟ້າບັນລຸໄດ້79% ຂອງຄົວເຮືອນທັງໝົດໃນທົ່ວແຂວງ.
- ສາມາດຂະຫຍາຍສະຖານີຮັບ-ສົ່ງສັນຍານໂທລະສັບມືຖືກວມເອົາ 100% ຂອງພື້ນທີ່ທົ່ວແຂວງ ( ແຜນການ 100%), ຂະຫຍາຍຈຳນວນໝາຍເລກໂທລະສັບມືຖືແລະຕັ້ງໂຕະກວມເອົາ 80% ຂອງຄົວເຮືອນທັງໝົດ (ແຜນການ 80%).
- ດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວແຂວງອັດຕະປືໄດ້ປະມານ 543.812 ຄົນ (ແຜນການ 250.000ຄົນ).

### 2.1.4. ຄາດໝາຍສູ້ຊົນຂອງຂະແໜງສັງຄົມ ແລະ ເປົ້າໝາຍສະຫັດສະຫວັດທາງດ້ານການພັດທະນາ.

- ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ປະກົດການຫຍໍ້ທໍ້ໃນສັງຄົມ ແລະ ກິງຈັກການຈັດຕັ້ງໄດ້ຮັບການແກ້ໄຂຢ່າງຕໍ່ເນື່ອງດ້ວຍຫລາຍຮູບ ແລະ ຫລາຍສີ, ສາມາດທັບມ້າງກຸ່ມກ້ອນຄ້າຂາຍຢາເສບຕິດ, ຂີ້ລັກງັດແງະ ແລະ ກຸ່ມຄົນທີ່ລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດໃນຂອບເຂດທົ່ວແຂວງ.
- ເດັກໃນເກນອາຍຸເຂົ້າໂຮງຮຽນມີຈຳນວນເພີ່ມຂຶ້ນສາມາດປະກາດລຶບລ້າງເມືອງຈົບປະຖົມບໍາລຸງທຸກເມືອງ ແລະ ສຳເລັດການປະກາດແຂວງຈົບປະຖົມບຳລຸງ, ບັນດາໂຮງຮຽນເອກະຊົນໄດ້ເລີ່ມເຂົ້າມາມີບົດບາດໃນວຽກງານສຶກສາ. ຕາໜ່າງສາທາລະນະສຸກຂັ້ນພື້ນຖານໄດ້ກວມເອົາທຸກບ້ານ. ປະຊາຊົນເຂົ້າຮ່ວມໃນຂະບວນການພັດທະນາມີທ່າອ່ຽງເພີ່ມຂຶ້ນ, ທັງໄດ້ຮັບຜົນປະໂຫຍດໂດຍທາງກົງ ແລະ ທາງອ້ອມ.
- ຮີດຄອງປະເພນີ-ຄະນິບທຳນຽມອັນດີງາມທີ່ເປັນເອກະລັກຂອງທ້ອງຖິ່ນແລະຂອງບັນດາເຜົ່າໄດ້ຮັບການປົກປັກຮັກສາ, ສະແດງອອກໃນການນຸ່ງຖືຍາມວັນບຸນປະເພນີ, ວັດວາອາຮາມມີການບູລະນະ, ອັນທີ່ພົ້ນເດັ່ນແມ່ນການບູລະນະວັດທາດເຂດເມືອງອີງການເກົ່າ ແລະ ທາດພະເຈົ້າໄຊເສດຖາທິລາດ, ເຊິ່ງຈະກາຍເປັນມໍລະດົກອັນມີຄຸນຄ່າທັງດ້ານປະຫວັດສາດ ແລະ ດ້ານວັດທະນະທຳບໍ່ສະເພາະແຕ່ຂອງແຂວງຫາກຈະສາມາດກາຍເປັນຂອງຊາດໄດ້ໃນອະນາຄົດ. ການເຂົ້າເຖິງຂໍ້ມູນຂ່າວສານ, ການຕິດຕໍ່ພົວພັນມີຄວາມສະດວກ, ຄື້ນວິທະຍຸ-ໂທລະພາບມີຫລາຍແຫ່ງສາມາດກະຈາຍກວມເອົາພື້ນທີ່ສ່ວນໃຫຍ່ຂອງແຂວງ.
- ພັດທະນາກຳລັງແຮງງານທັງດ້ານປະລິມານ ແລະ ຄຸນນະພາບ ໂດຍສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ, ມີວຽກເຮັດງານທຳທີ່ໝັ້ນຄົງ, ແຮງງານໄດ້ຮັບການປົກປ້ອງສິດຜົນປະໂຫຍດອັນເປັນທຳ, ລະບົບສະຫວັດດີການສັງຄົມໄດ້ຮັບການພັດທະນາ ແລະ ສາມາດເປັນຫລັກຄ້ຳປະກັນການດຳລົງຊີວິດຂັ້ນພື້ນຖານໃຫ້ພົນລະເມືອງຈາກລະບົບປະກັນສັງຄົມ ແລະ ລະບົບສັງຄົມສົງເຄາະ.

**⊕ ການປະຕິບັດເປົ້າໝາຍສະຫັດສະຫວັດການພັດທະນາ (MDGs)**

ໂຄງລ່າງພື້ນຖານທີ່ສຳຄັນຕ່າງໆໄດ້ຮັບປັບປຸງ ແລະ ພັດທະນາກໍ່ສ້າງຢ່າງຕໍ່ເນື່ອງ ເຊັ່ນ: ສຳເລັດການກໍ່ສ້າງບັນດາໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມ, ໂຮງຮຽນວິຊາຊີບ, ວິທະຍາໄລ; ສຳເລັດການສ້າງໂຮງໝໍຂອງແຂວງ, ປັບປຸງໂຮງໝໍເມືອງ, ປັບປຸງ ແລະ ກໍ່ສ້າງສຸກສາລາເຂດຊົນນະບົດຫ່າງໄກສອກຫລີກ. ປັບປຸງຄູ່ມື ແລະ ຍົກສູງຄຸນນະພາບການຮຽນ-ການສອນຂອງຄູ-ອາຈານ; ປັບປຸງການບໍລິການສຸຂະພາບແຕ່ລະຂັ້ນໃຫ້ມີຄວາມສະດວກ ແລະ ວ່ອງໄວ, ຕະໜ່າງການບໍລິການຂະຫຍາຍຢ່າງທົ່ວເຖິງລວມທັງເຂດຫ່າງໄກສອກຫລີກ, ຕອບສະໜອງດ້ານວັດຖຸອຸປະ

ກອນການແພດ, ບູລະນະວັດທາດແລະອື່ນໆ. ປະຈຸບັນສາມາດຫລຸດຜ່ອນອັດຕາຄວາມທຸກຍາກຍັງເຫລືອນ້ອຍກວ່າ 10%, ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ມີນໍ້າໜັກຕໍ່າກວ່າມາດຕະຖານ ຢູ່ໃນລະດັບ 32%; ສາມາດປະກາດເມືອງຈົບປະຖົມບໍາລຸງໄດ້ທັງໝົດ 5 ເມືອງ; ອັດຕາການເຂົ້າຮຽນສຸດທິຊັ້ນປະຖົມເພີ່ມຂຶ້ນຢ່າງຕໍ່ເນື່ອງສາມາດບັນລຸໄດ້ຕາມແຜນຄື 98,1%; ອັດຕາການລອດເຫລືອຂອງເດັກທີ່ເຂົ້າຮຽນຮອດ ປ.5 ບັນລຸໄດ້ 65,5% (ແຜນການ 95%); ອັດຕາການຮູ້ໜັງສືຂອງໄວໜຸ່ມ (15-24 ປີ) ບັນລຸໄດ້ 99,9% ແລະ ອັດຕາການຮູ້ໜັງສືຂອງປະຊາກອນ ອາຍຸ 15 ປີຂຶ້ນໄປບັນລຸໄດ້ 90,9% (ແຜນການ 89%); ດັດສະນີຄວາມສະເໝີພາບດ້ານການສຶກສາລະຫວ່າງຍິງ-ຊາຍຊັ້ນອະນຸບານ 1,05; ຊັ້ນປະຖົມ ເທົ່າກັບ 1, ຊັ້ນມັດທະຍົມຕົ້ນ ເທົ່າກັບ 0,85; ຊັ້ນມັດທະຍົມປາຍ ເທົ່າກັບ 0,81; ອາຊີວະສຶກສາ ເທົ່າກັບ 0,91 ແລະ ການສຶກສາຊັ້ນສູງ ເທົ່າກັບ 0,69.ສາມາດຫລຸດອັດຕາການຕາຍຂອງແມ່ ຍັງເຫລືອ 126 ຕໍ່ເດັກເກີດມີຊີວິດ 100.000 ຄົນ, ຫລຸດອັດຕາການຕາຍຂອງເດັກນ້ອຍ <1 ປີ ຍັງເຫລືອ 9 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ, ຫລຸດອັດຕາການຕາຍຂອງເດັກນ້ອຍ <5 ປີ ຍັງເຫລືອ 12 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ , ອັດຕາສັກຢາກັນໝາກແດງຂອງເດັກອາຍຸຕໍ່າກວ່າ1ປີ ບັນລຸໄດ້ 80% (ແຜນການ 100%), ຫລຸດອັດຕາສ່ວນເດັກນ້ອຍ ລຸ່ມ 1 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານໄດ້ 21,61%(ແຜນການ 8%), ອັດຕາການເກີດໂດຍມີແພດຊ່ວຍ ບັນລຸໄດ້ 27%(ແຜນການ 20%), ອັດຕາຄຸມກໍາເນີດ ບັນລຸໄດ້ 68% ປະຕິບັດລື່ນແຜນ 26%.

- **ດ້ານນໍ້າສະອາດ ແລະ ສຸຂະອານາໄມ**

ມາຮອດປະຈຸບັນອັດຕາສ່ວນປະຊາກອນຊົມໃຊ້ນໍ້າສະອາດ ບັນລຸໄດ້ 78,4% ຂອງຈໍານວນປະຊາກອນທັງໝົດ (ແຜນການ 80.1%), ອັດຕາສ່ວນປະຊາກອນຊົມໃຊ້ວິດຖ່າຍຂອງປະຊາກອນບັນລຸໄດ້ 60% (ແຜນການ 60%) ບັນລຸໄດ້ຕາມແຜນ.

#### 2.1.5. ຄາດໝາຍສູ້ຊົນດ້ານສິ່ງແວດລ້ອມ ແລະ ຊັບພະຍາກອນທໍາມະຊາດ

- ສາມາດຍົກສູງອັດຕາສ່ວນປ່າປົກຫຸ້ມໄດ້ຫຼາຍກ່ວາ 65%(ແຜນການ 70%) ຂອງເນື້ອທີ່ລວມທົ່ວແຂວງ.
- ສາມາດລະດົມ ແລະ ຊຸກຍູ້ໃຫ້ຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍຫລຸດລົງເປັນກ້າວໆ.
- ປົກປັກຮັກສາປ່າໄມ້ທີ່ມີຢູ່ໃນປັດຈຸບັນໃຫ້ນັບມື້ອຸດົມສົມບູນ ກາຍເປັນສະຖານທີ່ໃນການອະນຸລັກຊີວະນາໆພັນ ແລະ ກາຍເປັນແຫຼ່ງດູດຊຶມອາຍກາກໂບນິກ ແລະ ປົກປັກຮັກສາສິ່ງແວດລ້ອມ.

### 2.2. ການເຕີບໂຕທາງເສດຖະກິດ ແລະ ການດຸນດ່ຽງເສດຖະກິດມະຫາພາກ

#### 2.2.1. ການເຕີບໂຕທາງດ້ານເສດຖະກິດ

ອັດຕາການເຕີບໂຕຂອງເສດຖະກິດຂອງແຂວງຂອງພວກເຮົາ ແມ່ນມີອັດຕາການຂະຫຍາຍຕົວຢູ່ໃນລະດັບສູງ ແລະ ກ້າວກະໂດດ ຖ້າທຽບໃສ່ບັນດາແຂວງພາກໃຕ້ ແລະ ຈັ່ງຫວະການເຕີບໂຕລວມຂອງປະເທດສະແດງອອກ ດັ່ງນີ້:

- **ລວມຍອດມູນຄ່າຜະລິດຕະພັນພາຍໃນຂອງແຂວງ ຫລື GDP:** ໃນໄລຍະ 5 ປີ ເພີ່ມຂຶ້ນສະເລ່ຍ 13,82%/ປີ; ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ ເພີ່ມຂຶ້ນຈາກ 614 ໂດລາ/ຄົນ ໃນປີ 2010, ຮອດປີ 2015 ບັນລຸໄດ້ 1.770 ໂດລາ (ແຜນການ 1.500 ໂດລາ), ລື່ນແຜນການປີ 2015 ປະມານ 270 ໂດລາ, ທຽບໃສ່ທ້າຍແຜນການ 5 ປີຜ່ານມາ ເພີ່ມຂຶ້ນເກືອບ 3 ເທົ່າຕົວ. ການຂະຫຍາຍຕົວຄືດັ່ງກ່າວໄດ້ເຮັດໃຫ້ໂຄງປະກອບຂອງການຜະລິດເສດຖະກິດຫັນໄປຕາມທິດທີ່ໄດ້ກໍານົດໄວ້ຄື: ຫັນໄປສູ່ການຜະລິດເປັນສິນຄ້າ ແລະ ອຸດສາຫະກໍາທັນສະໄໝແຕ່ຫົວທີ, ໃນນີ້:

- **ຍອດຜະລິດຕະພັນກະສິກໍາ-ປ່າໄມ້**: ຈັງຫວະການຂະຫຍາຍຕົວໃນໄລຍະ 5 ປີ ຄາດຄະເນເພີ່ມຂຶ້ນສະເລ່ຍ 10,69% ຕໍ່ປີ, ກວມເອົາ 28,2% ຂອງ GDP, ການຜະລິດໄດ້ມີການຫັນປ່ຽນຢ່າງຕັ້ງໜ້າຈາກຮູບການຜະລິດທີ່ເຄີຍ

ມີເຊັ່ນ: ເຂົ້າກິນແລະລ້ຽງສັດແບບຄອບຄົວມາສູ່ການຜະລິດເປັນສິນຄ້າສ້າງໃຫ້ມີຜະລິດຕະພັນໃໝ່ ເຊັ່ນ: ກາເຟ, ຢາງພາລາ, ປາມແລະອ້ອຍ (ນ້ຳຕານ). ການລ້ຽງສັດແບບເປັນຟາມເລີ່ມມີໜໍ່ແໜງໃໝ່ສະໜອງໄດ້ຄວາມຕ້ອງການໃນເບື້ອງຕົ້ນ.

- **ຍອດຜະລິດຕະພັນອຸດສາຫະກຳ:** ຈັງຫວະການຂະຫຍາຍຕົວໃນໄລຍະ 5 ປີ ຄາດຄະເນເພີ່ມຂຶ້ນສະເລ່ຍ 37,31% ຕໍ່ປີ, ກວມເອົາ 36,6%ຂອງ GDP, ເດັ່ນກວ່າໝູ່ແມ່ນອຸດສາຫະກຳປຸງແຕ່ງທີ່ໄດ້ຫັນປ່ຽນຈາກໂຄງປະກອບການຜະລິດທີ່ປຸງແຕ່ງໄມ້ເປັນຕົ້ນຕໍມາສູ່ການຜະລິດປຸງແຕ່ງຜະລິດຕະພັນກະສິກຳທີ່ມີລັກສະນະຄົບຊຸດ ຄື: ສຳເລັດການກໍ່ສ້າງໂຮງງານນ້ຳຕານຄົບຊຸດ, ກ້ອນຢາງພາລາ; ອຸດສາຫະກຳການກໍ່ສ້າງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເຕີບໂຕຂອງຍອດຜະລິດຕະພັນອຸດສາຫະກຳ.

- **ຍອດຜະລິດຕະພັນຂະແໜງບໍລິການ:** ຈັງຫວະການຂະຫຍາຍຕົວໃນໄລຍະ 5 ປີ ຄາດຄະເນເພີ່ມຂຶ້ນສະເລ່ຍ 40,82%ຕໍ່ປີ, ກວມເອົາ 35%ຂອງ GDP, ປັດໃຈສຳຄັນຂອງການເຕີບໂຕແມ່ນມາຈາກການເພີ່ມຂຶ້ນຂອງການເງິນພາກລັດ ແລະ ພາສີຂາເຂົ້າ, ການບໍລິການຂາຍຍົກ-ຂາຍຍ່ອຍ, ທ່ອງທ່ຽວ ແລະ ໂທລະຄົມທີ່ມີທ່າອ່ຽງເພີ່ມຂຶ້ນສູງໃນແຕ່ລະປີ.

### 2.2.2. ໂຄງປະກອບທາງເສດຖະກິດ

ການກຳນົດບັນດາແຜນງານ, ໂຄງການ ແລະ ວຽກງານຈຸດສຸມຕ່າງໆຂອງຂະແໜງການເສດຖະກິດ ແລະ ບັນດາເມືອງເຫັນວ່າມີຄວາມສອດຄ່ອງ, ເໝາະສົມ ແລະ ຖືກຕ້ອງກັບທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສາມາດຫັນປ່ຽນໂຄງປະກອບຂອງ GDP ໃນປີ 2015 ໂດຍຂະແໜງກະສິກຳ-ປ່າໄມ້ ກວມເອົາປະມານ 28,2%, ອຸດສາຫະກຳ ກວມເອົາປະມານ 36,6% ແລະ ການບໍລິການກວມເອົາປະມານ 40,82%.

### 2.2.3. ການດຸນດ່ຽງການລົງທຶນ

ອັດຕາການຂະຫຍາຍໂຕຂອງເສດຖະກິດ ຫຼື GDP  ສາມາດບັນລຸໃນອັດຕາສະເລ່ຍ 13,8%/ປີ (ແຜນການ 13-14%/ປີ) ສຳລັບໄລຍະ 5 ປີ(2011-2015) ໄດ້ຕາມແຜນນັ້ນ, ຍ້ອນວ່າແຂວງຂອງພວກເຮົາສາມາດລະດົມການລົງທຶນລວມທັງຫມົດໄດ້ປະມານ 4.653 ຕື້ກີບ (ແຜນການ 3.500 ຕື້ກີບ) ກວມເອົາປະມານ 57,62% ຂອງ GDP ຫຼື 3,66% ຂອງຄາດຄະເນການລົງທຶນລວມທົ່ວປະເທດ (127.000 ຕື້ກີບ). ໃນນີ້, ເປັນທຶນຂອງລັດປະມານ 600 ຕື້ກີບ (ແຜນການ 523 ຕື້ກີບ) ກວມເອົາປະມານ 12,89% ຂອງການລົງທຶນທັງໝົດ, ທຶນຊ່ວຍເຫຼືອ ແລະ ກູ້ຢືມ 350 ຕື້ກີບ (ແຜນການ 442 ຕື້ກີບ) ກວມເອົາປະມານ 7,52% ຂອງການລົງທຶນທັງໝົດ, ການລົງທຶນຈາກພາກສ່ວນທຸລະກິດເອກະຊົນພາຍໃນ ແລະຕ່າງປະເທດປະມານ 2.800 ຕື້ກີບ (ແຜນການ 2.252 ຕື້ກີບ) ກວມເອົາປະມານ 60,17% ຂອງການລົງທຶນທັງໝົດ ແລະ ການລົງທຶນຂອງສິນເຊື່ອທະນາຄານສົມທົບກັບທຶນຂອງປະຊາຊົນ ເພື່ອກໍ່ສ້າງພື້ນຖານເສດຖະກິດປະມານ 903 ຕື້ກີບ (ແຜນການ 283 ຕື້ກີບ) ກວມເອົາປະມານ 19,40% ຂອງການລົງທຶນທັງໝົດ.

#### 1). ການລົງທຶນຂອງງົບປະມານພາຍໃນ

ການລົງທຶນຂອງງົບປະມານພາຍໃນ ໄລຍະ 5 ປີ ປະຕິບັດໄດ້ 600 ຕື້ກີບ (ແຜນການ 523 ຕື້ກີບ) ກວມເອົາປະມານ 12,89% ຂອງການລົງທຶນລວມ (ທົ່ວປະເທດ ປະມານ 8-10%). ທຶນດັ່ງກ່າວແມ່ນໄດ້ສຸມໃສ່ການພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ພັດທະນາເຂດຫ່າງໄກສອກຫຼີກ-ເຂດຊາຍແດນ, ການຍຸດຕິການຖາງປ່າເຮັດໄຮ່ປູກເຂົ້າແບບເລື່ອນລອຍຕິດພັນກັບການຈັດສັນອາຊີບຄົງທີ່, ສົ່ງເສີມການສ້າງວຽກເຮັດງານທຳ, ສົ່ງເສີມວັດທະນະທຳອັນດີງາມຂອງຊາດ, ວຽກງານຕົວແບບໃນການພັດທະນາ, ວຽກງານສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ພັດທະນາຕົວເມືອງ ແລະ ເທດສະບານແຂວງ.

**2). ທຶນຊ່ວຍເຫລືອລ້າ ແລະ ກູ້ຢືມ (ODA)**

ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ ໃນໄລຍະ 5 ປີ ປະຕິບັດໄດ້ 350 ຕື້ກີບ(ແຜນການ 442 ຕື້ກີບ ຫລື ເທົ່າກັບ 54 ລ້ານໂດລາສະຫະລັດ) ກວມເອົາປະມານ 7,52% ຂອງການລົງທຶນລວມ. ທຶນດັ່ງກ່າວແມ່ນໄດ້ສຸມໃສ່ການພັດທະນາ ເພື່ອໃຫ້ບັນລຸເປົ້າໝາຍສະຫັດສະວັດທາງດ້ານການພັດທະນາ (MDGs) ແລະ ໂຄງການດ້ານວັດທະນາທຳ-ສັງຄົມອື່ນໆເປັນຕົ້ນ: ການພັດທະນາຊັບພະຍາກອນມະນຸດ ແລະ ການແກ້ໄຂຄວາມທຸກຍາກ, ການສົ່ງເສີມໃຫ້ຄົນມີການສຶກສາສູງ ແລະ ມີຄຸນນະພາບ, ມີລະດັບຊີວິດການເປັນຢູ່ທີ່ດີຂຶ້ນ, ມີສຸຂະພາບທີ່ແຂງແຮງ ແລະ ມີໂພຊະນາການທີ່ຖືກຫລັກສຸກຂະອະນາໄມ. ລວມທັງການເຊື່ອມໂຍງກັບບັນດາແຂວງພາກໃຕ້ ຂອງ ສປປ ລາວ, ການເຊື່ອມໂຍງກັບເຂດ 3 ຫຼ່ຽມພັດທະນາ (C-L-V) ແລະ ຂົງເຂດອະນຸພາກພື້ນອື່ນໆ.

**3). ການລົງທຶນຂອງເອກະຊົນພາຍໃນ ແລະ ການລົງທຶນໂດຍກົງຂອງຕ່າງປະເທດ**

ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃນໄລຍະ 5 ປີ ປະຕິບັດໄດ້ 350 ລ້ານໂດລາ ຫລື ເທົ່າກັບ 2.800 ຕື້ກີບ (ແຜນການ 2.252 ຕື້ກີບ ເທົ່າກັບ 274 ລ້ານໂດລາສະຫະລັດ) ກວມເອົາປະມານ 60,17% ຂອງການລົງທຶນລວມ. ການລົງທຶນດັ່ງກ່າວແມ່ນໄດ້ສຸມໃສ່ບັນດາໂຄງການຂະໜາດໃຫຍ່ທີ່ທາງແຂວງມີທ່າແຮງໄດ້ປຽບ, ການສົ່ງເສີມກິດຈະກຳທາງເສດຖະກິດເຊັ່ນ: ດ້ານການປູກຕົ້ນໄມ້ ແລະ ພຶດອຸດສາຫະກຳ, ດ້ານການລ້ຽງສັດເປັນສິນຄ້າ, ດ້ານພະລັງງານ, ດ້ານບໍ່ແຮ່, ດ້ານທ່ອງທ່ຽວ ແລະ ດ້ານການບໍລິການທາງຜ່ານ ເພື່ອແນ່ໃສ່ສ້າງວຽກເຮັດງານທຳ, ສ້າງພື້ນຖານວັດຖຸເຕັກນິກ ແລະ ທຸລະກິດ, ການພົວພັນກັບສາກົນ, ສ້າງລາຍຮັບເຂົ້າງົບປະມານ ເພື່ອການລົງທຶນໃສ່ຂະແໜງການທີ່ຈຳເປັນ.

**4). ການປ່ອຍສິນເຊື່ອ ແລະ ທຶນປະຊາຊົນ**

ການປ່ອຍສິນເຊື່ອ ແລະ ທຶນຂອງປະຊາຊົນ ໄລຍະ 5 ປີ ປະຕິບັດໄດ້ 903 ຕື້ກີບ (ແຜນການ 283 ຕື້ກີບ) ກວມເອົາປະມານ 19,40% ຂອງການລົງທຶນລວມ. ສິນເຊື່ອດັ່ງກ່າວແມ່ນໄດ້ສຸມໃສ່ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ການສ້າງພື້ນການຜະລິດເປັນສິນຄ້າຂອງຄົວເຮືອນ ແລະ ກຸ່ມການຜະລິດຂອງປະຊາຊົນແລະແກ້ໄຂຄວາມທຸກຍາກ, ໂດຍໄດ້ປ່ອຍສິນເຊື່ອສະເລ່ຍຢູ່ໃນລະດັບ 180,6 ຕື້ກີບ/ປີ (ແຜນການ 56,6 ຕື້ກີບຕໍ່ປີ).

**2.2.4. ການດຸນດ່ຽງງົບປະມານພາຍໃນ**

ສາມາດສ້າງລາຍຮັບລວມໃນ 5 ປີ ໄດ້ປະມານ 1.184,48 ຕື້ກີບ (ແຜນການ 272,5 ຕື້ກີບ), ສະເລ່ຍເພີ່ມຂຶ້ນ 21%/ປີ. ໃນນີ້, ລາຍຮັບພາຍໃນ 416,45 ຕື້ກີບ ຫລື່ນແຜນ 1 ເທົ່າຕົວ (ແຜນການ 202,8 ຕື້ກີບ), ລາຍຮັບຈາກສ່ວຍສາອາກອນ 362,1 ຕື້ກີບ (ແຜນການ 185,66 ຕື້ກີບ) ຫລື່ນແຜນເກືອບ 1 ເທົ່າຕົວ, ກວມເອົາ 86,94% ຂອງລວມຍອດລາຍຮັບງົບປະມານ, ລາຍຮັບຈາກຊັບສິນຂອງລັດປະມານ 44,4 ຕື້ກີບ (ແຜນການ 17,17 ຕື້ກີບ), ກວມ 10,66%). ສ່ວນລາຍຮັບພູດສູນກາງ ລວມມີລາຍຮັບຈາກພາສີປະມານ 4,17 ຕື້ກີບ (ແຜນການ 69,6 ຕື້ກີບ) ກວມ 0,1% ຂອງລາຍຮັບທັງໝົດ; ສ່ວນການປະຕິບັດລາຍຈ່າຍງົບປະມານທັງໝົດໃນ 5 ປີ ໄດ້ປະມານ 1.176,40 ຕື້ກີບ (ແຜນການ 585 ຕື້ກີບ) ເພີ່ມຂຶ້ນ 29%/ປີ ແລະ ດຸ່ນດ່ຽງງົບປະມານຈາກສູນກາງລວມ 5 ປີ ປະມານ 768 ຕື້ກີບ (ແຜນການ393 ຕື້ກີບ).

### 2.2.5. ບັນຫານະໂຍບາຍປະຊາກອນ ແລະ ການດຸ່ນດ່ຽງແຮງງານ

#### 1). ດ້ານປະຊາກອນ

ແຂວງອັດຕະປືມີປະຊາກອນທັງໝົດ140.155ຄົນ, ຍິງ 46.625 ຄົນ, ທຽບໃສ່ສົກປີ 2010 ປະຊາກອນເພີ່ມຂຶ້ນ 16.457 ຄົນ, ອັດຕາເພີ່ມສະເລ່ຍ 2%/ປີ ໃນນັ້ນ; ເພດຍິງເພີ່ມຂຶ້ນ 5.610 ຄົນ ເທົ່າກັບ 12,03% ຂອງຈຳນວນເພດຍິງທັງໝົດ. ປະຊາກອນໃນເກນອາຍຸທີ່ເປັນກຳລັງແຮງງານ ເລີ່ມແຕ່ 15-64 ປີ ມີທັງໝົດ 78.424 ຄົນ. ຖ້າທຽບພົນລະເມືອງໃສ່ເນື້ອທີ່ຂອງແຂວງ ເຫັນວ່າພົນລະເມືອງຍັງນ້ອຍ, ຄວາມໜ້າແໜ້ນປະມານ 13-14ຄົນ/ກມ$^2$, ການເພີ່ມຂຶ້ນຂອງພົນລະເມືອງແຂວງອັດຕະປື ເຫັນວ່າຍັງຢູ່ໃນລະດັບຕ່ຳ. ສ່ວນການເຄື່ອນຍ້າຍຂອງປະຊາກອນ (ເຂົ້າ-ອອກຕ່າງແຂວງ) ມີຈຳນວນບໍ່ຫລາຍ, ຍົກເວັ້ນນັກຮຽນ-ນັກສຶກສາ ແລະ ພະນັກງານລັດຈຳນວນໜຶ່ງເທົ່ານັ້ນ, ສ່ວນຈຳນວນໄປອອກແຮງງານຢູ່ຕ່າງແຂວງ ແລະ ຕ່າງປະເທດແມ່ນມີຈຳນວນນ້ອຍ.

#### 2). ການດຸນດ່ຽງແຮງງານ

ຄາດຄະເນປະຊາກອນຮອດປີ 2015 ຈະມີປະມານ 140.155ຄົນ; ໃນນີ້ ເປັນກຳລັງແຮງງານຕົ້ນຕໍ (15-64 ປີ) ຈະມີປະມານ 78.424 ຄົນ. ຖ້າທຽບໃສ່ຄວາມຕ້ອງການເພື່ອສະໜອງໃຫ້ບັນດາໂຄງການທີ່ລັດຖະບານ ແລະ ແຂວງອະນຸມັດຜ່ານມາ ເຫັນວ່າຍັງຂາດເຂີນແຮງງານ ແລະ ແຮງງານໃນເກນອະຍຸສ່ວນໃຫຍ່ແມ່ນເປັນແຮງງານດິບ ບໍ່ມີສີມື, ບໍ່ສາມາດຕອບສະໜອງໃຫ້ແກ່ບັນດາໂຄງການລົງທຶນຕ່າງໆໄດ້ດີເທົ່າທີ່ຄວນ ເຊັ່ນ: ໂຄງການປູກຢາງພາລາທີ່ລັດຖະບານອະນຸມັດໄປແລ້ວ ຈຳນວນ 13.000 ເຮັກຕາ, ປູກຕົ້ນໄມ້ຜະລິດເຈ້ຍປະມານ 9.000-10.000 ເຮັກຕາ ແລະ ໂຄງການອື່ນໆ. ມາຮອດປະຈຸບັນ, ຈຳນວນປະຊາກອນທີ່ມີວຽກເຮັດງານທຳ (ໝວດອາຍຸ 15 ປີຂຶ້ນໄປ) ປະມານ 78.424 ຄົນ, ໃນນັ້ນ: ອັດຕາສ່ວນແຮງງານໃນຂະແໜງກະສິກຳມີປະມານ 43.816 ຄົນ ກວມເອົາ 56%, ອັດຕາສ່ວນແຮງງານໃນຂະແໜງອຸດສາຫະກຳປະມານ 1.564 ຄົນກວມເອົາ 2% ແລະ ອັດຕາສ່ວນແຮງງານໃນຂະແໜງບໍລິການ 32.862 ຄົນກວມເອົາປະມານ 42% ຂອງແຮງງານທັງໝົດ.

### 2.3. ການແກ້ໄຂຄວາມທຸກຍາກ, ການພັດທະນາຊົນນະບົດ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາ

ໃນໄລຍະຜ່ານມາແຂວງແມ່ນຖືເອົາວຽກງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເປັນບັນຫາຕົ້ນຕໍ ແລະ ສຳຄັນໂດຍໄດ້ກຳນົດເຂດຈຸດສຸມພັດທະນາຂອງແຂວງ 11 ຈຸດສຸມ,ໃນນີ້: ຈຸດສຸມລະດັບປະເທດມີ 3 ຈຸດສຸມ ເຊັ່ນ: ເຂດນ້ຳງອນ (ເມືອງຊານໄຊ), ເຂດຫີນລາດ (ເມືອງສະໜາມໄຊ) ແລະ ເຂດສົມບູນ (ເມືອງພູວົງ). ນອກນັ້ນ, ຍັງໄດ້ກຳນົດເຂດຈຸດສຸມໃນການຈັດສັນພູມລຳເນົາ ແລະ ອາຊີບຖາວອນໃຫ້ປະຊາຊົນ ໂດຍກຳນົດເປົ້າໝາຍສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ 6 ຈຸດ. ໄດ້ລະດົມທຸກແຫລ່ງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເຫັນວ່າມີລັກສະນະເພີ່ມຂຶ້ນຢ່າງຕໍ່ເນື່ອງເປັນກ້າວໆມາ.

ປະຈຸບັນຈຳນວນຄອບຄົວທຸກຍາກຫລຸດລົງຍັງເຫລືອ 2.973 ຄອບຄົວກວມເອົາປະມານ 10,85% ຂອງຈຳນວນຄອບຄົວທັງໝົດ, ທຽບໃສ່ປີ 2010 ຫລຸດລົງ 4.066 ຄອບຄົວ. ຍັງມີບ້ານທຸກຍາກ 24 ບ້ານ, ກວມເອົາ 16,44% ຂອງຈຳນວນບ້ານທັງໝົດ ທຽບໃສ່ປີ 2010 ຫລຸດລົງ 79 ບ້ານ. ມີຄອບຄົວພັດທະນາທັງໝົດ 19.927 ຄອບຄົວ ເທົ່າກັບ 72,69% ແລະ ບ້ານພັດທະນາ 64 ບ້ານ ກວມເອົາ 43,84%. ຂອງຈຳນວນບ້ານທັງໝົດ.

ວຽກງານເກັບກູ້ລະເບີດ ໄດ້ໂຄສະນາຊຸມຊົນກ່ຽວກັບຄວາມອັນຕະລາຍຂອງລະເບີດບໍ່ທັນແຕກໄດ້ 123 ບ້ານມີປະຊາຊົນເຂົ້າຮ່ວມຮັບຟັງທັງໝົດ 24.434 ຄົນ,ສຳຫລວດເກັບກຳຂໍ້ມູນ 132 ບ້ານ, ບັນທຶກລູກລະເບີດ ທັງໝົດໄດ້ 1.671 ລູກ, ທຳລາຍລູກລະເບີດທັງໝົດ 5.402 ລູກ ແລະ ເກັບກູ້ລະເບີດອອກຈາກເຂດທຳການຜະລິດໄດ້

3.267.049 ມ$^2$, ໃນນັ້ນ: ເນື້ອທີ່ຜະລິດກະສິກຳ 2.557.861 ມ$^2$, ເນື້ອທີ່ອື່ນໆ 709.188 ມ$^2$, ປະຊາຊົນໄດ້ຮັບຜົນປະໂຫຍດຈຳນວນ 34.352 ຄົນ.

**⊕ ການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.**

ອົງຄະນະພັກແຂວງ ໄດ້ຖືເອົາມະຕິ 03/ກມສພ ແລະ ຄຳສັ່ງເລກທີ 16/ນຍ ເປັນບ່ອນອີງ ແລະ ໃຫ້ຄວາມສຳຄັນເປັນບຸລິມະສິດພິເສດ, ເຊິ່ງໄດ້ຄົ້ນຄວ້າຜັນຂະຫຍາຍ ໂດຍການສ້າງຕັ້ງຄະນະຮັບຜິດຊອບຂັ້ນແຂວງ ແລະ ຂັ້ນເມືອງ ໂດຍມອບໃຫ້ຫ້ອງການພັດທະນາຊົນນະບົດແຂວງເປັນກອງເລຂາ, ກຳນົດເອົາ 3 ເມືອງ, 6 ກຸ່ມບ້ານເປັນບ່ອນເຮັດທົດລອງຄື: ① ເມືອງສາມັກຄີໄຊ (ກຸ່ມບ້ານໝື່ນຫົວເມືອງ, ກຸ່ມບ້ານໃຫຍ່ເຊກະໝານ), ② ເມືອງໄຊເສດຖາ (ກຸ່ມບ້ານວັດຫຼວງ ເຂດພະເມືອງ, ກຸ່ມບ້ານສະແຄະ) ③ ເມືອງສະໜາມໄຊ (ກຸ່ມບ້ານຫີນລາດ ແລະ ກຸ່ມບ້ານແທ).

ໂດຍລວມແລ້ວ, ມາຮອດປະຈຸບັນແມ່ນໄດ້ມີການປັບປຸງກົງຈັກຂັ້ນບ້ານຕາມມະຕິ 08/ກມສພ, ຂະແໜງການຈຳນວນໜຶ່ງກໍ່ໄດ້ລົງປັບປຸງຮາກຖານຂອງຕົນຕາມສາຍຕັ້ງ ແລະ ມອບໝາຍວຽກງານທີ່ເປັນອັນລະອຽດພໍສົມຄວນ, ນັບທັງສິດໜ້າທີ່ຄວາມຮັບຜິດຊອບ, ມາດຖານຂັ້ນແຂວງ, ເມືອງ ແລະ ບ້ານລວມທັງງົບປະມານ, ໂຄງການລົງທຶນ, ໂກຕາລັດຖະກອນເພື່ອຈັດຕັ້ງປະຕິບັດໂດຍລວມແລ້ວເຫັນວ່າໄປຕາມທິດທີ່ກຳນົດໄວ້.

## 2.4. ການພັດທະນາຂະແໜງການ.

### 2.4.1. ການພັດທະນາຂົງເຂດເສດຖະກິດ

#### 1). ການພັດທະນາວຽກງານຂະແໜງກະສິກຳ ແລະ ປ່າໄມ້

ໃນໄລຍະ 5 ປີຜ່ານມາ ການຜະລິດກະສິກຳແມ່ນໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ເພື່ອການຜະລິດເປັນສິນຄ້າໃຫ້ຫຼາຍຂຶ້ນ ສາມາດຮັບປະກັນຕໍ່ການຕອບສະໜອງຄວາມຕ້ອງການຂອງພາຍໃນໄດ້ຢ່າງພຽງພໍ ແລະ ການສົ່ງອອກກໍ່ເຫັນວ່າມີລັກສະນະເພີ່ມຂຶ້ນຢ່າງຕໍ່ເນື່ອງ. ດ້ວຍການຍົກລະດັບຄວາມຮູ້ ແລະ ນຳໃຊ້ເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ເພື່ອເພີ່ມປະສິດທິພາບ ແລະ ປະສິດທິຜົນ ໃນການຜະລິດໃຫ້ສູງຂຶ້ນ.

**⊕ ການປະຕິບັດຄາດໝາຍ:**

**(1). ການຜະລິດສະບຽງອາຫານ**

ໃນສົກປີ 2014-2015 ຄາດຄະເນການຜະລິດເຂົ້າລວມໄດ້ 93.717 ໂຕນ ເທົ່າກັບ 78,1% ຂອງແຜນການ (ແຜນການ 120.000 ໂຕນ ) ສາມາດຕອບສະໜອງການບໍລິໂພກດ້ານສະບຽງໄດ້ມາດຖານສາກົນເປັນຕົ້ນ:

- ການບໍລິໂພກເຂົ້າເຂດຕົວເມືອງອັດຕາສະເລ່ຍ (ໄລ່ເປັນເຂົ້າເປືອກ) 600 ກິໂລ/ຄົນ/ປີ (300 ກິໂລ/ຄົນ/ປີ) ແລະ ເຂດຊົນນະບົດອັດຕາສະເລ່ຍ 700 ກິໂລ/ຄົນ/ປີ (350 ກິໂລ/ຄົນ/ປີ).
- ການບໍລິໂພກຊີ້ນປາເຂດຕົວເມືອງໄດ້ 42 ກິໂລ/ຄົນ/ປີ (40 ກິໂລ/ຄົນ/ປີ) ແລະ ເຂດຊົນນະບົດໄດ້ 35 ກິໂລ/ຄົນ/ປີ(35 ກິໂລ/ຄົນ/ປີ).
- ຜະລິດເຂົ້າລວມໃນ 5 ປີ ບັນລຸໄດ້ 381.913 ໂຕນ (ແຜນການ 357.503 ໂຕນ),ເຊິ່ງຜົນຜະລິດເຂົ້າລວມຈາກ72.466 ໂຕນ ໃນປີ 2010 ມາເປັນ 93.717 ໂຕນໃນປີ 2015 (ແຜນການ 120.000 ໂຕນ) ເຫັນວ່າຜົນຜະລິດເຂົ້າເພີ່ມຂຶ້ນສະເລ່ຍປະມານ 13%/ປີ (ແຜນການ 16,2%/ປີ); ສະເລ່ຍ(ເຂົ້າເປືອກ) 700 ກິໂລ/ຄົນ/ປີ (ແຜນການ 770/ຄົນ/ປີ) ໃນນີ້: ເນື້ອທີ່ປູກເຂົ້ານາປີຈາກ 21.896 ເຮັກຕາ ໃນປີ 2010 ມາເປັນ 23.135 ເຮັກຕາໃນປີ 2015 ເພີ່ມຂຶ້ນ 1.254 ເຮັກຕາ,ສະເລ່ຍເພີ່ມຂຶ້ນ 2,1%/ປີ (ແຜນການ 2%/ປີ).

- ໃນປີ 2010 ເນື້ອທີ່ຄວາມອາດສາມາດສະໜອງນ້ຳຈາກ 1.400 ເຮັກຕາມາເປັນ 1.800 ເຮັກຕາໃນປີ 2015 (ແຜນການ 4.000 ຮຕ), ສະເລ່ຍເພີ່ມຂຶ້ນ 7%/ປີ (ແຜນການ 22%/ປີ); ເນື້ອທີ່ໃນການປູກເຂົ້ານາແຊງໃນປີ 2010 ຈາກ 1.012 ເຮັກຕາ ມາຮອດປີ 2015 ປະຕິບັດໄດ້ພຽງແຕ່ 266 ເຮັກຕາເທົ່າກັບ 17% ຂອງແຜນການ, ຜົນຜະລິດເຂົ້ານາແຊງຈາກ 4.500 ໂຕນໃນປີ 2010 ຫຼຸດລົງມາຍັງເຫຼືອ 1.197 ໂຕນເທົ່າກັບ 6% ຂອງແຜນການ(ແຜນການ 20.000 ໂຕນ).

- ເນື້ອທີ່ປູກເຂົ້າໄຮ່ ຈາກ 1.727 ເຮັກຕາ ໃນປີ 2010 ມາເປັນ 1.428 ເຮັກຕາ ໃນປີ 2015 ເຫັນວ່າເນື້ອທີ່ປູກເຂົ້າໄຮ່ຫຼຸດລົງ 17,3% (ແຜນການ 5%/ປີ), ຜົນຜະລິດເຂົ້າໄຮ່ຈາກ 1.500 ໂຕນໃນປີ 2010 ມາເປັນ2.330 ໂຕນໃນປີ 2015.

**(2). ດ້ານການລ້ຽງສັດ ແລະ ການປະມົງ**

ສາມາດຕອບສະໜອງທາງດ້ານສະບຽງອາຫານ (ຊີ້ນ-ປາ) ໃຫ້ແກ່ຕະຫຼາດພາຍໃນໄດ້ຢ່າງພຽງພໍ, ເຊິ່ງການຜະລິດສັດລ້ຽງໄດ້ມີການຂະຫຍາຍຕົວ ເຊັ່ນ: ຈຳນວນຄວາຍຈາກ 47.747 ໂຕໃນປີ 2010 ຍັງເຫຼືອ 27.100 ໂຕໃນປີ 2015 ເທົ່າກັບ 43,3% ຂອງແຜນ (ແຜນການ 55.351 ໂຕ); ງົວຈາກ 15.647 ໂຕ ໃນປີ 2010 ມາເປັນ 23.933 ໂຕ ໃນປີ 2015 (ແຜນການ23,030 ໂຕ); ໝູຈາກ 28.764 ໂຕໃນປີ 2010 ມາເປັນ69.736 ໂຕ ໃນປີ 2015; ແກະ ແລະ ແບ້ຈາກ 3.190 ໂຕໃນປີ 2010 ມາເປັນ 5.517 ໂຕ ໃນປີ 2015; ສັດປີກຈາກ 453.351 ໂຕໃນປີ 2010 ມາເປັນ 877.849 ໂຕ ໃນປີ 2015, ປາຈາກ 626.480 ໂຕໃນປີ 2010 ມາເປັນ 6.816.200 ໂຕ ໃນປີ 2015.

ເບິ່ງລວມແລ້ວ ການລ້ຽງສັດ ແລະ ການປະມົງ ເຫັນວ່າມີລັກສະນະເພີ່ມຂຶ້ນຢ່າງຕໍ່ເນື່ອງ, ເຊິ່ງສາມາດຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກພາຍໃນໄດ້ຢ່າງພຽງພໍ ແລະ ມີການສົ່ງອອກໄປຍັງຕະຫຼາດຕ່າງແຂວງ ຈຳນວນໜຶ່ງ.

**(3). ວຽກງານຄຸ້ມຄອງປ່າໄມ້:**

ສຳຫຼວດຈັດສັນຄຸ້ມຄອງປ່າໄມ້ໃນເຂດປ່າຜະລິດໄດ້ 92,55% ເທົ່າກັບ 190.368 ເຮັກຕາຂອງເນື້ອທີ່ປ່າຜະລິດທັງໝົດ. ປູກໄມ້ອຸດສະຫະກຳທີ່ເປັນສິນຄ້າໄດ້ດັ່ງນີ້: ຢາງພາລາ 18.255,22 ເຮັກຕາ, ໃນເນື້ອທີ່ກີດຢາງແລ້ວ 899.3 ຮຕ, ຜະລິດ 1.985,6 ໂຕນ; ປູກໄມ້ວິກເນື້ອທີ່ 3.775 ເຮັກຕາ, ກະຖິນ 141 ເຮັກຕາ, ໄມ້ສັກ 751,6 ເຮັກຕາ, ການຂຸດຄົ້ນໄມ້ຈາກ 41.372,14 ແມັດກ້ອນ ໃນປີ 2010 ມາເປັນ 179.364,79 ແມັດກ້ອນ ໃນປີ 2014 ເພີ່ມຂຶ້ນຈາກປີ 2010 ຈຳນວນ 137.992,64 ແມັດກ້ອນ (ສາເຫດທີ່ພາໃຫ້ເພີ່ມຂຶ້ນເນື່ອງຈາກມີການຂຸດຄົ້ນໄມ້ໜ້າເຂື່ອນໄຟຟ້າໃນ 2 ຈຸດຄື: ເຂື່ອນເຊກະໝານ ແລະ ເຂື່ອນນ້ຳກົງ), ການເກັບກູ້ເຄື່ອງປ່າຂອງດົງຈາກ 559,63 ໂຕນ ໃນປີ 2010 ມາເປັນ 280,83ໂຕນ ໃນປີ 2014 ຫຼຸດລົງ49.82%.

ສາມາດຂະຫຍາຍເນື້ອທີ່ຮັບນ້ຳຊົນລະປະທານໄດ້ 7%/ປີ ຂອງເນື້ອທີ່ນາທີ່ມີແລ້ວ, ຈາກການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າຍັງບໍ່ສາມາດປະຕິບັດໄດ້, ເນື່ອງມາຈາກຫຼາຍສາຍເຫດເປັນຕົ້ນ: ສະພາບເສດຖະກິດພາຍໃນ ແລະ ຕ່າງປະເທດບໍ່ຄ່ອງໂຕ, ບໍ່ສາມາດລົງທຶນໃສ່ໂຄງການຂະໜາດໃຫ່ຍໄດ້, ການຕິດຕາມ, ການຄຸ້ມຄອງນ້ຳໃຊ້ຍັງບໍ່ທັນມີປະສິດທິຜົນ, ການມີສ່ວນຮ່ວມຂອງຜູ້ປະກອບການ, ປະຊາຊົນ ແລະ ພາກລັດ ຍັງບໍ່ທັນເຂັ້ມແຂງ.

**2). ການພັດທະນາວຽກງານພະລັງງານ-ບໍ່ແຮ່:**

ໄດ້ກາຍເປັນຂະແໜງທີ່ສຳຄັນໃນການກະຕຸ້ນ ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ກ້າວກະໂດດ,ເປັນຂະແໜງການຕົ້ນຕໍໃນການສ້າງປະຖົມປັດໃຈ ຫັນເປັນອຸດສາຫະກຳທັນສະໄໝ; ໄດ້ເອົາໃຈໃສ່ຄຸ້ມຄອງຕິດຕາມກິດຈະການໄຟຟ້າ, ການຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈາກສູນກາງ ແລະ ທ້ອງຖິ່ນ ເພື່ອຊຸກຍູ້ການພັດທະນາໂຄງການໄຟຟ້າຕ່າງໆ, ໂຄງການບໍ່ແຮ່ທີ່ລັດຖະບານອະນຸຍາດໃຫ້ສາມາດ

ດຳເນີນໄປຕາມແຜນການ ແລະ ຄາດໝາຍທີ່ວາງໄວ້,ລົງເກັບກຳຂໍ້ມູນການຂຸດຄົ້ນສຳຫລວດແຮ່ທາດ ແລະ ຂຸດຄົ້ນປຸງແຕ່ງແຮ່ທາດຢ່າງມີປະສິດທິຜົນ ແລະ ຍືນຍົງ; ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ບໍລິສັດພາຍໃນ ແລະ ຕ່າງປະເທດທີ່ມາລົງທຶນ;ຊຸກຍູ້-ຄຸ້ມຄອງ, ຕິດຕາມ, ກວດກາ ກິດຈະການຂຸດຄົ້ນແຮ່-ຊາຍ, ຫີນກໍ່ສ້າງ, ດິນໜຽວ ແລະ ອື່ນໆ ໃຫ້ສາມາດດຳເນີນກິດຈະການດ້ວຍຄວາມສະດວກ ແລະ ໄປຕາມລະບຽບການ.

**⊕ ການປະຕິບັດຄາດໝາຍ:**

**(1). ດ້ານພະລັງງານ ແລະ ໄຟຟ້າ**

- ການພັດທະນາ ແລະ ຂະຫຍາຍລະບົບຕະໜ່າງໄຟຟ້າ ໄດ້ສຸມໃສ່ເຮັດໃຫ້ 5 ຕົວເມືອງມີໄຟຟ້າຊົມໃຊ້ ຈາກປີ 2010 ໄດ້ກວມເອົາ 54% ຂອງຈຳນວນບ້ານໃນທົ່ວແຂວງ ແລະ 38% ຂອງຈຳນວນຄົວເຮືອນທັງໝົດມາຮອດປີ 2015 ສາມາດຂະຫຍາຍໄຟຟ້າເຂົ້າບ້ານໄດ້ 125 ບ້ານ, ກວມເອົາ 85% ແລະ ປະຊາຊົນມີໄຟຟ້າໃຊ້ 20.254 ຄົວເຮືອນ, ກວມເອົາ 79% ສາມາດປະຕິບັດໄດ້ຕາມແຜນ.
- ສຳລັບໂຄງການພັດທະນາເຂື່ອນໄຟຟ້ານ້ຳຕົກ ແລະ ແຫຼ່ງພະລັງງານໄຟຟ້າອື່ນໆ.ປະຈຸບັນມີຈຳນວນ 31 ໂຄງການ, ລວມມີກຳລັງຕິດຕັ້ງປະມານ 1.726,66 ເມກາວັດ (MW), ເປັນໂຄງການຂັ້ນລັດຖະບານອະນຸມັດ 14 ໂຄງການ ແລະ ແຂວງອະນຸມັດ 17 ໂຄງການ ໃນນີ້: ໂຄງການທີ່ຢູ່ໃນໄລຍະສຶກສາຄວາມເປັນໄປໄດ້ (MOU) ຈຳນວນ 20 ໂຄງການ, ຢູ່ໃນໄລຍະພັດທະນາໂຄງການ (PDA)2 ໂຄງການ, ຢູ່ໃນໄລຍະດຳເນີນການກໍ່ສ້າງ (CA) 4 ໂຄງການ, ດຳເນີນການກໍ່ສ້າງຂະໜາດນ້ອຍ (SHOA) 2ໂຄງການດຳເນີນການປ່ອຍໄຟແລ້ວ (COD) 3 ໂຄງການ.

**(2). ດ້ານບໍ່ແຮ່**

ສາມາດຊຸກຍູ້ໃຫ້ບໍລິສັດທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໄດ້ດຳເນີນການເຄື່ອນໄຫວຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ (ຄຳ) ໄດ້ 1 ໂຄງການ, ເຊິ່ງຄຸ້ມຄອງໂດຍຄະນະຮັບຜິດຊອບກອງທຶນພັກ ແລະ ປກຊ-ປກສ ຫ້ອງວ່າການສູນກາງພັກເປັນການປະກອບສ່ວນສ້າງພື້ນຖານລາຍຮັບເຂົ້າໃສ່ວຽກງານປກຊ-ປກສ.

**3). ການພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ**

**(1). ດ້ານການຄ້າ**

ໄດ້ເສີມຂະຫຍາຍບົດບາດການຄ້າທີ່ເປັນຕ້ອງໂສ້, ເປັນຫົວຈັກຂັບເຄື່ອນເສດຖະກິດເຮັດໃຫ້ການຜະລິດຕິດພັນກັບການຕະຫລາດ, ພັດທະນາຕະຫລາດໂດຍເຮັດໃຫ້ມີການເຊື່ອມໂຍງກັບຕະຫຼາດພາຍນອກ ແລະ ພາກພື້ນ. ສຳເລັດການສ້າງພື້ນຖານໂຄງລ່າງດ້ານການຄ້າໄດ້ຈຳນວນໜຶ່ງເປັນຕົ້ນ: ບັນດາຕະຫຼາດກຸ່ມບ້ານ, ຕະຫຼາດຊຸມຊົນ, ຕະຫຼາດເທດສະບານແຂວງຫລັງໃໝ່ ແລະ ສູນການຄ້າ. ການຄຸ້ມຄອງສິນຄ້າ-ລາຄາ ໂດຍສະເພາະບັນດາສິນຄ້າທີ່ມີການກະທົບໄວຕໍ່ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນເຊັ່ນ: ນ້ຳມັນເຊື້ອໄຟ, ເຂົ້າ, ຊີ້ນ ແລະ ວັດສະດຸກໍ່ສ້າງ. ເອົາໃຈໃສ່ກວດກາ ແລະ ຊຸກຍູ້ຫົວໜ່ວຍທຸລະກິດໃນຂະແໜງວິຊາຊີບຕ່າງໆເພື່ອດັດແກ້ແລະຂຶ້ນທະບຽນວິສາຫະກິດ.

**(2). ການນຳເຂົ້າ ແລະ ສົ່ງອອກ**

ໄດ້ສະໜັບສະໜູນ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດໃຫ້ມີສ່ວນຮ່ວມຢ່າງຫ້າວຫັນໃນການສົ່ງອອກ, ຊຸກຍູ້ການສົ່ງອອກຜະລິດຕະພັນກະສິກຳ, ຜະລິດຕະພັນສິນຄ້າປຸງແຕ່ງໄດ້ຫຼາຍຂຶ້ນ. ສົ່ງເສີມການສົ່ງອອກດ້ວຍການຈັດງານວາງສະແດງສິນຄ້າພາຍໃນ ແລະ ການເຂົ້າຮ່ວມງານວາງສະແດງສິນຄ້າຢູ່ຕ່າງປະເທດ; ໃນໄລຍະ 5 ປີ ການສົ່ງອອກສິນຄ້າ ປະຕິບັດໄດ້ 60,28 ລ້ານໂດລາ, ອັດຕາການຂະຫຍາຍຕົວສະເລ່ຍ 18%/ປີ, ລື່ນແຜນການ 3%/ປີ ແລະ ການນຳເຂົ້າປະຕິບັດໄດ້ 59,87 ລ້ານໂດລາ, ສະເລ່ຍຫລຸດລົງ 8%/ປີ. ຄຽງຄູ່ກັນນັ້ນ,ກໍ່ໄດ້ຕິດຕາມ ແລະ ຄຸ້ມຄອງການນຳເຂົ້າ

ສິນຄ້າປະເພດຕ່າງໆ ເປັນຕົ້ນ: ເຄື່ອງກົນຈັກ, ວັດຖຸອຸປະກອນເພື່ອຕອບສະໜອງຄວາມຕ້ອງການໃນການພັດທະນາພື້ນຖານໂຄງລ່າງ, ການພັດທະນາການຜະລິດຮັບໃຊ້ພາຍໃນ ແລະ ການຜະລິດສິນຄ້າສົ່ງອອກ.

**(3). ດ້ານອຸດສາຫະກຳ**

ໄດ້ຊຸກຍູ້ ແລະ ສົ່ງເສີມການປຸງແຕ່ງຜົນຜະລິດຈາກກະສິກຳ-ປ່າໄມ້ ໂດຍຕິດພັນກັບການຄ້າ-ການບໍລິການ ແລະ ຕິດພັນກັບການພັດທະນາຊົນນະບົດແກ້ໄຂຄວາມທຸກຍາກຂອງປະຊາຊົນ; ເອົາໃຈໃສ່ຊຸກຍູ້ສົ່ງເສີມອຸດສາຫະກຳຂະໜາດນ້ອຍ, ກາງ ແລະ ການຜະລິດອຸດສາຫະກຳ-ຫັດຖະກຳແບບຄອບຄົວ, ເຊິ່ງມັນໄດ້ກາຍເປັນກຳລັງແຮງພື້ນຖານຂອງການພັດທະນາອຸດສາຫະກຳ;ຕິດຕາມ, ຄຸ້ມຄອງ ແລະ ຊຸກຍູ້ບັນດາໂຮງງານອຸດສາຫະກຳປຸ່ງແຕ່ງໄມ້ ສາມາດຫັນຜະລິດຕະພັນໄມ້ເຄິ່ງສຳເລັດຮູບມາຜະລິດໃຫ້ກາຍເປັນຜະລິດຕະພັນສຳເລັດຮູບເພື່ອສົ່ງອອກ. ຂະຫຍາຍ ແລະ ປັບປຸງບັນດາໂຮງງານອຸດສາຫະກຳປຸງແຕ່ງປະເພດຕ່າງໆ ເພື່ອໃຫ້ສາມາດຜະລິດຊົມໃຊ້ພາຍໃນ ແລະ ສົ່ງອອກ, ສາມາດຜະລິດ ແລະ ຈຳໜ່າຍບາງຜົນຜະລິດອຸດສາຫະກຳ-ຫັດຖະກຳໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດ ແລະ ໃຫ້ມີການສົ່ງອອກ. ອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ລັດຖະບານໄດ້ອະນຸມັດໃຫ້ລົງທຶນຢູ່ແຂວງອັດຕະປືໃຫ້ບັນລຸຕາມຈຸດປະສົງ ແລະ ມີປະສິດທິຜົນສູງ.

**(4). ດ້ານການສົ່ງເສີມການຜະລິດ ແລະ ການຄ້າ**

ສາມາດຈັດຕັ້ງຕະຫລາດນັດ ແລະ ເຂົ້າຮ່ວມງານວາງສະແດງ, ຈຳໜ່າຍສິນຄ້າທ້ອງຖິ່ນທັງພາຍໃນ ແລະ ຕ່າງແຂວງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງກຸ່ມລ້ຽງໝູ, ລ້ຽງງົວ ແລະ ສະມາຄົມກະສິກອນຢູ່ 3 ເມືອງ (ໄຊເສດຖາ, ຊານໄຊ ແລະ ພູວົງ), ສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ-ກາງ, ຊຸກຍູ້ ແລະ ສົ່ງເສີມການຄ້າຊາຍແດນໃຫ້ມີການຂະຫຍາຍຕົວ, ຮ່ວມມືການຄ້າກັບປະເທດໃກ້ຄຽງ ເຊັ່ນ: ສ.ສ ຫວຽດນາມ, ຣາຊະອານາຈັກກຳປູເຈຍ ສ້າງເງື່ອນໄຂໃຫ້ປະຊາຊົນທີ່ຢູ່ລຽບຕາມຊາຍແດນມີການພົວພັນແລກປ່ຽນຊື້-ຂາຍນຳກັນໃຫ້ຫລາຍຂຶ້ນ, ສະກັດກັ້ນການນຳເຂົ້າທີ່ບໍ່ຖືກຕ້ອງ, ສິນຄ້າຄຸ້ມຄອງຕາມຂະແໜງການ, ສິນຄ້າເກືອດຫ້າມ ແລະ ສິນຄ້າຜະລິດທາງອ້ອມທີ່ຮັບໃຊ້ໃຫ້ແກ່ການລົງທຶນຂອງນັກລົງທຶນຂອງຕ່າງປະເທດ.

**ອັດຕາການເຕີບໂຕທາງດ້ານອຸດສາຫະກຳ**

| ເນື້ອໃນ | ແຜນການ 2011-2015 | ປະຕິບັດ 2011-2015 | ໝາຍເຫດ |
|---|---|---|---|
| - ຜະລິດຕະພັນອຸດສະຫາກຳ | 10-12% | 14% | |
| - ການຈໍລະຈອນສິນຄ້າ | 9-11% | 16% | |
| - ການສົ່ງອອກ | 15-18% | 18% | |
| - ການນຳເຂົ້າ | 12-15% | -8% | |

ແຫຼ່ງຂໍ້ມູນພະແນກອຸດສະຫະກຳ-ການຄ້າແຂວງ

### 4). ການພັດທະນາວຽກງານໂຍທາທິການ ແລະ ຂົນສົ່ງ

ເອົາໃຈໃສ່ຄຸ້ມຄອງ, ປັບປຸງ, ກໍ່ສ້າງຍົກລະດັບ ແລະ ສ້ອມແປງເສັ້ນທາງການຄົມມະນາຄົມຂົນສົ່ງທາງບົກໃຫ້ເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍເຊັ່ນ: ສ້ອມແປງເສັ້ນທາງຫລວງແຫ່ງຊາດ, ເສັ້ນທາງຈາກເທດສະບານແຂວງຫາເມືອງ, ຈາກເມືອງຫາບັນດາບ້ານ, ເຂດຈຸດສູມ ແລະ ບ່ອນຮ່າງໄກສອກຫລີກໄດ້ເຮັດໃຫ້ການສັນຈອນມີປະສິດທິຜົນກ້າວສູ່ຄວາມທັນສະໄໝ, ສາມາດເຊື່ອມໂຍງກັບບັນດາແຂວງ ແລະ ອອກສູ່ຕ່າງປະເທດ. ມາຮອດປະຈຸບັນຕາໜ່າງຄົມ

ມະນາຄົມຂົນສົ່ງ ເພີ່ມຈາກ 1.122 ກມ ໃນປີ 2011 ມາເປັນ 1.367 ກມ ໃນປີ 2015 ກວມເອົາ 96% ຂອງຈຳນວນບ້ານ; ໃນນີ້: ທາງປາງຈາກ 200,99 ກມ ໃນປີ 2011 ມາເປັນ 289,55 ກມ ໃນປີ 2015. ດ້ານການຂົນສົ່ງທາງອາກາດກໍ່ເຫັນວ່າມີທວງທ່າໃໝ່ ໂດຍສຳເລັດການກໍ່ສ້າງສະໜາມບິນຂອງແຂວງ ເພື່ອບໍລິການທັງພາຍໃນ ແລະ ພາກພື້ນ. ສາມາດປັບປຸງຕົວເມືອງໃຫ້ມີຄວາມສວຍງາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງຕາມຜັງເມືອງ, ຂະຫຍາຍນ້ຳປະປາໃຫ້ນັບມື້ນັບກວ້າງຂວາງ ແລະ ປັບປຸງລະບົບນ້ຳປະປາໃຫ້ມີຄວາມສະອາດ ສາມາດຕອບສະໜອງໃຫ້ປະຊາກອນໃນຕົວເມືອງໄດ້ຊົມໃຊ້ຢ່າງທົ່ວເຖິງ.ສຳເລັດການສຳຫລວດວາງແຜນເພື່ອທຳການກໍ່ສ້າງທາງຫລວງແຫ່ງຊາດ (ທາງ 1J ອັດຕະປື-ຊາຍແດນກຳປູເຈຍ) ເຊິ່ງເປັນເສັ້ນທາງໃນອະນຸພາກພື້ນເຊື່ອມໂຍງອອກສູ່ປະເທດໄກ້ຄຽງ; ສຳເລັດການກໍ່ສ້າງປູຢາງເສັ້ນທາງຫລວງແຫ່ງຊາດ, ທາງຫລວງຂອງແຂວງ, ທາງຫລວງຂອງເມືອງ ແລະ ທາງທ້ອງຖິ່ນ.

**⊕ ການປະຕິບັດຄາດໝາຍ**

**(1). ດ້ານຂົວ-ທາງ**

- ລົງຕິດຕາມ ແລະ ຄຸ້ມຄອງປົກປັກຮັກສາບູລະນະເສັ້ນທາງທີ່ມີຢູ່ແລ້ວ ໃຫ້ຢູ່ໃນສະພາບດີເປັນປົກກະຕິ ເຊັ່ນ: ທາງຫຼວງແຫ່ງຊາດ 18B, 16A, 1l.
- ລົງມືກໍ່ສ້າງເສັ້ນທາງຫລວງແຫ່ງຊາດ 18A (ເທດສະບານແຂວງ-ເມືອງສະໜາມໄຊ-ເມືອງປະທຸມພອນ ຊາຍແດນແຂວງຈຳປາສັກ).
- ກໍ່ສ້າງເສັ້ນທາງຫລວງຂອງແຂວງ ເບີ 9001 ຈາກປະອຳ-ຈະເລີນໄຊ. ສຳເລັດການປັບປຸງ ແລະ ກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ພາຍໃນເທດສະບານແຂວງ ໄລຍະ 1,2,3,4,5 ຍາວ 28,51 ກມ.
- ສຳເລັດການກໍ່ສ້າງຂົວເຊກະໝານ 2 ແລະ ທາງເຂົ້າຂົວຍາວ 3,7 ກມ.
- ສຳເລັດການ ກໍ່ສ້າງສະໜາມບິນແຂວງອັດຕະປື.
- ສຳເລັດຈັດສັນຕົວເມືອງສາມາດສ້າງເຂດພັກຜ່ອນ ແລະ ສຳເລັດການປັບປຸງຍົກລະດັບເສັ້ນທາງເປັນທາງປູຢາງໃນແຕ່ລະເມືອງ 8,2 ກມ.
- ສຳເລັດການສຳຫລວດ-ອອກແບບ ໂຄງການກໍ່ສ້າງເສັ້ນທາງ 1J(ທາງ 1J ອັດຕະປື-ຊາຍແດນກຳປູເຈຍ)
- ສຳເລັດການປູຢາງເສັ້ນທາງແຕ່ເທດສະບານແຂວງ ຫາ ເມືອງ ໄດ້2 ເມືອງ (ໄຊເສດຖາ ແລະ ຊານໄຊ).
- ສຳເລັດໂຄງການກໍ່ສ້າງເສັ້ນທາງຊົນນະບົດ ໄລຍະ 3-4-5 (KFW) ເປັນຕົ້ນສ້າງເສັ້ນທາງແຕ່ເມືອງຫາເຂດຈຸດສຸມພັດທະນາ ແລະ ບ້ານ ສາມາດທຽວໄດ້ 2 ລະດູ.
- ສຳເລັດການທະລຸແລວທາງ ແລະ ສຳຫລວດອອກແບບທາງຊາຍແດນລາວ-ຫວຽດນາມ, ທະລຸແລວທາງຊາຍແດນລາວ-ກຳປູເຈຍ 56,5%.
- ແກ້ໄຂສຸກເສີນຊ່ວງລະດູຝົນ ເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງແຂວງ, ທາງຫຼວງເມືອງ ແລະ ທາງຊົນນະບົດ ມີຄວາມຍາວ 203,9 ກມ.
- ກໍ່ສ້າງປ້ອງກັນຕະຝັ່ງເຈື່ອນແຄມນ້ຳເຊກອງເຂດບ້ານເຊກອງ, ເມືອງສາມັກຄີໄຊ ຄວາມຍາວ 1.180 ມ ປະຕິບັດໄດ້ປະມານ 77%.

**(2). ດ້ານການຂົນສົ່ງ**

- ການພັດທະນາການຂົນສົ່ງໄດ້ມີການຂະຫຍາຍຕົວແລະ ເຂັ້ມແຂງຂຶ້ນເທື່ອລະກ້າວ, ຄຸນນະພາບດ້ານການຈັດຕັ້ງຂອງສະມາຄົມຂົນສົ່ງທາງບົກໄດ້ຮັບການຍົກສູງຂຶ້ນ, ລະບຽບການຕ່າງໆໄດ້ປັບປຸງ ແລະ ເໝາະສົມກັບສະພາບ

ຕົວຈິງ, ສ້າງລະບຽບການຂົນສົ່ງຜ່ານແດນ ແລະ ອື່ນໆ ອີກຕາມຄວາມຈໍາເປັນຕົວຈິງ, ບໍລິມາດໃນການຂົນສົ່ງສິນຄ້າ ແລະ ໂດຍສານ ເຫັນວ່າມີລັກສະນະເພີ່ມຂຶ້ນເລື້ອຍເມື່ອທຽບໃສ່ 5 ປີຜ່ານມາ.

- ສໍາເລັດການສ້າງສະຖານີຂົນສົ່ງໂດຍສານແຫ່ງໃໝ່ນັບທາງພາຍໃນແລະຕ່າງປະເທດ ລວມທັງອໍານວຍຄວາມສະດວກຕ່າງໆຕາມບັນດາເສັ້ນທາງຜ່ານ ເຊັ່ນ: ທາງ 1I, 18B ເຊິ່ງເປັນເສັ້ນທາງຫລັກ ແລະ ເປັນທາງຜ່ານໃນອະນຸພາກພື້ນອອກສູ່ຊາຍແດນລະຫວ່າງປະເທດ.

- ຕິດຕາມ ແລະ ກວດກາພາຫານະໄດ້ຕາມມາດຖານທາງດ້ານເຕັກນິກ ແລະ ການຂົນສົ່ງໃຫ້ມີປະສິດທິຜົນສູງກວ່າເກົ່າ, ຢຸດເຊົາການນໍາໃຊ້ພາຫະນະທີ່ມີການດັດແປງເຕັກນິກ ແລະ ອາຍຸການນໍາໃຊ້ເກີນ 15 ປີ, ປັບປຸງລະບົບກວດກາເອກະສານໃຫ້ເຂົ້າກັບສາກົນ.

- ຮັບປະກັນລະບົບການຂົນສົ່ງໂດຍສານ ແລະ ຂົນສົ່ງສິນຄ້າ ໄດ້ມີຄວາມສະດວກວ່ອງໄວ, ທັນສະໄໝ, ການຂົນສົ່ງມີລັກສະນະຫລາຍຮູບຫລາຍແບບຂຶ້ນ, ສົ່ງເສີມການຂົນສົ່ງດ້ວຍລະບົບຕູ້ຄອນເທນເນີ.

- ກວດກາເຕັກນິກ ແລະ ອູ່ສ້ອມແປງຕ່າງໆ ເຮັດໃຫ້ການບໍລິການມີຄວາມສະດວກ ແລະ ທັນສະໄໝ ໄດ້ມາດຖານຂຶ້ນເລື້ອຍໆ.

- ກວດກາແລະຕິດຊັ່ງນໍ້າໜັກລົດບັນທຸກຕາມສາຍທາງຕ່າງໆຖືກຕ້ອງຕາມລະບຽບການ.

- ໄດ້ເຜີຍແຜ່ກົດລະບຽບຈາລະຈອນໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ, ເອົາກົດລະບຽບຈາລະຈອນເຂົ້າໃນຫລັກ

- ສູດການສິດສອນຢູ່ໂຮງຮຽນປະຖົມ ແລະ ມັດທະຍົມ ຂອງເມືອງເທດສະບານ, ຜູ້ທີ່ນໍາໃຊ້ພາຫະນະຕາມເສັ້ນທາງໃຫ້ມີຄວາມປອດໄພຫຼຸດຜ່ອນອຸບັດຕິເຫດຕາມເສັ້ນທາງ.

**(3). ວຽກງານເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ**

ໃນໄລຍະ 5 ປີຜ່ານມາ ເຫັນວ່າໂຄງລ່າງພື້ນຖານໃນເຂດຕົວເມືອງ ແລະ ນໍ້າປະປາ, ສາທາລະນຸປະໂພກໄດ້ຮັບການກໍ່ສ້າງ ແລະ ປັບປຸງຢ່າງກວ້າງຂວາງ, ດ້ານເຕັກນິກການກໍ່ສ້າງອາຄານຕ່າງໆພາຍໃນແຂວງເຫັນວ່າມີຄຸນນະພາບໄດ້ຕາມມາດຕາຖານ, ການຄຸ້ມຄອງວັດສະດຸ ແລະ ລາຄາຫົວໜ່ວຍ ກໍ່ໄດ້ປະຕິບັດຢ່າງເຂັ້ມງວດ ເພື່ອຮັບປະກັນໃນການກໍ່ສ້າງອາຄານຕ່າງໆພາຍໃນແຂວງ.

ບັນດາຕົວເມືອງ ແລະ ກຸ່ມບ້ານໄດ້ຮັບການດັດແກ້ແຜນຜັງຕົວເມືອງ ເພື່ອພັດທະນາເປັນຕົວເມືອງນ້ອຍໃນອານາຄົດ ແລະ ສໍາເລັດການອອກແບບວາງແຜນຜັງຊີ້ນໍາລວມສໍາເລັດ 5 ຕົວເມືອງ, ຄຸ້ມຄອງການປຸກສ້າງໃຫ້ຖືກຕ້ອງຕາມລະບຽບຄຸ້ມຄອງການປຸກສ້າງໃຫ້ເປັນລະບຽບຮຽບຮ້ອຍຖືກຕາມຜັງເມືອງແຕ່ລະເມືອງທີ່ໄດ້ກໍານົດໄວ້, ຄົ້ນຄວ້າສົ່ງເສີມສະຖາປັດຕິຍະກໍາທີ່ເປັນເອກະລັກຂອງແຂວງເວົ້າລວມ, ເວົ້າສະເພາະຂອງຊົນເຜົ່າ, ອະນຸລັກເຮືອນເຜົ່າທີ່ມີຄວາມໝາຍທາງດ້ານປະຫວັດສາດ.

ສາມາດສະໜອງນໍ້າປະປາໃຫ້ປະຊາຊົນພາຍໃນເທດສະບານແຂວງມີນໍ້າປະປາໃຊ້ຢ່າງທົ່ວເຖິງ ໂດຍການປັບປຸງ ແລະ ຂະຫຍາຍລະບົບນໍ້າປະປາ, ຂະຫຍາຍລົງສູ່ບັນດາເມືອງຕ່າງໆເປັນຕົ້ນ: ປັບປຸງ ແລະ ປ່ຽນຖ່າຍຕະໜ່າງທໍ່ນໍ້າປະປາເທດສະບານແຂວງຈາກທໍ່ເຫັລກມາເປັນທໍ່ຢາງ, ກໍາລັງລົງມືກໍ່ສ້າງສະຖານີນໍ້າປະປາເມືອງໄຊເສດ ແລະ ເມືອງພູວົງ, ສຶກສາຄວາມເປັນໄປໄດ້, ສໍາຫລວດ ແລະ ອອກແບບ ບັນດາເມືອງທີ່ຍັງເຫລືອເພື່ອສະເໜີໂຄງການຍາດແຍ່ງທຶນເພື່ອກໍ່ສ້າງ, ມາຮອດປະຈຸບັນປະຊາຊົນມີນໍ້າປະປາໃຊ້ທັງໝົດ 2.976 ຄອບຄົວ ເທົ່າກັບ 10% ຂອງຄອບຄົວທັງໝົດທົ່ວແຂວງ, ຄຸນນະພາບຂອງນໍ້າປະປາໄດ້ຮັບການປັບປຸງ ແລະ ມີຄວາມສະອາດຫລາຍຂຶ້ນ.

### 5). ດ້ານໄປສະນີ, ໂທລະມະນາຄົມ ແລະ ການສື່ສານ

ວຽກງານໄປສະນີ, ໂທລະມະນາຄົມ ແລະ ການສື່ສານກໍ່ແມ່ນວຽກງານໜຶ່ງທີ່ມີທ່າອ່ຽງຂະຫຍາຍຕົວດີພໍສົມຄວນ ໂດຍສາມາດປັບປຸງ, ສົ່ງເສີມ ແລະ ພັດທະນາພື້ນຖານໂຄງລ່າງດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ສະດວກວ່ອງໄວ ແລະ ເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນທ່ຽງ,ເຊິ່ງມັນໄດ້ກາຍເປັນຂະແໜງຫລັກໃນການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມເຂັ້ມແຂງ, ສ້າງແຂວງໃຫ້ກາຍເປັນຈຸດໃຈກາງໃນການເຊື່ອມໂຍງລະຫວ່າງເຂດແຄ້ວນ, ພາກພື້ນ ແລະ ສາກົນ.

⊕ **ການປະຕິບັດຄາດໝາຍ**

- ລົງຊຸກຍູ້ຕິດຕາມ ແລະ ເກັບກຳຂໍ້ມູນບັນດາຮ້ານທີ່ບໍລິການດ້ານໂທລະຄົມມະນາຄົມ ແລະ ການສື່ສານ ຄື: ລະບົບສາຍແກ້ວໃຍແສງລວມທັງໝົດ 1,326 ກິໂລແມັດ ກວມເອົາ 85% ຂອງເນື້ອທີ່ທົ່ວແຂວງ, ເສົາຮັບ-ສົ່ງສັນຍານໂທລະສັບ(BTS) ມີທັງໝົດ 225 BTS, ມີຜູ້ຊົມໃຊ້ໂທລະສັບມືຖື ແລະ ຕັ້ງໂຕະ 487.393 ເລກໝາຍ.
- ລົງຕິດຕາມກວດກາ, ເກັບກຳຂໍ້ມູນ ແລະ ຊຸກຍູ້ໃຫ້ບັນດາຫ້າງຮ້ານທີ່ໃຫ້ບໍລິການດ້ານໂທລະຄົມ ມາຂຶ້ນທະບຽນ. ມາຮອດປະຈຸບັນໄດ້ອອກໃບທະບຽນອະນຸຍາດຮ້ານຈຳໜ່າຍ ແລະ ສ້ອມແປງອຸປະກອນໂທລະຄົມມະນາຄົມ ຈຳນວນ 50 ຮ້ານ, ຮ້ານຈຳໜ່າຍ ແລະ ສ້ອມແປງອຸປະກອນໄອທີ 5 ຮ້ານ ແລະ ຮ້ານບໍລິການອິນເຕີເນັດ 7 ຮ້ານ.
- ລົງກວດກາ, ເກັບກຳຂໍ້ມູນ ແລະ ຊຸກຍູ້ໃຫ້ຂຶ້ນທະບຽນການນຳໃຊ້ຊັບພະຍາກອນໂທລະຄົມຄື: ໄດ້ອອກທະບຽນອະນຸຍາດນຳໃຊ້ຄື້ນຄວາມຖີ່ (ອຸປະກອນໂຟນີ) ຈຳນວນ 82 ເຄື່ອງ.
- ໄດ້ລົງຝຶກອົບຮົມວຽກງານໄອທີ ໃຫ້ພະນັກງານຂັ້ນແຂວງ ແລະ 5 ເມືອງ ແລະ 6 ບ້ານເປົ້າໝາຍສາມສ້າງ ມີນັກສຳມະນາກອນເຂົ້າຮ່ວມທັງໝົດ 259 ຄົນ, ໃນນີ້ເພດຍິງ 97 ຄົນ.

### 6). ການພັດທະນາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

#### (1). ວຽກງານທີ່ດິນ

- ໄດ້ສ້າງລະບຽບການຄຸ້ມຄອງ, ຕິດຕາມກວດກາແລະກົນໄກການແກ້ໄຂການຮ້ອງທຸກຈາກການນຳໃຊ້ທີ່ດິນທົ່ວແຂວງ.
- ໄດ້ດຳເນີນການກວດກາ ແລະ ປັບປຸງສຳມະໂນທີ່ດິນ ໃນຂອບເຂດທົ່ວແຂວງມີຈຳນວນ 5 ເມືອງ, ມີ 43.879 ຕອນ, ເນື້ອທີ່ 22.217 ເຮັກຕາ.
- ດຳເນີນການສຳຫຼວດພິສູດຫຼັກຖານ ແລະ ຂຶ້ນທະບຽນອອກໃບຕາດິນ ໃນຂອບເຂດ 5 ຕົວເມືອງມີຈຳນວນ 5.443 ຕອນ.
- ເກັບກຳຂໍ້ມູນ ແລະສ້າງລະບົບຖານຂໍ້ມູນການຄຸ້ມຄອງທີ່ດິນແບບຄົບຊຸດ ເພື່ອສະໜອງການເກັບລາຍຮັບມີຈຳນວນທັງໝົດ 5 ເມືອງມູນຄ່າ 1.563 ລ້ານກີບ; ໃນນັ້ນ, ເກັບດ້ວຍລະບົບຄອມພິວເຕີ 17 ບ້ານ ຢູ່ 2 ເມືອງ ຄື: ສາມັກຄີໄຊ ແລະ ໄຊເສດຖາ.
- ດຳເນີນການແກ້ໄຂຂໍ້ຂັດແຍ່ງແຕ່ລະປະເພດກ່ຽວກັບການນຳໃຊ້ທີ່ດິນຕ່າງໆ ຢູ່ 5 ຕົວເມືອງມີຈຳນວນ 92 ກໍລະນີ.
- ດຳເນີນຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນຈຸລະພາກ, ມະຫາພາກໃນຂອບເຂດທົ່ວແຂວງລວມມີ 5 ເມືອງ; ໃນນັ້ນ, ລວມມີ 68 ບ້ານ, ສ້າງແຜນທີ່ຂອບເຂດຮັບຮອງໃນການຈັດສັນແບ່ງເຂດໃນ 8 ປະເພດທີ່ດິນມີ (ດິນປຸກສ້າງ, ດິນກະສິກຳ, ດິນອຸດສາຫະກຳ, ດິນວັດທະນາທຳ, ດິນຄົມມະນາຄົມ, ດິນປ່າໄມ້, ດິນບໍລິເວນນ້ຳ ແລະ ດິນປກສ-ປກຊ)
- ດຳເນີນການຈັດສັນທີ່ດິນມະຫາພາກຂັ້ນເມືອງລວມມີ3 ເມືອງ ຄື: ສະໜາມໄຊ, ຊານໄຊ ແລະ ພູວົງ.

**(2). ວຽກງານຊັບພະຍາກອນນໍ້າ,ອຸຕຸນິຍົມ ແລະ ອຸທົກກະສາດ.**

- ສ້າງຈິດສໍານຶກລະບຽບການຄຸ້ມຄອງຊັບພະຍາກອນນໍ້າ, ຄຸ້ມຄອງອ່າງໂຕ່ງໃຫ້ແກ່ຂະແໜງການຕ່າງໆ ຂັ້ນເມືອງ ແລະ ຂັ້ນແຂວງ
- ສໍາເລັດການສໍາຫຼວດອ່າງຮັບນໍ້າເຊຊຸ ແລະ ຕິດຕາມຄຸນນະພາບນໍ້າພາຍໃນແຂວງ ທັງໝົດ 8 ຈຸດທຸກໆ 3 ເດືອນ.
- ປະຈຸບັນທົ່ວແຂວງມີສະຖານີອຸຕຸນິຍົມ-ອຸທົກກະສາດປະເພດIIຈໍານວນ 1 ແຫ່ງ ແລະ ມີສະຖານີວັດແທກລະດັບນໍ້າ 10 ແຫ່ງ ແລະ ສະຖານີວັດແທກປະລິມານນໍ້າຝົນ 8 ແຫ່ງ.

**(3). ວຽກງານທໍລະນີສາດ ແລະ ແຮ່ທາດ.**

- ຄຸ້ມຄອງໂຄງການຂຸດຄົ້ນ ແລະ ສໍາຫຼວດແຮ່ທາດ ທີ່ໄດ້ຮັບການອະນຸຍາດຈາກລັດຖະບານທັງໝົດ 09 ໂຄງການ.
- ດໍາເນີນການຜັນຂະຫຍາຍ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດການຕິດຕາມກວດກາປະເມີນຜົນລະບຽບການຄຸ້ມຄອງໃນການຂຸດຄົ້ນ ແລະ ສໍາຫຼວດແຮ່ທາດຢູ່ 4 ເມືອງຄື: ຊານໄຊ, ພູວົງ, ໄຊເສດຖາ ແລະ ສະໜາມໄຊ.
- ສໍາເລັດການຈັດຕັ້ງປະຕິບັດວຽກງານແຜນການແລະໂຄງການບູລິມະສິດລວມມີຈໍານວນ 1 ໂຄງການໃນ 3 ຕົວເມືອງຄື: ເມືອງພູວົງ, ສະໜາມໄຊ ແລະ ຊານໄຊ.
- ດໍາເນີນການຊຸ້ຍູ້, ສົ່ງເສີມ ແລະ ອໍານວຍຄວາມສະດວກ ແກ່ບັນດາໂຄງການທີ່ຈັດຕັ້ງປະຕິບັດວຽກງານຂຸດຄົ້ນ, ສໍາຫຼວດແຮ່ທາດພາຍໃນແຂວງເພື່ອເປັນຂໍ້ມູນພື້ນຖານໃນການຂຽນບົດວິພາກເສດຖະກິດເຕັກນິກ.
- ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກ ໃນການນໍາສົ່ງຕົວຢ່າງແຮ່ທາດໄປວິໃຈທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງໄດ້ອອກໃບຢັ້ງຢືນແຮ່ທາດເຈືອປົນແຮ່-ຊາຍ ຈໍານວນ 18 ໂຄງການ.

**(4). ວຽກງານຄຸ້ມຄອງຊັບພະຍາກອນປ່າໄມ້.**

- ດໍາເນີນການລົງໂຄສະນາເຜີຍແຜ່ແລະປູກຈິດສໍານຶກ, ສ້າງຂະບວນການໃຫ້ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາປ່າສະຫງວນ, ປ່າປ້ອງກັນ ແລະ ຈັດຕັ້ງໜ່ວຍອະນຸລັກປ່າໄມ້ຂັ້ນບ້ານ, ພ້ອມທັງສ້າງລະບຽບຄຸ້ມຄອງໃນເຂດປ່າສະຫງວນ ຈໍານວນ 21 ບ້ານໃນ 4 ຕົວເມືອງ, ປ່າປ້ອງກັນຈໍານວນ 30 ບ້ານໃນ 5 ຕົວເມືອງ.
- ສໍາເລັດການກໍານົດເຂດປ່າເຊື່ອມໂຊມ, ເອົາໃຈໃສ່ຟື້ນຟູບູລະນະປ່າສະຫງວນໃນເນື້ອທີ່ (9.000 ຮຕ) ແລະ ປ່າປ້ອງກັນ (17.125 ເຮັກຕາ).
- ປັດຈຸບັນແຂວງອັດຕະປືມີປ່າສະຫງວນແຫ່ງຊາດ 2 ແຫ່ງຄື: ດົງອໍາພາມມີເນື້ອທີ່ 174.936 ເຮັກຕາ, ເຊປຽນມີເນື້ອທີ່ 46.739 ເຮັກຕາ ແລະ ມີປ່າປ້ອງກັນແຫ່ງຊາດ 2 ແຫ່ງຄື: ນໍ້າອ່າງ-ຫ້ວຍວົມີເນື້ອທີ່ 58.057 ເຮັກຕາ, ນໍ້າກົງ-ເຊຊຸມີເນື້ອທີ່ 195.686 ເຮັກຕາ ແລະ ປ່າປ້ອງກັນຂອງແຂວງ 1 ແຫ່ງ ຄື: ພູພຽງບໍລິເວນມີເນື້ອທີ່ 77.273 ເຮັກຕາ.

**(5). ວຽກງານສິ່ງແວດລ້ອມ, ໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ**

- ດໍາເນີນວຽກງານການສ້າງຈິດສໍານຶກດ້ານສິ່ງແວດລ້ອມໃຫ້ແກ່ສັງຄົມໂດຍຜ່ານສື່ມວນຊົນ ແລະ ການສ້າງຂະບວນການໃນວັນສໍາຄັນຕ່າງໆ.
- ດໍາເນີນການເຜີຍແຜ່ບັນດານະໂຍບາຍ, ນິຕິກໍາ ແລະ ລະບຽບການຕ່າງໆ ສ້າງຄວາມອາດສາມາດກ່ຽວກັບ EMMP, IEE ແລະ ESIA ໃຫ້ບັນດາໂຄງການ ແລະ ກິດຈະການລົງທຶນ, ບັນດາເມືອງໃນທົ່ວແຂວງ.

- ດຳເນີນການອອກໃບຢັ້ງຢືນທາງດ້ານສິ່ງແວດລ້ອມໃຫ້ບັນດາໂຄງການທີ່ຢູ່ໃນຄວາມຮັບຜິດຊອບຂອງແຂວງ ແລະ ຕິດຕາມປະເມີນຜົນການປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມຂອງບັນດາໂຄງການລົງທຶນຕ່າງໆພາຍໃນແຂວງ.

- ດຳເນີນການສ້າງຕັ້ງຄະນະກຳມະການ ແລະ ໜ່ວຍງານຄຸ້ມຄອງສິ່ງແວດລ້ອມຂັ້ນແຂວງ, ເມືອງ ແລະ ບ້ານໃນການຕິດຕາມ, ຄວບຄຸມ ແລະ ການປະເມີນຜົນກະທົບຕໍ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ, ໂຄງການປູກໄມ້ອຸດສາຫະກຳ, ໂຄງການຂຸດຄົ້ນແຮ່ທາດ, ໂຮງງານອຸດສາຫະກຳ ແລະ ໂຄງການອື່ນໆທີ່ດຳເນີນກິດຈະການຢູ່ໃນແຂວງ.

- ສຳເລັດການສ້າງສະໜາມຂີ້ເຫຍື້ອ ແລະ ລະບຽບການຄຸ້ມຄອງຂີ້ເຫຍື້ອຢູ່ເມືອງໄຊເສດຖາ, ເມືອງສະໜາມໄຊ ແລະ ພວມຈັດຕັ້ງປະຕິບັດຢູ່ບ້ານໃຫ່ຍເຊກະໜານໂດຍທຶນຊ່ວຍເຫຼືອຈາກກອງທຶນປົກປັກຮັກສາສິ່ງແວດລ້ອມແຫ່ງຊາດ.

### 2.4.2. ການພັດທະນາຂົງເຂດວັດທະນະທຳ-ສັງຄົມ, ວິທະຍາສາດ ແລະ ເຕັກໂນໂລຊີ

#### 1). ການສຶກສາ ແລະ ກິລາກາຍຍະກຳ (ການພັດທະນາຊັບພະຍາກອນມະນຸດ)

ໃນໄລຍະ 5 ປີຜ່ານມາ ໄດ້ຖືເອົາວຽກງານສຶກສາ ແລະ ກິລາເຊື່ອມສານເຂົ້າກັນເປັນການພັດທະນາຊັບພະຍາກອນມະນຸດໄດ້ດຳເນີນການປະຕິຮູບການສຶກສາ ແລະ ກິລາ-ກາຍຍະກຳຢ່າງແຂງແຮງ, ກ້ວາງຂວາງ, ເລິກເຊິ່ງ, ເຖິງຖອງດ້ວຍຈິດໃຈບຸກທະລຸຂອງຂະແໜງການສຶກສາເຮັດໃຫ້ປະລິມານ ແລະ ຄຸນນະພາບຂອງການສຶກສາ ແລະກິລາຂະຫຍາຍຕົວກ້າວສູ່ຄຸນນະພາບໃໝ່ທີ່ດີຂຶ້ນຕາມມາດຕາຖານ ແລະ ສາມາດເຊື່ອມໂຍງກັບລະດັບການສຶກສາ-ກິລາຂອງພາກພື້ນ ແລະ ສາກົນ, ເພື່ອຕອບສະໜອງບຸກຄະລາກອນແຕ່ລະຂະແໜງວິຊາການໃນລະດັບຕ່າງໆ ໃຫ້ແກ່ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ໃນທົ່ວສັງຄົມ ໄດ້ພຽງພໍໂດຍພື້ນຖານ.

ພື້ນຖານທາງດ້ານການສຶກສາ-ກິລາ ໄດ້ຮັບການຂະຫຍາຍຕົວຢ່າງທົ່ວເຖິງ ແລະ ມີຈຸດສູມໃນທຸກລະດັບ ເຊັ່ນ: ສ້າງຕັ້ງໂຮງຮຽນພອນສະຫວັນ, ປັບປຸງບັນດາສະຖາບັນການສຶກສາທຸກລະດັບທັງພາກລັດ ແລະ ເອກະຊົນໄປຕາມຂອບມາດຕະຖານ. ຊຸກຍູ້ ແລະ ສົ່ງເສີມ ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການສຶກສາ-ກິລາຕາມເງື່ອນໄຂ, ພອນສະຫວັນ ແລະ ຄວາມສາມາດຂອງຜູ້ຮຽນ ໂດຍຖືເອົາເຂດຊົນນະບົດ, ຫ່າງໄກສອກຫລີກ ແລະ ບ້ານ 3 ສ້າງເປັນ ບຸລິມະສິດ. ສຳເລັດການປະຕິບັດບັນດາຄາດໝາຍຂອງແຜນງານແຫ່ງຊາດການສຶກສາເພື່ອທຸກຄົນ ກໍ່ຄືເປົ້າໝາຍສະຫັດສະຫວັດທາງດ້ານການພັດທະນາ ແລະ ຍົກລະດັບເຕັກນິກການແຂ່ງຂັນກິລາປະເພດຕ່າງໆພາຍໃນແຂວງ, ປະເທດ, ລະດັບພາກພື້ນ, ອະນຸພາກພື້ນ ແລະ ສາກົນ, ເຊິ່ງຜົນສຳເລັດຕົວຈິງໄດ້ສະແດງອອກບາງຕົວຊີ້ບອກ ດັ່ງນີ້:

ອັດຕາເຂົ້າຮຽນສຸດທິຂອງເດັກ 3-5 ປີຈາກ 17% ໃນປີ 2011 ມາເປັນ 35,1% ໃນປີ 2015 ເພີ່ມຂຶ້ນ 18,1% (ແຜນການ 39%); ອັດຕາເຂົ້າຮຽນສຸດທິຊັ້ນປະຖົມຈາກ 89,9% ມາເປັນ 98,1% ເພີ່ມຂຶ້ນ 8,2% (ແຜນການ 98%), ອັດຕາເຂົ້າຮຽນໃໝ່ສຸດທິ ປ1 (6 ປີ) ຈາກ 74,1% ມາເປັນ 98,4% ເພີ່ມຂຶ້ນ 24,3% (ແຜນການ 100%), ອັດຕາການຫລອດເຫລືອ ປ 5 ຈາກ 52,4% ມາເປັນ 65,5% ເພີ່ມຂຶ້ນ 13,1% (ແຜນການ 95%), ອັດຕາຄ້າງຫ້ອງຊັ້ນປະຖົມ ຈາກ 19,2% ມາເປັນ 10% ຫລຸດລົງ 9,2% (ແຜນການ 2%), ອັດຕາປະລະຊັ້ນປະຖົມ ຈາກ 12,3% ມາເປັນ 8,7% ຫລຸດລົງ 3,6% (ແຜນການ 2%);ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຈາກ 47,8% ມາເປັນ 64,2% ເພີ່ມຂຶ້ນ 1,6% (ແຜນການ 75%), ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນປາຍຈາກ 24% ມາເປັນ 35,7% ເພີ່ມຂຶ້ນ 11,7% (ແຜນການ 65%); ອັດຕາຮູ້ໜັງສືໃນກຸ່ມເປົ້າໝາຍອາຍຸ 15-24 ປີ ບັນລຸໄດ້ 98,2% (ແຜນການ 95%), ອັດຕາການຮູ້ໜັງສືຂອງປະຊາຊົນອາຍຸ 15 ປີ ຂຶ້ນໄປ ບັນລຸໄດ້ 90,9% (ແຜນ

ການ 89%); ດັດສະນີຄວາມສະເໝີພາບດ້ານການສຶກສາລະຫວ່າງຍິງ-ຊາຍຊັ້ນອະນຸບານ 1,06 ຊັ້ນປະຖົມ 0,91, ຊັ້ນມັດທະຍົມຕົ້ນ 0,89, ຊັ້ນມັດທະຍົມປາຍ 0,81, ອາຊີວະສຶກສາ 0,91 ແລະ ການສຶກສາຊັ້ນສູງ 0,69.

ດ້ານກິລາ-ກາຍະກຳ ກໍ່ໄດ້ມີການພັດທະນາດີຂຶ້ນເລື້ອຍໆ ໂດຍໄດ້ມີການຈັດຕັ້ງສະມາຄົມກິລາ-ກາຍະກຳ ແລະ ສະຫະພັນກິລາຫລາຍປະເພດ ເພື່ອເປັນສິ່ງກະຕຸກຊຸກຍູ້ກິລາແຕ່ລະປະເພດ ໄດ້ມີການເຄື່ອນໄຫວຝຶກຊ້ອມ ແລະ ເຂົ້າຮ່ວມແຂ່ງຂັນເປັນປົກກະຕິ. ຂະບວນກິລາຂອງມວນຊົນໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງລົງເຖິງທ້ອງຖິ່ນຮາກຖານ, ບັນດາໂຮງຮຽນໄດ້ມີການຮຽນ-ການສອນວິຊາກິລາ-ກາຍະກຳ, ການຮຽນ-ການສອນວິຊາປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງເປັນຂະບວນການ. ເຂົ້າຮ່ວມການແຂ່ງຂັນກິລາລະດັບຊາດ ແລະ ລະດັບຕ່າງໆ ເຊັ່ນ: ສຳເລັດການຈັດງານມະຫາກຳກິລາປະຈຳປີ ແລະ ນຳພານັກກິລາເຂົ້າຮ່ວມແຂ່ງຂັນກິລາພື້ນເມືອງທົ່ວປະເທດທີ່ແຂວງເຊກອງ; ສຳເລັດການນຳພາກິລາບານເຕະຂອງແຂວງເຂົ້າຮ່ວມການແຂ່ງຂັນໃນການແຂ່ງຂັນລາຍການຕ່າງໆເຊັ່ນ: ອຸ່ນເຄື່ອງກັບແຂວງຈຳ ປາສັກ, ແຂວງສະຫວັນນະເຂດເຂົ້າຮ່ວມແຂ່ງຂັນເຕະບານຊີງຂັນນາຍົກ, ເຂົ້າຮ່ວມແຂ່ງຂັນເຕະບານມິດຕະພາບລາວ-ຫວຽດນາມ ທີ່ແຂວງກອນຕູມ; ເຂົ້າຮ່ວມງານມະຫາກຳກິລາແຫ່ງຊາດ ຄັ້ງທີ IX ທີ່ແຂວງຫລວງພະບາງ, ຄັ້ງທີ X ທີ່ແຂວງໄຊຍະບູລີ, ງານມະຫາກຳກະລານັກຮຽນມັດທະຍົມທົ່ວປະເທດ ຄັ້ງທີ IV ແຂວງສະຫວັນນະເຂດ ແລະ ຄັ້ງທີ V ທີ່ແຂວງຈຳປາສັກ ແລະ ເຂົ້າຮ່ວມງານມະຫາກຳກິລາແຫ່ງຊາດ ຄັ້ງທີ X ທີ່ແຂວງອຸດົມໄຊ ໄດ້ຮັບຫລຽນທັງໝົດ 15 ຫລຽນຄື: 5 ຫລຽນຄຳ, 3 ຫລຽນເງິນ, 7 ຫລຽນທອງແດງ, ຈັດລະດັບແຂວງ ຢູ່ໃນອັນດັບທີ 13 ຈາກ 25 ພາກສ່ວນເຂົ້າຮ່ວມ; ເຂົ້າຮ່ວມງານກິລາຄົນພິການ ຄັ້ງທີ 2 ໄດ້ຮັບຂັນຊະນະເລີດ 1 ຂັນ, ຮັບຂັນຮອງຊະນະເລີດອັນດັບສອງ 1 ຂັນ, ຈັດຢູ່ໃນອັນດັບທີ 4 ຂອງ 18 ພາກສ່ວນເຂົ້າຮ່ວມ.

### 2). ສາທາລະນະສຸກ

ໄລຍະ 5 ປີຜ່ານມາ ການພັດທະນາວຽກງານສາທາລະນະສຸກໄດ້ປັບປຸງ ແລະ ຍົກລະດັບການບໍລິການ, ການປິ່ນປົວໄປຄຽງຄູ່ກັບການຍົກລະດັບຄວາມຮູ້ຄວາມສາມາດຂອງແພດໝໍໃນລະດັບຕ່າງໆເພີ່ມຂຶ້ນໃນແຕ່ລະປີ, ການຂະຫຍາຍຕະໜ່າງສາທາລະນະສຸກ ທົ່ວເຖິງເຂດຊົນນະບົດຫ່າງໄກສອກຫລີກໂດຍສາມາດກໍ່ສ້າງສຸກສາລາໄດ້ 11 ແຫ່ງ ລວມທັງໝົດມີ 31 ແຫ່ງ, ສຳເລັດການກໍ່ສ້າງໂຮງໝໍແຂວງຫລັງໃໝ່, ປັບປຸງໂຮງໝໍເມືອງ. ໄດ້ສຸມໃສ່ກັນພະຍາດ ແລະ ສົ່ງເສີມສຸຂະພາບເປັນຕົ້ນຕໍໂດຍຖືເອົາການປິ່ນປົວທີ່ມີຄຸນນະພາບ ແລະ ສາມາດສະໜອງການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງເປັນສຳຄັນ ແລະ ບັນລຸເປົ້າໝາຍສະຫັດສະວັດການພັດທະນາໃນຫລາຍດ້ານ. ການຈັດຕັ້ງປະຕິບັດວຽກງານສາທາລະນະສຸກສ່ວນໃຫຍ່ແມ່ນລົງສູ່ຮາກຖານຊຸມຊົນຢ່າງກວ້າງຂວາງເພື່ອສ້າງຊຸມຊົນມີຄວາມຕື່ນຕົວປະກອບສ່ວນ ແລະ ເຂົ້າມາຮັບການບໍລິການດ້ານສຸຂະພາບຫລາຍຂຶ້ນເຮັດໃຫ້ຊີວິດ ແລະ ສຸຂະພາບຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ໄດ້ຮັບການພັດທະນາດີຂຶ້ນເລື້ອຍໆ. ອັດຕາການເຈັບເປັນ, ອັດຕາການຕາຍຂອງແມ່ ແລະ ເດັກຫລຸດລົງເປັນກ້າວໆ ແລະ ອາຍຸສະເລ່ຍຍືນຂອງປະຊາກອນ 58 ປີ.

### ⊕ ການປະຕິບັດຄາດໝາຍ

ຮອດປີ 2015 ອາຍຸຍືນສະເລ່ຍຂອງປະຊາກອນໄດ້ 58 ປີ (ແຜນການ 61 ປີ), ສາມາດຂະຫຍາຍວຽກງານສຸຂະສຶກສາເຂົ້າເຖິງປະຊາຊົນທົ່ວໄປປົກຄຸມ 98% (ແຜນການ 98%), ສາມາດສ້າງບ້ານສາທາລະນະສຸກໄດ້ 68 ບ້ານ ກວມເອົາ 46,2% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ.

### (1). ດ້ານສຸຂະພາບຂອງແມ່ແລະເດັກ

ສາມາດຫລຸດອັດຕາການຕາຍຂອງແມ່ ຍັງເຫລືອ 126 ຕໍ່ເດັກເກີດມີຊີວິດ 100.000 ຄົນ, ຫລຸດອັດຕາການຕາຍຂອງເດັກນ້ອຍ <1 ປີ ຍັງເຫລືອ9ຕໍ່ເດັກເກີດມີຊີວິດ 1.000 ຄົນ, ຫລຸດອັດຕາການຕາຍຂອງເດັກນ້ອຍ <5 ປີ ຍັງ

ເຫລືອ 12 ຕໍ່ເດັກເກີດມີຊີວິດ 1.000 ຄົນ, ອັດຕາສັກຢາກັນໝາກແດງຂອງເດັກອາຍຸຕ່ຳກວ່າ1ປີ ບັນລຸໄດ້ 80%( ແຜນການ 100%), ຫລຸດອັດຕາສ່ວນເດັກນ້ອຍ ລຸ່ມ 1 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ບັນລຸໄດ້ 21,61%(8%), ອັດຕາການເກີດໂດຍມີແພດຊ່ວຍ ບັນລຸໄດ້ 27% (ແຜນການ 20%), ອັດຕາຄຸມກຳເນີດ ບັນລຸໄດ້ 68%.

### (2). ດ້ານນ້ຳສະອາດ ແລະ ສຸຂະອານາໄມ

ມາຮອດປະຈຸບັນອັດຕາສ່ວນປະຊາກອນຊົມໃຊ້ນ້ຳສະອາດໄດ້ 76,6% (ແຜນການ 80.1%) ຂອງຈຳນວນປະຊາກອນທັງໝົດ, ອັດຕາສ່ວນປະຊາກອນຊົມໃຊ້ວິດຖ່າຍໄດ້ 59,5% (ແຜນການ 60%) ຂອງຈຳນວນປະຊາກອນທັງໝົດ.

### (3). ສະກັດກັ້ນການແຜ່ລາມຂອງພະຍາດເອດ, ໄຂ້ຍຸງ ແລະ ພະຍາດຕິດຕໍ່ອື່ນໆ

ອັດຕາສ່ວນການຕິດເຊື້ອໄວລັດ HIV ໃນປະຊາກອນທົ່ວ ປະຕິບັດໄດ້ຕ່ຳກວ່າ 0,05 ສ່ວນຮ້ອຍ, ອັດຕາສ່ວນການຕິດເຊື້ອໄວລັດ HIV ໃນກຸ່ມສາວບໍລິການທາງເພດ ອາຍຸ 15-49 ປີ ປະຕິບັດໄດ້ຕ່ຳກວ່າ 2%, ອັດຕາການຕາຍຍ້ອນໄຂ້ຍຸງຫລຸດລົງ 0,69 ຕໍ່ປະຊາກອນ 100.000 ຄົນ (ແຜນການ 0.2 ຕໍ່ປະຊາກອນ 100.000 ຄົນ), ອັດຕາສ່ວນເດັກນ້ອຍນອນໃນມຸ້ງໄດ້ 100%(ແຜນການ 98.76%) ຂອງເດັກນ້ອຍເປົ້າໝາຍ, ອັດຕາການເປັນວັນນະໂລກຫລຸດລົງ 35/10.000 ຄົນ (24 ຕໍ່ປະຊາກອນ 10.000 ຄົນ), ອັດຕາຄົນເປັນວັນນະໂລກທີ່ກວດພົບ 51,5% (ແຜນການ 30%) ແລະ ໄດ້ຮັບການປິ່ນປົວໂດຍມີແພດຕິດຕາມໂດຍກົງ (DOTS) 92% (ແຜນການ100%).

### 3). ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ

### (1). ການພັດທະນາສີມືແຮງງານ

ກຳລັງລົງມືກໍ່ສ້າງສູນພັດທະນາສີມືແຮງງານຂອງແຂວງ, ໄດ້ຈັດຝຶກອົບຮົມວິຊາຊີບໃນສາຂາວິຊາຊີບຕ່າງໆເພື່ອສ້າງຄວາມສາມາດ ແລະ ມາດຖານສີມືແຮງງານໃຫ້ຊາວໜຸ່ມພາຍໃນແຂວງໄດ້ 7 ເທື່ອຄັ້ງ, ມີຜູ້ເຂົ້າຮ່ວມຈຳນວນ 190 ຄົນ, ຍິງ 41 ຄົນ; ປະສານສົມທົບກັບຜູ້ໃຊ້ແຮງງານ ແລະ ໂຄງການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດຝຶກສີມືແຮງງານໃຫ້ກຳມະກອນ ແລະ ຜູ້ອອກແຮງງານທີ່ເປັນຄົນລາວຫລາຍຂຶ້ນເປັນກ້າວໆ; ສັງລວມ 5 ປີທົ່ວແຂວງມີຜູ້ທີ່ໄດ້ຮັບການຝຶກອົບຮົມທັງໝົດ 3.241 ຄົນ, ຍິງ 1.102 ຄົນ.

ສ້າງຄວາມອາດສາມາດ, ສຶກສາອົບຮົມປູກຈິດສຳນຶກໃຫ້ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານເຫັນໄດ້ຄວາມສຳຄັນຂອງການເຮັດສັນຍາແຮງງານ, ເຜີຍແຜ່ກົດໝາຍແຮງງານ, ກວດກາ ແລະ ຄຸ້ມຄອງແຮງງານທັງພາຍໃນ ແລະ ຕ່າງປະເທດ.ສຳເລັດການເກັບກຳສະຖິຕິແຮງງານທີ່ເຮັດວຽກພາຍໃນແຂວງຢູ່ຕາມລັດວິສາຫະກິດ, ອີງການຈັດຕັ້ງສາກົນ, ໂຮງຈັກໂຮງງານ ແລະ ອື່ນໆ; ເກັບກຳສະຖິຕິແຮງງານລາວໄປອອກແຮງງານຢູ່ຕ່າງປະເທດ, ຂຶ້ນທະບຽນຄວາມຕ້ອງການຝຶກວິຊາຊີບຕ່າງໆ, ສຳເລັດການຂຶ້ນທະບຽນແຮງງານຫວ່າງງານ, ຈັດສົ່ງແຮງງງານພາຍໃນແຂວງໄປເຮັດວຽກຢູ່ຕ່າງປະເທດ (ໄທ) ຈຳນວນ 46 ຄົນ ແລະ ພາຍໃນປະເທດ 35 ຄົນ.

### (2). ການພັດທະນາດ້ານສະຫວັດດີການ-ສັງຄົມ

ໄດ້ເກັບກຳຂໍ້ມູນພະນັກງານທີ່ມີຄຸນງາມຄວາມດີຕໍ່ການປະຕິວັດແຕ່ປີ 1954 ຄືນຫລັງ, ຄົ້ນຄວ້າປະຕິບັດນະໂຍບາຍຕໍ່ພະນັກງານທີ່ມີເງື່ອນໄຂຕາມດຳລັດ 343 ແລະ ປະຕິບັດນະໂຍບາຍຕໍ່ພະນັກງານລັດຖະກອນ ແລະ ບຳນານທີ່ມີຄວາມຈຳເປັນຕາມດຳລັດ 194. ຈັດສັນທີ່ດິນປຸກສ້າງ ແລະ ເນື້ອທີ່ທຳການຜະລິດໃຫ້ພະນັກງານເສຍອົງຄະສູນ 392, ເບິ່ງແຍງຜູ້ສູງອາຍຸ ແລະ ຜູ້ປ່ຽວພອຍດ້ອຍໂອກາດ; ເຜີຍແຜ່ດຳລັດ 70/ນຍ, ຂໍ້ຕົກລົງ ແລະ ຄຳສັ່ງແນະນຳກ່ຽວກັບການ

ປະກັນສັງຄົມ; ການປະຕິບັດປະກັນສັງຄົມເປັນຕົ້ນ: ເງິນບໍານານ, ເສຍອົງຄະ, ອຸດໜູນເສຍຊີວິດ, ເກີດລູກ ແລະ ປິ່ນປົວສຸຂະພາບ.

**(3). ແຜນງານສັງຄົມສົງເຄາະ ແລະ ຄຸ້ມຄອງໄພພິບັດ**

ໄດ້ເອົາໃຈໃສ່ເຜີຍແຜ່ຂໍ້ຕົກລົງ, ຄໍາແນະນໍາ ແລະ ຄວາມຮູ້ກ່ຽວກັບການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຈາກໄພພິບັດ; ປຸກລະດົມທຶນເພື່ອສ້າງເປັນກອງທຶນຊ່ວຍເຫລືອອຸປະຕິໄພ, ເດັກກໍາພ້າ-ກໍາພອຍ, ຜູ້ດ້ອຍໂອກາດ, ຜູ້ເຄາະຮ້າຍຈາກໄພພິບັດ ແລະ ການຄ້າມະນຸດ; ສ້າງກິດຈະກໍາອາຫານເພື່ອງານໃນບ້ານເປົ້າໝາຍແນໃສ່ແກ້ຄວາມອຶດຢາກ ແລະ ລຶບລ້າງຄວາມທຸກຍາກເທື່ອລະກ້າວ, ພ້ອມທັງຈັດສົ່ງເດັກກໍາພ້າເຂົ້າບ້ານເດັກ SOS.

### 4). ຖະແຫລ່ງຂ່າວ-ວັດທະນະທໍາ ແລະ ທ່ອງທ່ຽວ

**(1). ດ້ານຖະແຫລ່ງຂ່າວ ແລະ ວັດທະນະທໍາ**

ສາມາດໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ, ສາລະຄວາມຮູ້, ຄວາມບັນເທີງຜ່ານລາຍການໃຫ້ມີລັກສະນະຫຼາຍຮູບຫຼາຍສີໄດ້ທັງປະລິມານ ແລະ ຄູນນະພາບ ໂດຍໄດ້ບໍາລຸງກໍ່ສ້າງພະນັກງານບັນນາທິການຂ່າວ, ພະນັກງານວິຊາການເຕັກນັກຢ່າງພຽງພໍ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານການ; ຍົກລະດັບຄວາມແຮງສົ່ງຂອງວິທະຍຸກະຈາຍສຽງ FM ແລະ ໂທລະພາບ ຈາກ 2 ກິໂລວັດ ມາເປັນ 3 ກິໂລວັດ ແລະ ຂະຫຍາຍສະຖານີວິທະຍຸເຄືອຂ່າຍທີ່ເມືອງສະໜາມໄຊ ຄວາມແຮງ 1.000 ວັດ, ສາຖານີວິທະຍຸກອງທັບ 1 ແຫ່ງ, ຕິດຕັ້ງລະບົບໂທລະໂຄ່ງໃສ່ບັນດາບ້ານໃຈກາງກຸ່ມບ້ານຈຸດສຸມຕ່າງໆເຮັດໃຫ້ຄື້ນວິທະຍຸສາມາດປົກຄຸມພື້ນທີ່ທົ່ວແຂວງ ປະມານ 90%, ອອກອາກາດ 15 ຊົ່ວໂມງ/ວັນ.

ວັດທະນະທໍາຂອງຊາດ ແລະ ຂອງເຜົ່າ ໄດ້ຮັບການອະນຸລັກຮັກສາ ແລະ ໄດ້ມີການສົ່ງເສີມດ້ວຍການຈັດຕັ້ງງານເທດສະການ, ງານວາງສະແດງ, ງານປະກວດ, ກິດຈະການຕ່າງໆລະດັບແຂວງ ແລະ ລະດັບຮາກຖານບ້ານ; ຫໍສະມຸດ, ຫໍພິພິດຕະພັນ ແລະ ສູນວັດທະວັດທະນະທໍາເດັກຂອງແຂວງສາມາດເປີດບໍລິການຮັບໃຊ້ສັງຄົມເປັນປົກກະຕິ. ສິ່ງທີ່ພົ້ນເດັ່ນ: ແມ່ນການສະແດງສິລະປະ, ວັດທະນະທໍາ ເນື່ອງໃນງານໂອກາດກອງປະຊຸມກໍາປູເຈຍ-ລາວ-ຫວຽດນາມ (CLV) ທີ່ແຂວງອັດຕະປືເປັນເຈົ້າພາບໃນປີ 2011, ການເຄື່ອນໄຫວແລກປ່ຽນການສະແດງສະເຫລີມໃນວັນເຊັນສົນທິສັນຍາ ແລະ ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ປີ 2012 ກໍ່ຄືໂອກາດວັນສໍາຄັນຕ່າງໆ ຂອງແຂວງ ແລະ ຂອງຊາດ; ສາມາດສ້າງຄອບຄົວວັດທະນະທໍາໄດ້ທັງໝົດ 17.148 ຄອບຄົວ, ສ້າງບ້ານວັດທະນະທໍາໄດ້ 61 ບ້ານ.

**(2). ດ້ານການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ**

ໄດ້ຮັບການຈັດຕັ້ງປະຕິບັດໄປພ້ອມໆກັບວຽກງານອື່ນຂອງແຂວງ ເປັນຕົ້ນ: ການກໍ່ສ້າງພື້ນຖານໂຄງລ່າງຂອງແຂວງ, ພັດທະນາຕົວເມືອງສາມັກຄີໄຊ ເພື່ອບໍລິການຮັບຮອງໃຫ້ແກ່ການທ່ອງທ່ຽວ ມີມາດຖານຂຶ້ນເທື່ອລະກ້າວ, ໄດ້ຮັບຮອງການກໍ່ສ້າງໂຄງການພັດທະນາໃຫ້ກາຍເປັນແຫລ່ງທ່ອງທ່ຽວທາງປະຫວັດສາດ, ວັດທະນະທໍາ ແລະ ທໍາມະຊາດຈໍານວນໜຶ່ງ. ໄປພ້ອມໆກັບການຈັດກິດຈະກໍາທີ່ຕິດພັນກັບງານປະຫວັດສາດ ແລະ ປະເພນີຂອງທ້ອງຖິ່ນ, ໄດ້ປັບປຸງການເຄື່ອນໄຫວຂອງຜູ້ປະກອບການທຸລະກິດການທ່ອງທ່ຽວດ້ວຍການຂົນຂວາຍ, ສົ່ງເສີມໃຫ້ພາກເອກະຊົນລົງທຶນໃສ່ຂົງເຂດທ່ອງທ່ຽວຫລາຍຂຶ້ນ.

**⊕ ຜົນສໍາເລັດໃນການປະຕິບັດຄາດໝາຍຕົ້ນຕໍ**

- ສາມາດດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວແຂວງອັດຕະປືໃນ 5 ປີຜ່ານມາໄດ້ເຖິງ 543.812 ຄົນ (ແຜນການ 172.896 ຄົນ), ກະຈາຍລາຍໄດ້ໃຫ້ແກ່ແຂວງທັງໝົດ 7.113.419 ໂດລາສະຫາລັດ, ເພີ່ມຂຶ້ນສະເລ່ຍ 26,06%/ປີ (10%/ປີ).

- ມາຮອດປະຈຸບັນທົ່ວແຂວງມີໂຮງແຮມ ແລະ ຣີສອດ 11 ແຫ່ງ (ແຜນການ 16 ແຫ່ງ), ເຮືອນພັກ 38 ແຫ່ງ (29 ແຫ່ງ), ມີຫ້ອງພັກທັງໝົດ 761 ຫ້ອງ, ຈຳນວນຮ້ານອາຫານ ແລະ ຮ້ານບັນເທີງໄດ້ 116 ແຫ່ງ (92 ແຫ່ງ) ແລະ ບໍລິສັດນຳທ່ຽວໃຫ້ໄດ້ 2 ບໍລິສັດ (ແຜນການ 3 ບໍລິສັດ).

- ສາມາດຂຸດຄົ້ນ ແລະ ພັດທະນາຂະຫຍາຍແຫລ່ງທ່ອງທ່ຽວທາງດ້ານທຳມະຊາດໄດ້ 1 ແຫ່ງ (4 ແຫ່ງ), ວັດທະນາທຳ 2 ແຫ່ງ (2 ແຫ່ງ) ແລະ ປະຫວັດສາດ ໃຫ້ໄດ້ 1 ແຫ່ງ (1 ແຫ່ງ).

- ສຳເລັດການຂຶ້ນບັນຊີແຫລ່ງທ່ອງທ່ຽວທັງໝົດ 52 ແຫ່ງ, ໃນນີ້: ແຫລ່ງທ່ອງທ່ຽວທຳມະຊາດ 30 ແຫ່ງ, ປະຫວັດສາດ 10 ແຫ່ງ ແລະ ວັດທະນະທຳ 12 ແຫ່ງ.

- ສຳເລັດການປັບປຸງ ແລະ ກໍ່ສ້າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວໃນຂອບເຂດສະຖານທີ່ທ່ອງທ່ຽວທີ່ສຳຄັນຕ່າງໆ ເປັນຕົ້ນ: ຫາດພະໄຊເສດຖາທິລາດ, ວັດສະແຄະ, ຈຸດຊົມວິວພູປະອໍ; ນ້ຳຕົກຕາດຫົວຄົນ-ຕາດແຝກ, ສວນອະນຸລັກດົງຫໍ, ສ່ວນສາທາລະນະເຫດສະບານແຂວງ.

### 5). ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ການປົກປ້ອງເດັກ

ໄດ້ປະຕິບັດແຜນຍຸດທະສາດແຫ່ງຊາດ ເພື່ອຄວາມກ້າວໜ້າແມ່ຍິງ ແລະ ແຜນຍຸດທະສາດເພື່ອແມ່ ແລະ ເດັກແຫ່ງຊາດ 5 ປີຄັ້ງທີ II (2011-2015) ປັບປຸງການຈັດຕັ້ງຂອງກອງເລຂາຄະນະກຳມະທິການເພື່ອຄວາມກ້າວໜ້າແມ່ຍິງ, ສ້າງຄອບຄົວສະເໝີພາບຍິງ-ຊາຍ ປາສະຈາກການໃຊ້ຄວາມຮຸນແຮງຕໍ່ເດັກໄດ້ 6,281 ຄອບຄົວ ແລະ ບ້ານສະເໝີພາບໄດ້ 24 ບ້ານ.

ໄດ້ສຶກສາອົບຮົມການເມືອງແນວຄິດຕິດແໜ້ນກັບການປັບປຸງການຈັດຕັ້ງກໍ່ສ້າງພະນັກງານ, ການສ້າງຂະບວນການ 3 ດີ ແລະ ການຈັດຕັ້ງປະຕິບັດໂຄງການແມ່ຍິງ; ເຕົ້າໂຮມຄວາມສາມັກຄີພາຍໃນສະມາຊິກສະຫະພັນແມ່ຍິງ, ແມ່ຍິງບັນດາເຜົ່າ ບັນດາຊັ້ນຄົນໃຫ້ກວ້າງຂວາງ, ເປັນເຈົ້າການໃນການປະຕິບັດສິດສະເໝີພາບລະຫວ່າງ ຍິງ-ຊາຍ ໃຫ້ກາຍເປັນຮູບປະທຳ.ສຳເລັດປັບປຸງການຈັດຕັ້ງສະຫະພັນແມ່ຍິງໃນແຕ່ລະຂັ້ນໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງແນວຄິດການຈັດຕັ້ງ, ເພີ່ມທະວີບົດບາດ ແລະ ຄວາມສາມາດໃນການນຳພາຂອງຄະນະສະຫະພັນແມ່ຍິງໃນແຕ່ລະຂັ້ນ, ຂະຫຍາຍສະມາຊິກສະຫະພັນແມ່ຍິງໃຫ້ນັບມື້ນັບຫຼາຍຂຶ້ນ. ປະຈຸບັນມີສາມາຊິກສະຫະພັນແມ່ຍິງທັງໝົດ 19.104 ຄົນ, ຂະຫຍາຍໃໝ່ 2.765 ຄົນ.

ສຳເລັດການຝຶກອົບຮົບວິຊາຊີບ, ວິຊາການ ແລະ ພັດທະນາສີມືແຮງງານໃຫ້ແມ່ຍິງສ້າງເງື່ອນໄຂຊ່ວຍໃຫ້ແມ່ຍິງບັນດາເຜົ່າ, ບັນດາຊັ້ນຄົນໄດ້ຍົກລະດັບຄວາມຮູ້ຄວາມສາມາດໃນທຸກດ້ານ, ສົ່ງເສີມການຊອກແຫລ່ງລາຍຮັບໃຫ້ແກ່ແມ່ຍິງ ແລະ ຄອບຄົວ, ຈັດຕັ້ງກຸ່ມການຜະລິດ, ສະໜອງທຶນໝູນວຽນ, ສິນເຊື່ອຂະໜາດນ້ອຍ, ຝາກປະຢັດ ແລະ ອື່ນໆ. ເປັນເຈົ້າການໃນການຈັດຕັ້ງປະຕິບັດໂຄງການພັດທະນາແມ່ຍິງໃຫ້ມີປະສິດທິຜົນພ້ອມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ.

### 6). ການພັດທະນາເຍົາວະຊົນ ແລະ ຊາວໜຸ່ມ

ໄດ້ເພີ່ມທະວີການສຶກສາການເມືອງ-ແນວຄິດ, ຄຸນສົມບັດສິນທຳປະຕິວັດ, ແນວທາງນະໂຍບາຍ, ຂໍ້ກຳນົດກົດໝາຍຕ່າງໆຂອງລັດ,ມູນເຊື້ອປະຫວັດສາດຂອງຊາດ, ຂອງພັກ, ຂອງນັກຮົບປະຕິວັດ. ພັດທະນາຊາວໜຸ່ມ-ໄວໜຸ່ມ-ເຍົາວະຊົນ ໂດຍວິທີຫລາຍຮູບຫລາຍສີ ເຮັດໃຫ້ເຂົາເຈົ້າມີຄວາມຈະເລີນກ້າວເປັນຜູ້ໃຫຍ່ ເປັນກຳລັງສືບທອດທີ່ດີຂອງ

ພັກ-ລັດ, ສົ່ງເສີມຄວາມອາດສາມາດທາງດ້ານວິຊາການຕ່າງໆໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ ກາຍເປັນຄົນທີ່ມີຄວາມຮູ້; ຄວາມສາມາດ, ສົມທໍາປະຕິບັດ ເພື່ອກຽມພ້ອມໃຫ້ແກ່ການຮັບໃຊ້ປະເທດຊາດກໍ່ຄືກຽມພ້ອມຮັບໃຊ້ໃຫ້ແກ່ການພັດທະນາແຂວງອັດຕະປືຂອງພວກເຮົາໃຫ້ມີຄວາມກ້າວໜ້າຂຶ້ນເລື້ອຍໆ.

### 7). ການພັດທະນາດ້ານວິທະຍາສາດ ແລະ ເຕັກໂນໂລຊີ

ໄດ້ເອົາໃຈໃສ່ໃນການເຜີຍແຜ່ກົນໝາຍມາດຕະຖານ ແລະ ກົດໝາຍວັດແທກສຸມ, ເຄື່ອນໄຫວຜ່ານຮ່າງກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ຮ່າງກົດໝາຍວ່າດ້ວຍຄວາມປອດໄພ ດ້ານເຕັກໂນໂລຊີຊີວະພາບໃຫ້ບັນດາຂະແໜງການ ແລະ ເມືອງ, ລົງກວດກາສົມທຽບ ແລະ ຂຶ້ນທະບຽນເຄື່ອງວັດແທກ, ສົ່ງເສີມການຄົ້ນຄວ້າ ແລະ ພັດທະນາວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ແລະ ປັບປຸງລະບົບຂໍ້ມູນຂ່າວສານໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການທາງດ້ານເສດຖະກິດ ແລະ ສັງຄົມ, ສ້າງອຸດສະຫາກໍາໃໝ່ທັນສະໄໝ ແລະ ພັດທະນາຢ່າງວ່ອງໄວ.

⊕ **ຜົນສໍາເລັດໃນການປະຕິບັດຄາດໝາຍ**

- ສໍາເລັດການເຂົ້າຮ່ວມ ແລະ ຈັດຝຶກອົບຮົມໃນຫົວຂໍ້ຕ່າງໆເປັນຕົ້ນ: ຝຶກອົບຮົມກ່ຽວກັບວຽກງານໄອທີ, ວຽກງານວິທະຍາສາດ, ຝຶກອົບຮົມການສ້າງເວັບໄຊ ແລະ ອື່ນໆ.
- ສໍາເລັດການທົດລອງນໍາໃຊ້ພະລັງງານຈາກຊີວະພາບ (ຈາກມູນສັດ) ທີ່ເຮັດດ້ວຍຖັງປະລາດສະຕິກຂະໜາດ 200 ລິດ.
- ສ້າງສວນທົດລອງເພາະຊໍາ ເບ້ຍໄມ້ປະດັບ ແລະ ເບ້ຍໄມ້ໃກ້ຈະສູນພັນໄດ້ທັງໝົດ 30 ຊະນິດ.
- ລົງກວດທຽບ ແລະ ຂຶ້ນທະບຽນອຸປະກອນວັດແທກໄດ້ທັງໝົດ 560 ໜ່ວຍ.
- ສົມທົບກັບກົມມາດຕະຖານຂຶ້ນທະບຽນເຄື່ອງໝາຍການຄ້າ ແລະ ຂໍນໍາໃຊ້ກາໝາຍມາດຕະຖານຜະລິດຕະພັນສິນຄ້າໃຫ້ໂຮງງານນໍ້າຕານຮ່ວາງແອັງ.

## 2.5. ວຽກງານການຕ່າງປະເທດ ແລະ ການເຊື່ອມໂຍງກັບສາກົນ

ຕະຫລອດໄລຍະ 5 ປີຜ່ານມາວຽກງານການຕ່າງປະເທດ ແລະ ການເຊື່ອມໂຍງກັບສາກົນ ໄດ້ກາຍເປັນວຽກງານໜຶ່ງທີ່ມີຜົນສໍາເລັດຫລາຍດ້ານໂດຍສະເພາະແມ່ນການພົວພັນ ແລະ ຮ່ວມມືກັບບັນດາແຂວງປະເທດໃກ້ຄຽງທີ່ມີຊາຍແດນຕິດຈອດກັນ, ຂອບການຮ່ວມມືລາວ-ຫວຽດນາມ-ກໍາປູເຈຍ (CLV). ສໍາເລັດການດໍາເນີນກອງປະຊຸມປະຈໍາປີຂອງຄະນະປະສານງານພັດທະນາເຂດສາມລ່ຽມພັດທະນາ CLV ໃນທ້າຍປີ 2011 ແລະ ເຂົ້າຮ່ວມກອງປະຊຸມທີ່ຈັດຂຶ້ນCLV ທີ່ຈັດຂຶ້ນຢູ່ ສສ ຫວຽດນາມ ແລະ ກໍາປູເຈຍ. ຄຽງຄູ່ກັນນັ້ນ, ກໍ່ໄດ້ເພີ່ມທະວີການຮ່ວມມືຮອບດ້ານກັບບັນດາແຂວງພາກກາງ-ພາກໃຕ້ ແລະ ຫົວໜ່ວຍທຸລະກິດທີ່ສໍາຄັນຂອງ ສສ ຫວຽດນາມ; ສິ່ງທີ່ພົ້ນເດັ່ນກວ່າໝູ່ແມ່ນການຮ່ວມມືດ້ານວຽກງານຊາຍແດນລາວ-ຫວຽດນາມ, ການຊອກຄົ້ນອັດຖິທະຫານອາສາສະໝັກຫວຽດນາມ, ການຊ່ວຍເຫລືອດ້ານຊັບພະຍາກອນມະນຸດ ແລະ ຂົງເຂດສັງຄົມ ເຊັ່ນ: ຊ່ວຍກໍ່ສ້າງພະນັກງານ, ກໍ່ສ້າງໂຮງຮຽນ, ກໍ່ສ້າງໂຮງຫຼັງໃໝ່ຂອງແຂວງ, ບູລະນະວັດທາດ ແລະ ດ້ານອື່ນໆ.

ນອກຈາກນັ້ນ, ຍັງໄດ້ເປີດກວ້າງການພົວພັນຮ່ວມມືທາງດ້ານການຄ້າ, ການລົງທຶນ, ການທ່ອງທ່ຽວ, ການເຊື່ອມຈອດເສັ້ນທາງຄົມມະນາຄົມ ກັບບັນດາແຂວງພາກອີສານຕອນລຸ່ມຂອງປະເທດໄທ.

ສໍາລັບການຮ່ວມມື, ການລະດົມທຶນຈາກບັນດາອົງການຈັດຕັ້ງສາກົນຕ່າງໆ, ການລະດົມທຶນຈາກສະຖາບັນການເງິນ, ສະຖານທູດ, ມູນລະນິທິ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGOs) ກໍ່ເຫັນວ່າມີທ່ວງທ່າຂະຫຍາຍຕົວ

ສູງ ເຊິ່ງສາມາດລະດົມໄດ້ທັງທຶນຮອນ, ເຕັກນິກທີ່ທັນສະໄໝ ເຂົ້າມາຊ່ວຍໃນການພັດທະນາເສດຖະກິດ, ວັດທະນາທຳ-ສັງຄົມ, ການພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ, ການພັດທະນາພື້ນຖານໂຄງລ່າງຕ່າງໆເປັນຕົ້ນ: ໂຄງການອີຟັດ ( ແຜນງານປຊຊ ), ທະນາຄານພັດທະນາອາຊີ ( ຜະລິດກະສິກຳເປັນສິນຄ້າ ), ທະນາຄານໂລກ, ກອງທຶນສັດປ່າໂລກ, ໂຄງການພັດທະນາຊົນນະບົດ ແລະ ປ່າໄມ້ແບບຍືນຍົງ, ໂຄງການກໍ່ສ້າງຂົວເຊກະໝານ 2 (ກອງທຶນອາຊຽນ-ຍີ່ປຸ່ນ), ອົງການສຸຂະພາບແພດບໍ່ມີເຂດແດນ; ອົງການຮ່ວມມືລາວ-ເຢຍລະມັນ (ໂຄງການກໍ່ສ້າງທາງຊົນນະບົດໄລຍະ 1,2,3,4), ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ, ອົງການແຄ, ສະຖານກົງສູນໄທ, ສະຖານທູດອາເມລິກາ, ທຶນອົງການດີອີດີ, ອົງການໄຈກາ, ອົງການອາຫານໂລກ, ໂຄງການຜະລິດກະສິກຳເປັນສິນຄ້າ (ADB-IFAD).

## 2.6. ການຄຸ້ມຄອງບໍລິຫານລັດ

### 2.6.1. ການພັດທະນາອົງການບໍລິຫານແຫ່ງລັດ

ໄດ້ມີຄວາມພະຍາຍາມຢ່າງສູງໃນການແບ່ງຄວາມຮັບຜິດຊອບ ແລະ ການປະສານງານລະຫວ່າງແຂວງກັບບັນດາເມືອງ, ຂະແໜງສາຍຕັ້ງໃຫ້ມີກົນໄກປະສານງານຢ່າງກົມກຽວ, ມີຄວາມສະດວກໄວ ແລະ ທັນໄປຕາມທິດ 3 ສ້າງແກ້ໄຂບັນຫາຂໍ້ຂັດແຍ່ງໃນໂຄງການສຳປະທານຕ່າງໆ, ຍ້ອງຍໍຊົມເຊີຍຕໍ່ຜູ້ທີ່ມີຜົນງານດີ, ປະຕິບັດວິໄນໃສ່ໂທດຕໍ່ຜູ້ກະທຳຜິດທີ່ຂາດຄວາມຮັບຜິດຊອບຕໍ່ຫນ້າທີ່ວຽກງານ, ຜູ້ທີ່ສໍ້ລາດບັງຫຼວງເຊິ່ງພາໃຫ້ເຊື່ອມເສຍບົດບາດ, ກຽດສັກສີແລະອິດທິພົນພັກ-ລັດ, ໄດ້ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ໄປຕາມລະບຽບກົດໝາຍເທື່ອລະກ້າວ ແລະ ເອົາໃຈໃສ່ແກ້ໄຂໜີ້ສິນຕ່າງໆ. ດ້ານການຈັດຕັ້ງໄດ້ຊຸກຍູ້ນຳພາໃຫ້ສຳເລັດການປັບປຸງສັບຊ້ອນພະນັກງານ ແລະກົງຈັກການຈັດຕັ້ງຂັ້ນຕ່າງໆໃນທົ່ວແຂວງ, ດຳເນີນການສອບເສັງເອົາລັດຖະກອນໃໝ່ເປັນຄັ້ງທີ 1 ແລະ ທີ 2 ສຳເລັດຕາມແຜນການ, ປັບປຸງອົງການບໍລິຫານຂັ້ນເມືອງຕາມທິດ 3 ສ້າງແລະປັບປຸງອົງການຈັດຕັ້ງຂັ້ນບ້ານ; ປະກາດສ້າງຕັ້ງສູນສະຖິຕິຂັ້ນແຂວງ ແລະ ດຳເນີນການສຳຫລວດຂໍ້ມູນທີ່ສຳຄັນຕົ້ນຕໍຈຳນວນໜຶ່ງ ເຊັ່ນ: ສຳຫລວດສະຖິຕິກະສິກຳ, ສຳຫຼວດເສດຖະກິດ, ເກັບກຳລາຄາປະຈຳເດືອນ ແລະ ອື່ນໆ ເພື່ອເປັນບ່ອນອີງໃນການຄຸ້ມຄອງເສດຖະກິດຂອງແຂວງ, ສຳເລັດການສຳຫລວດພົນລະເມືອງ ຄັ້ງທີ IV ປີ 2015.

### 2.6.2. ອົງການນິຕິບັນຍັດ

ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດການເປັນເສນາທິການໃຫ້ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ແລະ ເຮັດພາລະບົດບາດເປັນຕົວແທນຂອງສະພາແຫ່ງຊາດ ໃນການຕົກລົງບັນຫາສຳຄັນຕ່າງໆຂອງທ້ອງຖິ່ນ ໂດຍຜ່ານກອງປະຊຸມຄົບຄະນະໃນແຕ່ລະປີ, ເອົາໃຈໃສ່ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ ແລະ ອົງການຕຸລາການ ຂັ້ນທ້ອງຖິ່ນໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນ ແລະ ລົງພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ, ພ້ອມທັງເກັບກຳຂໍ້ມູນ, ຮັບຟັງຄຳຄິດຄຳເຫັນ ແລະ ສະພາບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ, ເຜີຍແຜ່ກົດໝາຍໃຫ້ແກ່ພົນລະເມືອງ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງຕິດຕາມກວດກາບັນຫາທີ່ພົ້ນເດັ່ນຕາມຫາງສຽງຂອງສັງຄົມ ເປັນຕົ້ນ ການຄຸ້ມຄອງບໍລິຫານລັດ, ຜົນກະທົບດ້ານສິ່ງແວດລ້ອມຈາກໂຄງການລົງທຶນຕ່າງໆ. ນອກນີ້ກໍ່ໄດ້ເອົາໃຈໃສ່ແກ້ໄຂຄຳຮ້ອງຂໍຄວາມເປັນທຳຢ່າງວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ.

### 2.6.3. ພັດທະນາວຽກງານຕຸລາການ

#### 1). ວຽກງານໄອຍະການປະຊາຊົນ

ໄດ້ສຸມໃສ່ເຮັດພາລະບົດບາດຕິດຕາມກວດການເຄົາລົບ ແລະ ການຈັດຕັ້ງປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວແຂວງ ແລະ ທັງສັ່ງຟ້ອງຜູ້ຖືກຫາຂຶ້ນສານ ເຊິ່ງມັນສະແດງອອກຄື: ໄດ້ຮັບສຳນວນຄະດີອາຍາທັງໝົດ 625 ເລື່ອງ, ແກ້ໄຂແລ້ວ 620 ເລື່ອງ ເທົ່າກັບ 99,2% ໃນນີ້ໄດ້ເຮັດປະເດັນສັ່ງໃຫ້ເຈົ້າໜ້າທີ່ສອບສວນຄືນ 146 ເລື່ອງ ເທົ່າກັບ 23,36%, ໄດ້ສັ່ງຟ້ອງຂຶ້ນສານ 423 ເລື່ອງ ເທົ່າກັບ 67,68%, ໂຈະ ແລະ ຊັດມ້ຽນ 51 ເລື່ອງ ເທົ່າກັບ 8,16%, ໄດ້ສະເໜີຄັດຄ້ານຄຳຕັດສິນຂອງສານ 4 ເລື່ອງເທົ່າກັບ 0,94% ຂອງຄະດີທີ່ໄດ້ສັ່ງຟ້ອງຂຶ້ນສານທັງໝົດ, ຍັງຄ້າງກຳລັງສືບຕໍ່ດຳເນີນ 05 ເລື່ອງ ເທົ່າກັບ 0,8% ຂອງຄະດີທັງໝົດ. ສ່ວນຄະດີແພ່ງແມ່ນໄດ້ຮັບຄຳສະເໜີເຂົ້າຮ່ວມຖະແຫຼງໃນທີ່ປະຊຸມສານທັງໝົດ 57 ເລື່ອງ ກໍ່ໄດ້ເຂົ້າຮ່ວມຖະແຫຼງ 57 ເລື່ອງ ເທົ່າກັບ 100%.

**2). ວຽກງານສານປະຊາຊົນ**

ໄດ້ເອົາໃຈໃສ່ປັບປຸງການຈັດຕັ້ງ ແລະ ສັບຊ້ອນບຸກຄະລະກອນເຂົ້າໃສ່ຕຳແໜ່ງງານຕ່າງໆ ໃຫ້ສອດຄ່ອງກັບຄວາມຮູ້ຄວາມສາມາດ, ປັບປຸງທາງດ້ານແບບແຜນວິທີເຮັດວຽກຢ່າງຕໍ່ເນື່ອງ ເຮັດໃຫ້ຄະດີທີ່ຍັງຄ້າງນັບມື້ນັບຫຼຸດໜ້ອຍຖອຍລົງ ຊຶ່ງມັນສາມາດສະແດງອອກ ຄື: ໄດ້ມີຄະດີຄ້າງມາ ແລະ ເຂົ້າໃໝ່ທັງໝົດໃນທົ່ວແຂວງ 427 ເລື່ອງ, ແກ້ໄຂແລ້ວທັງໝົດ 403 ເລື່ອງ ເທົ່າກັບ 94,37% ຂອງຄະດີທີ່ໄດ້ຮັບທັງໝົດ, ໃນນັ້ນ: ຄູ່ຄວາມໄດ້ຂໍອຸທອນ ຫຼື ຂໍລົບລ້າງທັງໝົດ 21 ເລື່ອງ ເທົ່າກັບ 5,21% ຂອງຄະດີທີ່ຖືກແກ້ໄຂທັງໝົດ ແລະ ໄອຍະການປະຊາຊົນໄດ້ສະເໜີຄັດຄ້ານຄຳຕັດສິນ 4 ເລື່ອງ ເທົ່າກັບ 0,99% ຂອງຄະດີທີ່ຖືກແກ້ໄຂທັງໝົດ, ຍັງຄ້າງກຳລັງດຳເນີນໃນປະຈຸບັນ 24 ເລື່ອງ ເທົ່າກັບ 5,62% ຂອງຄະດີທີ່ໄດ້ຮັບທັງໝົດ.

**2.6.4. ວຽກງານຍຸຕິທຳ**

ໄດ້ຈັດຕັ້ງຝຶກອົບຮົມກົດໝາຍໄລຍະສັ້ນໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ 4 ຊຸດ, ມີຜູ້ເຂົ້າຮຽນ210 ຄົນ, ເປີດການຮຽນກົດໝາຍຊັ້ນຕົ້ນໃຫ້ແກ່ຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນບັນດາເຜົ່າໃນ 5 ເມືອງ ໄດ້ 4 ຊຸດ, ມີ 27 ຈຸດຮຽນ, ມີຜູ້ຮຽນຈົບ ແລະໄດ້ຮັບໃບປະກາດ 1,130 ຄົນ ທຽບໃສ່ຊຸມປີຜ່ານມາ ເພີ່ມຂຶ້ນ 100%, ໂຄສະນາກົດໝາຍຕາມບ້ານຕ່າງໆໄດ້ 530 ຄັ້ງ, ມີຜູ້ເຂົ້າຮັບຟັງ 71,350 ເທື່ອຄົນ, ຍິງ 44.801 ເທື່ອຄົນ, ຕາມໂຮງຮຽນໄດ້ 140 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງ 17.506 ເທື່ອຄົນ, ຍິງ 9.350 ເທື່ອຄົນ, ໄດ້ແຈກຢາຍປຶ້ມກົດໝາຍໃນ 4 ຊີງເຂດຄົບ 146 ບ້ານ.ປະກອບຕູ້ກົດໝາຍພ້ອມປຶ້ມກົດໝາຍ ແລະ ນິຕິກຳກ່ຽວກັບກົດໝາຍໃຫ້ແກ່ 10 ບ້ານ, ໂຄສະນາທາງວິທະຍຸ FM ຂອງແຂວງ ໄດ້ 240 ຄັ້ງ ແລະ ທາງໂທລະໂຄ່ງຂອງເມືອງຕົ່ມອີກ; ໄດ້ສ້າງຄອບຄົວປອດຄະດີ 31.991 ເທື່ອຄອບຄົວ, ສ້າງບ້ານປອດຄະດີໄດ້ 139 ເທື່ອບ້ານ, ສ້າງຕັ້ງ ແລະ ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ 147 ບ້ານ, ຈັດຕັ້ງການຝຶກອົບຮົມໃຫ້ຄະນະໜ່ວຍໄກ່ເກ່ຍໄດ້ 204 ຄັ້ງ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ຮັບຂໍ້ຂັດແຍ່ງທັງໝົດ 833 ຂໍ້ຂັດແຍ່ງ, ໄດ້ແກ້ໄຂໄກ່ເກ່ຍສຳເລັດ 731 ຂໍ້ຂັດແຍ່ງ ເທົ່າກັບ 87,75%, ສົ່ງໃຫ້ພາກສ່ວນອື່ນແກ້ໄຂ 33 ຂໍ້ຂັດແຍ່ງ ເທົ່າກັບ 3,96%, ຍັງຄ້າງ 69 ຂໍ້ຂັດແຍ່ງ ເທົ່າກັບ 8,28% ຂອງຂໍ້ຂັດແຍ່ງທັງໝົດ; ໄດ້ມີຄຳຕັດສິນທີ່ໃຊ້ໄດ້ຢ່າເດັດຂາດຄ້າງມາ ແລະ ເຂົ້າໃໝ່ທັງໝົດ 771 ເລື່ອງ, ໄດ້ຈັດຕັ້ງປະຕິບັດສຳເລັດ 405 ເລື່ອງ ເທົ່າກັບ 52,52%, ສົ່ງໃຫ້ແຂວງອື່ນປະຕິບັດ 35 ເລື່ອງ ເທົ່າກັບ 4,53%, ຍັງຄ້າງກຳປະຕິບັດ 331 ເລື່ອງ ເທົ່າກັບ 42,93% ຂອງຄຳຕັດສິນທັງໝົດ; ໄດ້ຢັ້ງຢືນຄວາມຖືກຕ້ອງຂອງສັນຍາປະເພດຕ່າງໆໄດ້ທັງຫມົດ 3.972 ສະບັບ.

### 2.7. ການປະສານສົມທົບແຜນພັດທະນາເສດຖະກິດ-ສັງຄົມກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ໃນໄລຍະ 5 ປີຜ່ານມາ ໄດ້ເພີ່ມທະວີ ແລະ ກໍ່ສ້າງກຳລັງວຽກງານປ້ອງກັນຊາດ-ປ້ອງກັນມີຄວາມເຂັ້ມແຂງໜັກແໜ້ນທາງດ້ານການເມືອງ, ສາມາດຮັບປະກັນຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ; ຮັບປະກັນຄວາມເປັນເອກະລາດ, ເອກະພາບ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ແລະ ຄວາມປອດໄພຂອງປະເທດຊາດເວົ້າລວມເວົ້າສະເພາະພາຍໃນແຂວງ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ພາລະກິດສ້າງສາພັດທະນາເສດຖະກິດ-ສັງຄົມຂອງແຂວງຢ່າງຮອບດ້ານ ແລະ ຕໍ່ເນື່ອງ. ສຳເລັດກຳນົດທິດ ແລະ ວິທີການຕົ້ນຕໍຈຳນວນໜຶ່ງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເປີດກວ້າງການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ຮັບປະກັນສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດ.

### 2.8. ສັງລວມຜົນສຳເລັດທີ່ພົ້ນເດັ່ນ ແລະ ສາຍເຫດທີ່ພາໃຫ້ບັນລຸຜົນ

**⊕ ຜົນສຳເລັດທີ່ພົ້ນເດັ່ນ:**

ສັງລວມແລ້ວ, ໃນໄລຍະ 5 ປີຜ່ານມາ ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບ ແລະ ປອດໄພ, ການເມືອງມີສະຖຽນລະພາບຢ່າງໜັກແໜ້ນ ເຮັດໃຫ້ການພັດທະນາແຂວງອັດຕະປື ບັນລຸຜົນອັນສຳຄັນຢ່າງຍິ່ງໃຫຍ່ ແມ່ນຍ້ອນຄວາມພະຍາຍາມໃນການຜັນຂະຫຍາຍແລະຈັດຕັ້ງປະຕິບັດມະຕິ IX ຂອງພັກ, ມະຕິ IXຂອງອົງຄະນະພັກແຂວງອັດຕະປືວາງອອກກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງ VII ຂອງແຂວງດ້ວຍຄວາມຮັບຜິດຊອບສູງຂອງຄະນະພັກ-ອຳນາດການປົກຄອງແຕ່ລະຂັ້ນ, ຄວາມຮັບຜິດຊອບຂອງຂະແໜງການ, ບັນດາເມືອງ, ຄວາມເປັນເຈົ້າການຂອງວິຊາການ ແລະ ການປະກອບສ່ວນຂອງປະຊາຊົນບັນດາເຜົ່າຢ່າງຕັ້ງໜ້າ. ເຮັດໃຫ້ແຂວງອັດຕະປືຂອງພວກເຮົາໄດ້ປ່ຽນໂສມໜ້າໃໝ່ຢ່າງຈະແຈ້ງ ແລະ ພວມກ້າວເຂົ້າສູ່ທ່ວງທ່າໃໝ່ຕາມວິໄສທັດທີ່ໄດ້ກຳນົດໄວ້, ເຊິ່ງສາຍເຫດທີ່ເຮັດໃຫ້ໄດ້ຮັບຜົນສຳເລັດທີ່ໃຫຍ່ຫລວງກໍ່ແມ່ນຍ້ອນບັນດາສາຍເຫດຕົ້ນຕໍ ດັ່ງນີ້:

**⊕ ສາຍເຫດທີ່ພາໃຫ້ມີຜົນສຳເລັດ:**

- ຍ້ອນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງຖືກຕ້ອງ, ສອດຄ່ອງກັບມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ມະຕິເລກທີ 03 ຂອງກົມການເມືອງກ່ຽວກັບວຽກ 3 ສ້າງ, ເຊິ່ງມັນໄດ້ກາຍເປັນບ່ອນອີງໃຫ້ພວກເຮົາ ເພື່ອຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.
- ຍ້ອນຄະນະພັກ, ອົງການປົກຄອງແຕ່ລະຂັ້ນໄດ້ເພີ່ມທະວີການຊີ້ນຳ-ນຳພາ, ຕິດຕາມຍຸກຍູ້ເສີມຂະຫຍາຍຫົວຄິດປະດິດສ້າງ, ກ້າຄິດ, ກ້າທຳ ແລະ ກ້າຮັບຜິດຊອບຕໍ່ໜ້າທີ່ການເມືອງຕົນເພື່ອຜົນປະໂຫຍດລວມ, ສາມາດຫັນເອົາແນວທາງ ແລະ ມະຕິຂອງພັກ-ນະໂຍບາຍຂອງລັດມາຜັນຂະຫຍາຍໂດຍຫັນເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ສອດຄ່ອງກັບທ່າແຮງ ແລະ ມູນເຊື້ອຂອງທ້ອງຖິ່ນ, ຊອກໄດ້ທາງອອກໃນການສ້າງສາພັດທະນາ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນຢ່າງເປັນເຈົ້າການ.
- ຍ້ອນກາລະໂອກາດທີ່ເອື້ອອຳນວຍທັງພາຍໃນ, ພາກພື້ນ ແລະ ສາກົນໂດຍສະເພາະແມ່ນຄວາມເປັນຫ່ວງເປັນໄຍຂອງສູນກາງພັກ ແລະ ລັດຖະບານບວກກັບຄວາມຕັດສິນໃຈທີ່ເປັນເອກະພາບຂອງຄະນະບໍລິຫານງານພັກແຂວງໄດ້ມີການລົງທຶນ ແລະ ພັດທະນາຢ່າງຫລວງຫລາຍ ແລະ ວ່ອງໄວໂດຍສະເພາະພື້ນຖານໂຄງລ່າ ງແລະອຸດສາຫະກຳທີ່ເປັນຫົວຈັກໃນການຂັບເຂື່ອນເສດຖະກິດ.

- ຍ້ອນມີເພື່ອນມິດຍຸດທະສາດ, ອົງການຈັດຕັ້ງສາກົນ, ທະນາຄານ ແລະ ສະຖາບັນການເງິນຕ່າງໆ ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອດ້ານແຫຼ່ງທຶນຢ່າງຕໍ່ເນື່ອງ ແລະ ມີທ່າອ່ຽງເພີ່ມຂຶ້ນເລື້ອຍໆໃນແຕ່ລະປີ.

- ຍ້ອນປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ, ນັກທຸລະກິດ, ນັກລົງທຶນທັງພາຍໃນແລະຕ່າງປະເທດໄດ້ມີສ່ວນຮ່ວມຢ່າງຫລວງຫລາຍ ໃນການສຸມສະຕິປັນຍາ,ສຸມທຶນຮອນ, ເຕັກນິກວິທະຍາສາດ ເຂົ້າຮ່ວມການຈັດຕັ້ງປະຕິບັດແຜນງານ, ໂຄງການ ແລະ ກິດຈະການຕ່າງໆ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

- ສະຖຽນລະພາບທາງດ້ານການເມືອງຂອງແຂວງພວກເຮົາມີຄວາມໜັກແໜ້ນ ແລະ ເຂັ້ມແຂງ, ສັງຄົມມີຄວາມສະຫງົບປອດໄພ, ຍ້ອນພວກເຮົາໄດ້ປະຕິບັດແນວທາງ ແລະ ມູນເຊື້ອປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຢ່າງຮອບດ້ານແຕ່ຮາກຖານຂຶ້ນມາ, ເປັນເຈົ້າການສົມທົບແກ້ໄຂສະພາບຕ່າງໆຕາມບໍລິເວນຊາຍແດນ, ເຊິ່ງມັນໄດ້ສ້າງກາລະໂອກາດ ແລະ ສະພາບທີ່ເອື້ອອຳນວຍໃຫ້ແກ່ການຍາດແຍ່ງສະໜັບສະໜູນ, ການຮ່ວມມືເພື່ອສ້າງສາພັດທະນາຈາກປະເທດເພື່ອນມິດ, ສາກົນ, ໂດຍສະເພາະຈາກບັນດາແຂວງ ແລະ ພາກທຸລະກິດຂອງສສຫວຽດນາມກໍ່ຄືອົງການຈັດຕັ້ງສາກົນອື່ນໆ.

### ⊕ ບັນດາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ:

- ເຖິງວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ ຫລື GDP ຢູ່ໃນລະດັບສູງ, ສະເລ່ຍລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນໃນປີ 2015 ບັນລຸໄດ້ 1.770 ໂດລາສະຫາລັດ, ແຕ່ໃນຕົວຈິງແລ້ວຜົນປະໂຫຍດດັ່ງກ່າວແມ່ນຍັງບໍ່ທັນໄດ້ກະຈາຍໄປເຖິງປະຊາຊົນຜູ້ທຸກຍາກໄດ້ຢ່າງທົ່ວເຖິງ. ພ້ອມດຽວກັນນັ້ນ, ເສດຖະກິດມະຫາພາກດ້ານອື່ນໆຍັງບໍ່ທັນຄ່ອງຕົວ ແລະ ໜັກແໜ້ນ, ການເຕີບໂຕແມ່ນຍັງຢູ່ບົນພື້ນຖານການລົງທຶນກວມອັດຕາສ່ວນສູງ; ການຂຸດຄົ້ນຊັບພະຍາກອນທຳມະຊາດ ແລະ ການສົ່ງອອກຊັບພະກອນສ່ວນໃຫຍ່ເປັນວັດຖຸດິບ; ການເກັບລາຍຮັບເຂົ້າງົບປະມານຍັງບໍ່ທັນສາມາດກຸ້ມລາຍຈ່າຍ ຍັງອາໃສການດຸ່ນດ່ຽງຈາກສູນກາງເກືອບເຄິ່ງໜຶ່ງຂອງລາຍຈ່າຍທັງໝົດໃນແຕ່ລະປີ; ການສົ່ງອອກສິນຄ້າລວມທັງການສົ່ງອອກກັບທີ່ຍັງມີໜ້ອຍ; ການຄຸ້ມຄອງນຳໃຊ້ພື້ນຖານໂຄງລ່າງຍັງບໍ່ທັນສົມຄູ່ກັບມູນຄ່າທີ່ລົງທຶນທີ່ສູງຢູ່ແລ້ວນັ້ນ, ເປ່ເພໄວ ແລະ ການນຳໃຊ້ບໍ່ຕໍ່ເນື່ອງ, ບໍ່ໄດ້ບຳລຸງຮັກສາຢ່າງເປັນປົກກະຕິ.

- ການຄຸ້ມຄອງການນຳເຂົ້າສິນຄ້າ, ລາຄາສິນຄ້າໝວດສະບຽງອາຫານ ແລະ ສິນຄ້າບໍລິໂພກຍັງບໍ່ທັນເຮັດໄດ້ດີ, ການຜະລິດເປັນສິນຄ້າດ້ານຫັດຖະກຳແມ່ນຍັງມີຂໍ້ຈຳກັດຫຼາຍ, ການສະໜອງປັດໄຈສົ່ງເສີມການຜະລິດຍັງບໍ່ທັນແຂງແຮງ; ຄວາມສາມາດແຂ່ງຂັນຂອງຜູ້ຜະລິດພາຍໃນຍັງຕ່ຳ, ຂະໜາດການຜະລິດຍັງນ້ອຍ, ການຊອກຫາຕະຫຼາດຍັງບໍ່ທັນເຮັດໄດ້ດີ. ເວົ້າລວມແລ້ວ, ການຫັນເອົາການຜະລິດກະສິກຳຕິດພັນກັບອຸດສາຫະກຳປຸງແຕ່ງແມ່ນເຮັດໄດ້ໃນລະດັບໜຶ່ງແຕ່ຍັງບໍ່ທັນເປັນຂະບວນຢ່າງກວ້າງເທົ່າທີ່ຄວນ.

- ການຜະລິດສະບຽງອາຫານ, ການຜະລິດກະສິກຳເປັນສິນຄ້າໂດຍປະຊາຊົນເອງໂດຍສະເພາະການຜະລິດເຂົ້າກິນຖືວ່າຍັງບໍ່ທັນຮັບປະກັນເທົ່າທີ່ຄວນສາຍເຫດຍ້ອນປະຊາຊົນສ່ວນໃຫຍ່ບໍ່ເຮັດນາແຊງ, ເນື່ອງຈາກຕົ້ນທຶນໃນການຜະລິດສູງ, ແຕ່ຜົນຕອບແທນຕ່ຳ ເມື່ອທຽບໃສ່ນາປີ ຍັງຂຶ້ນກັບລະດູການ ແລະ ຜົນກະທົບຈາກໄພທຳມະຊາດໃນບາງປີອັນໄດ້ເຮັດໃຫ້ຈັງຫວະເພີ່ມຂຶ້ນຂອງຍອດຜະລິດຕະພັນກະສິກຳຍັງມີລັກສະນະການຂະຫຍາຍຕົວບໍ່ຕໍ່ເນື່ອງ. ເປົ້າໝາຍສະຫັດສະວັດດ້ານການພັດທະນາທີ່ສຳຄັນຈຳນວນໜຶ່ງອາດບໍ່ບັນລຸໄດ້ ເຊັ່ນ: ອັດຕາການເຂົ້າຮຽນສຸດທິ, ອັດຕາການລອດເຫລືອຊັ້ນປະຖົມ, ອັດຕາຄວາມສະເໝີພາບຍິງ-ຊາຍໃນໂຮງຮຽນ, ອັດຕາການຕາຍຂອງແມ່ແລະອື່ນໆ. ອັດຕາຄອບຄົວທຸກຍາກຍັງເປັນສິ່ງທ້າທາຍຍັງມີອັດຕາສູງເຖິງ 10,85% (ຄາດໝາຍປີ 2015 ຕ່ຳກວ່າ 10%).

- ການຄຸ້ມຄອງກວດກາ, ຕິດຕາມ ແລະ ປະເມີນຜົນໂຄງການລົງທຶນຂອງລັດ, ໂຄງການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ການປະຕິບັດສັນຍາກໍ່ສ້າງໂຄງການ, ການປະສານງານ ແລະ ສະໜອງຂໍ້ມູນເພື່ອສະຫຼຸບລາຍງານຍັງພົບຄວາມຫຍຸ້ງຍາກ.

- ວຽກປັບປຸງກໍ່ສ້າງພັກບໍ່ທັນໜັກແໜ້ນ, ໜ່ວຍພັກຈຳນວນໜຶ່ງຮ່ວມຊີວິດບໍ່ປົກກະຕິ, ບໍ່ໄດ້ຕີລາຄາຈັດແບ່ງປະເພດສະມາຊິກພັກ; ໜ່ວຍພັກແຂງ-ຮູ້ນຳພາຮອບດ້ານກວມພຽງ 23% ຂອງໜ່ວຍພັກທັງໝົດ ແລະ ຍັງມີສະມາຊິກພັກອ່ອນ, ເສຍທາດ, ບໍ່ໄດ້ຮັບການຈັດປະເພດກວມເຖິງ 11% ຂອງສະມາຊິກພັກທັງໝົດເຫັນວ່າເປັນບັນຫາທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂຢ່າງຮີບດ່ວນ.

- ຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ໃນຖັນແຖວສະມາຊິກພັກ, ພະນັກງານ, ລັດຖະກອນຈຳນວນຫລາຍຍັງບໍ່ທັນໜັກແໜ້ນ-ເຖິງຖອງເປັນຕົ້ນການປະຕິບັດນະໂຍບາຍ 3 ສ້າງຫລາຍດ້ານຍັງເຂົ້າໃຈບໍ່ຄືກັນ. ການຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຕ່າງໆຫລາຍອັນຍັງຊັກຊ້າແກ່ຍາວສະແດງອອກໃນການລົງກໍ່ສ້າງຮາກຖານບໍ່ຕໍ່ເນື່ອງ ແລະ ບໍ່ເປັນຂະບວນການເທົ່າທີ່ຄວນ.

- ແນວຄິດຮັກສາຄອງເດີມຍັງບໍ່ທັນບຸກທະລຸໄດ້ ເຊິ່ງສະແດງອອກໃນກົນໄກການເຮັດວຽກຍັງຊັກຊ້າ, ການສະເໜີການຄົ້ນຄ້ວາພິຈາລະນາຫລືການອະນຸມັດຍັງມີຫລາຍອັນ, ຫລາຍໂຄງການຍັງບໍ່ໄປຕາມກົນໄກ ແລະ ລະບຽບກົດໝາຍຍັງອາໄສການຊີ້ນຳ ແລະ ການຕັດສິນຂອງສ່ວນບຸກຄົນ, ການສະຫລຸບຕີລາຄາລະບົບລາຍງານຍັງເຮັດບໍ່ໄດ້ດີ.

- ສະພາບປະກົດການຫຍໍ້ທໍ້ຂອງພະນັກງານ ໃນສັງຄົມຍັງເກີດມີຢູ່ ແລະ ບາງດ້ານກໍ່ມີທ່າອ່ຽງທີ່ຈະເພີ່ມຂຶ້ນເຊັ່ນ: ການຂີ້ລັກ-ງັດແງະ; ການລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດຕາມບໍລິເວນຊາຍແດນຍັງເກີດຂຶ້ນຢ່າງຕໍ່ເນື່ອງ; ບັນຫາຂໍ້ຂັດແຍ່ງທາງດ້ານທີ່ດິນ, ບັນຫາສິ່ງແວດລ້ອມໃນເຂດສຳປະທານຂອງນັກລົງທຶນເອກະຊົນຍັງແກ້ໄຂບໍ່ທັນໄດ້; ບັນຫາໄພພິບັດທາງທຳມະຊາດທີ່ເກີດຂຶ້ນຢ່າຕໍ່ເນື່ອງ ເຊິ່ງເປັນບັນຫາທ້າທາຍໃຫຍ່ ແລະ ມີຄວາມສ່ຽງທີ່ຈະຕ້ອງໄດ້ມີຍຸດທະສາດເພື່ອຮອງຮັບໃນໄລຍະຍາວ.

- ການປະສານງານ, ການແບ່ງຂັ້ນຄຸ້ມຄອງລະຫວ່າງຂະແໜງການຂັ້ນແຂວງ ແລະ ຂັ້ນເມືອງຍັງບໍ່ທັນຄ່ອງຕົວ ແລະ ບາງດ້ານຍັງບໍ່ຈະແຈ້ງ, ຍັງມີການຖິ້ມຄວາມຮັບຜິດຊອບເຊິ່ງກັນ ແລະ ກັນເຮັດໃຫ້ການຄຸ້ມຄອງ, ການພັດທະນາເສດຖະກິດ-ສັງຄົມບໍ່ທັນເຕັມປະສິດທິພາບເທົ່າທີ່ຄວນ.

- ຄວາມຮັບຮູ້ຕໍ່ການເຊື່ອມໂຍງສາກົນເປັນຕົ້ນ: ການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ (AEC) ແມ່ນມີຄວາມເຂົ້າໃຈໃນລະດັບໃດໜຶ່ງ, ແຕ່ການກະກຽມຄວາມພ້ອມເຫັນວ່າຍັງບໍ່ທັນເໜັງຕີງຢ່າງກວ້າງຂວາງເທື່ອ.

### ⊕ ສາເຫດພາໃຫ້ມີຈຸດອ່ອນ ແລະ ຂໍ້ຄົງຄ້າງ

- ຍ້ອນການເຊື່ອມຊຶມມະຕິຄຳສັ່ງຂອງພັກ, ແຜນນະໂຍບາຍຂອງລັດ ຂອງພະນັກງານ-ສະມາຊິກພັກ ແລະ ການນຳບາງພະແນກການຍັງບໍ່ທັນລະອຽດ ແລະ ເລິກເຊິ່ງເທົ່າທີ່ຄວນ.

- ຍ້ອນການຜັນຂະຫຍາຍແນວທາງຂອງພັກ, ມະຕິ, ຄຳສັ່ງຂອງລັດມາເປັນແຜນງານ, ແຜນການ ແລະ ໂຄງການທີ່ຈະຕ້ອງເຮັດຍັງບໍ່ທັນເປັນລະບົບ, ບໍ່ຕໍ່ເນື່ອງ, ຫຼາຍພາກສ່ວນເຮັດວຽກບໍ່ມີແຜນການ, ບາງຄັ້ງມີແຜນການແຕ່ພັດບໍ່ຕິດຕາມກວດກາ ແລະ ບໍ່ມີລະບົບລາຍງານ, ບໍ່ທັນເອົາໃຈໃສ່ໃນການຖອດຖອນບົດຮຽນ.

- ຍັງບໍ່ທັນເຂົ້າໃຈການຄຸ້ມຄອງຂອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ມີລັກສະນະລະເລີງລະບຽບກົດໝາຍ, ປ່ອຍປະໃຫ້ກົນໄກຕະຫຼາດເຄື່ອນໄຫວດ້ວຍຕົວມັນເອງ, ຂາດການຄົ້ນຄ້ວາດັດສົມຂອງລັດບໍ່ມີໃຜເປັນເຈົ້າການຖິ້ມຄວາມຮັບຜິດຊອບໃຫ້ກັນ; ການປະສານສົມທົບລະຫວ່າງສາຍຕັ້ງສາຍຂວາງຍັງເຮັດບໍ່ທັນດີ.

- ເຖິງວ່າມີການແບ່ງຂັ້ນຄຸ້ມຄອງ, ແບ່ງຮັບຜິດຊອບລະຫວ່າງແຂວງ ກັບເມືອງ, ເມືອງກັບບ້ານ ໃນວຽກງານເຮັດທົດລອງ 3 ສ້າງ, ແຕ່ການລົງຊຸກຍູ້ ແລະຕິດຕາມກວດກາຍັງເຮັດໄດ້ໜ້ອຍ, ການຖອດຖອນບົດຮຽນວຽກ 3 ສ້າງ ຍັງມີລັກສະນະລວມໆ.

- ສະພາບສິ່ງແວດລ້ອມມີການປ່ຽນແປງຫລາຍ ມັນໄດ້ສົ່ງຜົນສະທ້ອນຕໍ່ເສດຖະກິດ, ຊີວິດການເປັນຢູ່ຂອງປະຊາຊົນກໍ່ຄືການປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມຂອງພວກເຮົາ.

## ພາກທີ II
## ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

## I. ສະພາບແວດລ້ອມທີ່ອຳນວຍ ແລະ ສິ່ງທ້າທາຍ

### 1.1. ສະພາບແວດລ້ອມທີ່ອຳນວຍ

#### (1). ສະພາບພາກພື້ນ ແລະ ສາກົນ

ການເຊື່ອມໂຍງເສດຖະກິດ ແລະ ການຮ່ວມມືຂອງໂລກແລະພາກພື້ນໄດ້ມີການເພີ່ມຂຶ້ນ ແລະ ຂະຫຍາຍກວ້າງອອກດ້ວຍຫຼາຍຮູບແບບຫຼາຍລະດັບ ແລະ ມີການແຂ່ງຂັນສູງຂຶ້ນ, ມີຫລາຍປະເທດໄດ້ກາຍເປັນສະມາຊິກຂອງອົງການສາກົນຕ່າງໆເປັນຕົ້ນ: ອົງການການຄ້າໂລກ (WTO), ປະຊາຄົມເສດຖະກິດອາຊຽນ (AEC) ແລະ ອື່ນໆ, ເຊິ່ງຈະເຮັດໃຫ້ການຄ້າ, ການລົງທຶນ ແລະ ການບໍລິການເພີ່ມຂຶ້ນ. ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ ຈະສືບຕໍ່ໃຫ້ການຊ່ວຍເຫລືອປະເທດດ້ອຍພັດທະນາ,ການຄົ້ນຄວ້າ ແລະ ການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີຂອງໂລກຈະຊ່ວຍເຮັດໃຫ້ສະມັດຕະພາບການຜະລິດ ແລະ ການບໍລິການເພີ່ມຂຶ້ນ. ການລົງທຶນຂອງພາກລັດ ແລະ ພາກເອກະຊົນຢູ່ບັນດາປະເທດກຳລັງພັດທະນາຈະໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ ເຊິ່ງຈະເຮັດໃຫ້ເສດຖະກິດຂອງໂລກມີການເຕີບໂຕໃນໄລຍະກາງ. ຄາດຄະເນສະເລ່ຍໃນໄລຍະ 2014-2019 ເສດຖະກິດຂອງໂລກຈະຂະຫຍາຍຕົວຢູ່ໃນລະດັບ 3,1%; ໃນນັ້ນ, ປະເທດທີ່ມີການຂະຫຍາຍຕົວສູງກວ່າໝູ່ແມ່ນ ສປ ຈີນ 5,9%, ອິນເດຍ 4,8 % ແລະ ເສດຖະກິດຂອງປະເທດອາຊີອື່ນໆ 4,8%.

#### (2). ສະພາບພາຍໃນປະເທດ

ປະເທດເຮົາມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ; ປະຊາຊົນ ແລະ ສັງຄົມ ມີຄວາມສາມັກຄີປອງດອງ. ການຫັນປ່ຽນເສດຖະກິດຕາມກົນໄກຕະຫລາດເຮັດໃຫ້ເສດຖະກິດ-ສັງຄົມມີການພັດທະນາ ແລະ ມີການຂະຫຍາຍຕົວຢ່າງໝັ້ນທ່ຽງ ແລະ ຕໍ່ເນື່ອງ. ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ແລະ ປະຊາຄົມເສດຖະກິດອາຊຽນ (AEC) ຈະສ້າງກາລະໂອກາດໃຫ້ ສປປ ລາວຍາດແຍ່ງເອົາການລົງທຶນ, ການຄ້າ ແລະ ການບໍລິການຫລາຍຂຶ້ນ, ນອກຈາກນັ້ນ ຍັງເປີດໂອກາດໃຫ້ມີການແລກປ່ຽນບົດຮຽນ, ເຕັກໂນໂລຊີ ແລະ ດ້ານວັດທະນະທຳ, ເຊິ່ງຈະເປັນຜົນດີຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນໄລຍະສັ້ນ ແລະ ໄລຍະຍາວ.

#### (3). ສະພາບພາຍໃນແຂວງ

ແຂວງອັດຕະປື ມີການພັດທະນາຢ່າງຕໍ່ເນື່ອງ, ເສດຖະກິດ ແລະ ການເມືອງມີສະຖຽນລະພາບຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ປະຊາຊົນ ແລະ ສັງຄົມມີຄວາມສາມັກຄີປອງດອງ. ແຂວງພວກ

ເຮົາມີທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດຫລາຍໆດ້ານ ເຊັ່ນ: ທີ່ດິນ, ແຮ່ທາດ, ແຫລ່ງນໍ້າ ແລະ ປ່າໄມ້ ເພື່ອນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມເປັນຕົ້ນ: ການພັດທະນາພະລັງງານໄຟຟ້າ, ການສ້າງຊີນລະກະເສດ, ຜະລິດຕະພັນກະສິກຳປອດສານພິດ, ການປຸງແຕ່ງແຮ່ທາດ ແລະ ການພັດທະນາແຫລ່ງທ່ອງທ່ຽວຕ່າງໆ, ມີຄວາມໄດ້ປຽບທາງດ້ານທີ່ຕັ້ງ, ຈາກນັ້ນ ຍັງສາມາດພັດທະນາໃຫ້ເປັນໃຈກາງຂອງການຊື້-ຂາຍ ແລກປ່ຽນສິນຄ້າ ໃນການສ້າງເປັນທາງຜ່ານຂົນສົ່ງສິນຄ້າ ແລະ ການບໍລິການໃນຂົງເຂດລຸ່ມ 3 ຫລ່ຽມພັດທະນາ ເຊັ່ນ: ກຳປູເຈຍ, ລາວ, ຫວຽດນາມ (CLV).

### 1.2. ສິ່ງທ້າທາຍ

#### (1). ສະພາບພາກພື້ນ ແລະ ສາກົນ

ມາຮອດປະຈຸບັນເຖິງແມ່ນວ່າເສດຖະກິດຂອງໂລກ ໄດ້ມີສັນຍານການຟື້ນຕົວຈາກວິການທາງດ້ານເສດຖະກິດ ແລະ ການເງິນ ໃນລະດັບໜຶ່ງແລ້ວກໍ່ຕາມ, ແຕ່ໃນສຸມປີຕໍ່ໜ້າ ຄາດວ່າສະພາບເສດຖະກິດຂອງພາກພື້ນ ແລະ ຂອງໂລກອາດຍັງມີການປ່ຽນແປງຢູ່ຕະຫອດເວລາ, ຫຼາຍຂົງເຂດຍັງມີບັນຫາ ແລະ ຂໍ້ຂັດແຍ່ງດ້ານການເມືອງຍັງບໍ່ສາມາດແກ້ໄຂ ເຊິ່ງເປັນອຸປະສັກຕໍ່ສະຖຽນລະພາບທາງດ້ານເສດຖະກິດ-ສັງຄົມໃນພາກພື້ນ ແລະ ໃນໂລກ.

ການເຊື່ອມໂຍງ ແລະ ການຮ່ວມມືເສດຖະກິດໄດ້ເຮັດໃຫ້ມີການແຂ່ງຂັນຫລາຍຂຶ້ນ ເປັນຕົ້ນການຄ້າເສລີອາຊຽນ, ປະຊາຄົມອາຊຽນ. ການປ່ຽນແປງດິນຟ້າອາກາດຂອງໂລກ ຈະເຮັດໃຫ້ເກີດມີໄພພິບັດທາງທຳມະຊາດເປັນຕົ້ນ ພະຍຸ, ແຜ່ນດິນໄຫວ, ໄພແຫ້ງແລ້ງ, ໄພໜາວ ແລະ ນໍ້າຖ້ວມ: ເຊິ່ງຈະເປັນອຸປະສັກໃນການພັດທະນາເສດຖະກິດ-ສັງຄົມ ໃນທົ່ວໂລກ.

#### (2). ສະພາບພາຍໃນ

ພື້ນຖານເສດຖະກິດຂອງປະເທດເຮົາຍັງມີລັກສະນະບອບບາງ ເຊິ່ງສ່ວນໃຫ່ຍແມ່ນເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ, ການຜະລິດເປັນສິນຄ້າຍັງບໍ່ທັນຂະຫຍາຍຕົວ ແລະ ບໍ່ມີຄວາມຫຼາກຫຼາຍ, ການສ້າງຕັ້ງກຸ່ມຜູ້ຜະລິດຍັງຈຳກັດ ເຮັດໃຫ້ມີຄວາມອ່ອນໄຫວຕໍ່ປັດໄຈພາຍນອກ ເປັນຕົ້ນ: ການປ່ຽນແປງຂອງລາຄາສິນຄ້າ, ການແຂ່ງຂັນກັບຕະຫລາດຕ່າງປະເທດ. ການພັດທະນາມີຄວາມແຕກໂຕນກັນລະຫວ່າງເມືອງກັບເມືອງ, ແຂວງກັບແຂວງ, ລະຫວ່າງພາກກັບພາກ ແລະ ຄວາມແຕກໂຕນລະຫວ່າງຄົນທຸກ ແລະ ຄົນຮັ່ງຍັງມີຫຼາຍ.

ມີຄວາມຈຳກັດທາງດ້ານຊັບພະຍາກອນມະນຸດ, ການພັດທະນາສີມືແຮງງານ, ຄວາມຮູ້ຄວາມສາມາດຂອງພະນັກງານລັດ ແລະ ເອກະຊົນ ຍັງບໍ່ທັນຕອບສະໜອງໃນເງື່ອນໄຂທີ່ປະເທດກຳລັງເຊື່ອມໂຍງເສດຖະກິດກັບພາກພື້ນ. ການແຂ່ງຂັນຂອງພາກເອກະຊົນຍັງບໍ່ທັນສູງ. ການພັດທະນາໄວໜຸ່ມ ແລະ ເຍົາວະຊົນ ຖືເປັນປັດໄຈສຳຄັນໃນຂະບວນການພັດທະນາ ແລະ ການແຂ່ງຂັນເສດຖະກິດກັບພາກພື້ນ ແລະ ສາກົນ.

ທຶນຮອນໃນການພັດທະນາມີຈຳກັດ ແລະ ໜີ້ສິນຂອງພາກລັດຍັງກວມອັດຕາສູງ. ບັນດາສະຖາບັນ ແລະ ນິຕິກຳຍັງບໍ່ທັນພຽງພໍ ແລະ ເຂັ້ມແຂງເທົ່າທີ່ຄວນ. ປະກົດການຫຍໍ້ທໍ້ໃນສັງຄົມຍັງປະກົດມີຢູ່, ການປ່ຽນແປງຂອງໄພທຳມະຊາດ ເຊັ່ນ: ໄພແຫ້ງແລ້ງ, ນໍ້າຖວ້ມ ເປັນອຸປະສັກຕໍ່ກັບການພັດທະນາ.

## II. ເປົ້າໝາຍ, ທິດທາງ ແລະ ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020).

## 2.1. ເປົ້າໝາຍລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII

ເປົ້າໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງນີ້ແມ່ນສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ, ນໍາເອົາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ2020 ເວົ້າລວມ, ເວົ້າສະເພາະແຂວງອັດຕະປື ໂດຍການນໍາໃຊ້ທ່າແຮງບົ່ມຊ້ອນ ແລະ ຂໍ້ໄດ້ປຽບຕ່າງໆຂອງແຂວງ, ການເຊື່ອມໂຍງກັບພາຍໃນ, ພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ.

## 2.2. ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII

- ເຮັດໃຫ້ເສດຖະກິດຂອງແຂວງຂະຫຍາຍຕົວຢ່າງຕໍ່ເນື່ອງດ້ວຍຈັງຫວະຄວາມໄວສູງພໍສົມຄວນທັງໝັ້ນທ່ຽງ, ມີຄຸນນະພາບ, ຮັບປະກັນສະຖຽນລະພາບດ້ານເສດຖະກິດມະຫາພາກ, ດຸ່ນດ່ຽງລະຫວ່າງການພັດທະນາ ແລະ ການສະໜອງທຶນໂດຍສອດຄ່ອງກັບເງື່ອນໄຂໃໝ່ຕາມທິດຫັນເປັນອຸດສາຫະກໍາ-ທັນສະໄໝ.
- ຮັບປະກັນການພັດທະນາທີ່ຍືນຍົງ,ມີຄວາມສອດຄ່ອງກົມກຽວລະຫວ່າງການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມ, ທັງເປັນເຈົ້າການຮັບມືກັບໄພພິບັດທໍາມະຊາດຢ່າງທັນການ, ຮັບປະກັນການພັດທະນາຊົນນະບົດຮອບດ້ານຕິດພັນສະໜິດແໜ້ນກັບການແກ້ໄຂຄວາມທຸກຍາກ.
- ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ: ສ້າງກໍາລັງແຮງງານໃຫ້ມີສີມື, ມີລະບຽບວິໄນ ແລະ ອົດທົນ, ສ້າງໃຫ້ໄດ້ຊ່ຽວຊານສະເພາະດ້ານວິຊາການ ແລະ ເຕັກນິກ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານລັດ, ວິສາຫະກິດ ແລະ ຜູ້ປະກອບການສາມາດແຂ່ງຂັນໄດ້ຢູ່ພາຍໃນແລະຕ່າງປະເທດ.
- ຮັກສາສະຖຽນລະພາບທາງດ້ານການເມືອງ,ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ, ສ້າງສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ.
- ສືບຕໍ່ເປີດກ້ວາງການຮ່ວມມືກັບສາກົນດ້ວຍຫຼາຍຮູບຫຼາຍສີ, ເປັນເຈົ້າການຕາມທິດຕ່າງຝ່າຍຕ່າງມີຜົນປະໂຫຍດ ສ້າງເງື່ອນໄຂທີ່ເອື້ອອໍານວຍໃຫ້ແກ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## 2.3. ຄາດໝາຍສູ້ຊົນ

### 2.3.1. ຄາດໝາຍດ້ານເສດຖະກິດ ແລະ ການດຸ່ນດ່ຽງມະຫາພາກ

**1). ຄາດໝາຍດ້ານເສດຖະກິດມະຫາພາກ**

- ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວສະເລ່ຍບໍ່ຫຼຸດ 10% ຕໍ່ປີ. ໃນນັ້ນ: ກະສິກໍາ-ປ່າໄມ້ເພີ່ມຂຶ້ນສະເລ່ຍ 8%; ອຸດສາຫະກໍາ ເພີ່ມຂຶ້ນ 13,40% ແລະ ບໍລິການ ເພີ່ມຂຶ້ນ 15,20% ຕໍ່ປີ.
- ພົນລະເມືອງປະມານ 154.742 ຄົນ ໃນປີ 2020.
- ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ (GDP) ໃຫ້ໄດ້ບໍ່ຫລຸດ 2.900 ໂດລາໃນປີ 2020 .
- ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບທີ່ເໝາະສົມ (ໃນລະດັບ 6%).
- ສູ້ຊົນປະຕິບັດລາຍຮັບງົບປະມານທັງໝົດໃຫ້ໄດ້ໃນລະຫວ່າງ 10-15% ຂອງ GDP, ຮັບປະກັນການຂາດດຸນງົບປະມານ ໃຫ້ຢູ່ໃນລະດັບບໍ່ເກີນ 5-10% ຂອງ GDP ຕໍ່ປີ.
- ຄວາມຕ້ອງການທຶນເພື່ອການພັດທະນາໃນ 5 ປີປະມານ 50% ຂອງ GDP ຫຼື ປະມານ 7,1 ພັນຕື້ກີບ.
- ສູ້ຊົນມູນຄ່າການສົ່ງອອກຂະຫຍາຍຕົວສະເລ່ຍໃນລະດັບບໍ່ຫລຸດ 15% ແລະ ການນໍາເຂົ້າບໍ່ເກີນ10%.

### 2). ການດຸ່ນດ່ຽງມະຫາພາກ

#### (1). ການພັດທະນາ ແລະ ການສະໜອງທຶນມີຄວາມສອດຄ່ອງ ແລະ ກົມກຽວກັນ

⊕ **ທິດທາງ**

ການພັດທະນາ ແລະ ການສະໜອງທຶນຕ້ອງມີຄວາມກົມກຽວ, ສອດຄ່ອງ ແລະ ຕິດພັນກັນຢ່າງສະໜິດແໜ້ນ ຄື: ການສະໜອງທຶນຕ້ອງສອດຄ່ອງກັບນະໂຍບາຍລວມຂອງການພັດທະນາ, ຈຸດໝາຍລວມ, ທິດທາງ ແລະ ບັນດາຄາດໝາຍຕ່າງໆທາງດ້ານເສດຖິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ, ຄາດໝາຍຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ; ຄວາມຕ້ອງການຂອງການລົງທຶນຕ້ອງສອດຄ່ອງ ແລະ ຮັບປະກັນກັບຄວາມອາດສາມາດຂອງການສະໜອງງົບປະມານໃນແຕ່ລະປີ ໂດຍມີກົນໄກໃນການລະດົມທຶນຢ່າງເໝາະສົມ ເຊັ່ນ: ທຶນການຊ່ວຍເຫລືອລ້າ ແລະ ກູ້ຢືມຈາກຕ່າງປະເທດ, ການດຶງດູດການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ, ການສະໜອງສິນເຊື່ອໃຫ້ແກ່ການຜະລິດ ແລະ ການບໍລິການ, ການປະກອບສ່ວນຂອງປະຊາຊົນ.

⊕ **ຄາດໝາຍ**

ໃນໄລຍະ 5 ປີ (2016-2020) ຕໍ່ໜ້າຄາດຄະເນມີຄວາມຕ້ອງການທຶນເພື່ອການພັດທະນາທັງໝົດ ຈຳນວນ 7.100 ຕື້ກີບ, ກວມເອົາ 50% ຂອງ GDP, ໃນນີ້:

- ການລົງທຶນຈາກງົບປະມານລັດ ກວມປະມານ 5-10% ຂອງການລົງທຶນລວມ.
- ການລົງທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມ ກວມປະມານ 10-15% ຂອງການລົງທຶນລວມ.
- ການລົງທຶນຂອງເອກກະຊົນພາຍໃນ ແລະ ຕ່າງປະເທດ ກວມປະມານ 60% ຂອງການລົງທຶນລວມ.
- ການລົງທຶນຈາກການປ່ອຍສິນເຊື່ອຂອງທະນາຄານ ກວມປະມານ 20-25% ຂອງການລົງທຶນລວມ.

⊕ **ວຽກຈຸດສຸມ, ແຜນງານ ແລະໂຄງການ**

- ການລົງທຶນຈາກງົບປະມານລັດສຸມໃສ່ປັບປຸງແລະສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ເປັນຕົ້ນ: ຖະໜົນຫົນທາງ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ນ້ຳລິນ, ສູນຄົ້ນຄ້ວາເຕັກນິກກະສິກຳ; ຊຸກຍູ້ສົ່ງເສີມດ້ານເຕັກນິກ-ວິຊາການ, ການພັດທະນາເຂດຊົນນະບົດ ແລະ ເຂດທາງໄກສອກຫລີກ.
- ການລົງທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມ ແມ່ນສຸມໃສ່ພັດທະນາຂົງເຂດສັງຄົມຕິດພັນກັບການປັບປຸງຊີວິດການເປັນຢູ່ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ແກ້ໄຂບັນຫາການຂາດສານອາຫານ, ປັບປຸງສຸກຂະອານາໄມ.
- ການລົງທຶນຂອງເອກກະຊົນພາຍໃນ ແລະ ຕ່າງປະເທດ ແມ່ນສຸມໃສ່ຂະແໜງພັດທະນາເສດຖະກິດຕົ້ນຕໍ ຄື: ການກໍ່ສ້າງເຂື່ອນໄຟຟ້າ, ການຂຸດຄົ້ນບໍ່ແຮ່, ເຂດເສດຖະກິດສະເພາະ, ການລົງທຶນໃສ່ເຂດອຸດສະຫາກຳສະເພາະ, ລົງທຶນໃນຂະແໜງອຸດສະຫາກຳປຸງແຕ່ງ, ວັດສະດຸກໍ່ສ້າງ ແລະ ພັດທະນາການທ່ອງທ່ຽວ ແລະ ອື່ນໆ.
- ການລົງທຶນຈາກການປ່ອຍສິນເຊື່ອຂອງທະນາຄານ ແມ່ນສະໜອງໃຫ້ວິສາຫາກິດຂະໜາດນ້ອຍ ແລະ ຂະໜາດກາງກ່ຽວກັບການຜະລິດກະສິກຳ, ອຸດສະຫາກຳປຸງແຕ່ງ-ການຄ້າ ແລະ ຫັດຖະກຳ ເພື່ອສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກ.

#### (2). ການດຸ່ນດ່ຽງງົບປະມານແຫ່ງລັດ

- ຄາດຄະເນລາຍຮັບງົບປະມານລວມໃນ 5 ປີ ໃຫ້ໄດ້ທັງໝົດປະມານ 1.610 ຕື້ກີບ, ກວມເອົາລະຫວ່າງ 10-15% ຂອງລວມຍອດຜະລິດຕະພັນພາຍໃນ (GDP), ໃນນັ້ນ: ສ້າງລາຍຮັບພາຍໃນ ລວມໃນ 5 ປີ ໃຫ້ໄດ້ປະມານ 600 ຕື້ກີບ, ກວມເອົາ 6-9% ຂອງລວມຍອດຜະລິດຕະພັນພາຍໃນ.

- ຄາດຄະເນລາຍຈ່າຍງົບປະມານລວມ ໃນ 5 ປີ ປະມານ 1.710 ຕື້ກີບ, ກວມເອົາປະມານ 15-20% ຂອງລວມຍອດຜະລິດຕະພັນພາຍໃນ.

**(3). ການດຸ່ນດ່ຽງຂາເຂົ້າ-ຂາອອກ**

ໃນໄລຍະ 5 ປີຕໍ່ໜ້າສູ້ຊົນເຮັດໃຫ້ການຂາດດຸນການຄ້າຫຼຸດລົງເປັນກ້າວໆໂດຍການສົ່ງເສີມການຜະລິດພາຍໃນທີ່ມີຢູ່ ແລະ ຜະລິດຕະພັນອື່ນທີ່ເປັນຄວາມຕ້ອງການຂອງຕະຫລາດໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວຢ່າງກວ້າງ ຂວາງ ບັນລຸທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສົ່ງອອກຢ່າງເປັນຮູບປະທຳເພີ່ມຂຶ້ນໃນແຕ່ລະປີ. ຫລຸດຜ່ອນການນຳເຂົ້າທີ່ມີລັກສະນະບໍ່ມີຄວາມຈຳເປັນ, ມີນະໂຍບາຍພິເສດໃຫ້ແກ່ການນຳເຂົ້າທີ່ຮັບໃຊ້ໃຫ້ແກ່ການຜະລິດ ແລະ ໂຄງການລົງທຶນທີ່ເປັນບຸລິມະສິດຂອງລັດຖະບານກໍຄືຂອງແຂວງ ເຊັ່ນ: ການນຳເຂົ້າອຸປະກອນເຄື່ອງຈັກເພື່ອຮັບໃຊ້ການຜະລິດຕ່າງໆ. ຄາດຄະເນການສົ່ງອອກສິນຄ້າໄປຕ່າງປະເທດໃນ 5 ປີ (2016-2020) ຂະຫຍາຍຕົວສະເລ່ຍບໍ່ຫຼຸດ 15% ຕໍ່ປີ ແລະ ການນຳເຂົ້າບໍ່ເກີນ 10%.

**(4). ການດຸ່ນດ່ຽງແຮງງານ**

ເພື່ອໃຫ້ໂຄງປະກອບຂອງແຮງງານໄປຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສອດຄ່ອງກັບອັດຕາການຂະຫຍາຍຕົວຂອງບັນດາຂະແໜງການ, ຮອດປີ 2020 ສູ້ຊົນຝຶກສີມືແຮງງານທີ່ຈະເປັນກຳລັງແຮງເຂັ້ມແຂງສຳລັບການພັດທະນາເສດເສດຖະກິດ (ໝວດອາຍຸ 15 ປີຂຶ້ນໄປ) ໃຫ້ໄດ້ປະມານ 79.806 ຄົນ, ໃນນັ້ນ: ຂະແໜງກະສິກຳ ໃຫ້ຫລຸດລົງຍັງເຫລືອ 31.922 ຄົນ, ກວມເອົາ 40%; ຂະແໜງອຸດສາຫະກຳ 19.952 ຄົນກວມເອົາ 25% ແລະ ຂະແໜງບໍລິການ 27.932 ຄົນກວມເອົາ 35% ຂອງແຮງງານທັງໝົດ.

## III. ບັນດາໜ້າທີ່ຈຸດສຸມຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

### (1). ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

**⊕ ທິດທາງ**

ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວແຂວງ ແມ່ນຖືເອົາຄອບຄົວ, ບ້ານ, ກຸ່ມບ້ານ ແລະ ເມືອງທຸກຍາກເປັນບຸລິມະສິດ ໂດຍການປັບປຸງ ແລະ ກໍ່ສ້າງຮາກຖານການເມືອງໃຫ້ມີຄວາມຫນັກແໜ້ນເຂັ້ມແຂງ; ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ; ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ແກ່ປະຊາຊົນຢ່າງມີຈຸດສຸມ; ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນດ້ວຍການສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການຕາມທ່າແຮງຂອງທ້ອງຖິ່ນຕົນ; ການແກ້ໄຂບັນຫາລູກລະເບີດບໍ່ທັນແຕກອອກຈາກເຂດພື້ນທີ່ໂຄງການພັດທະນາ, ແຫລ່ງທ່ອງທ່ຽວ, ເຂດການຜະລິດກະສິກຳ, ເຂດລ້ຽງສັດ, ເຂດທີ່ຢູ່ອາໄສຂອງປະຊາຊົນ. ຄຽງຄູ່ກັນນັ້ນ, ກໍຕ້ອງໄດ້ເອົາໃຈໃສ່ປິ່ນປົວ, ຟື້ນຟູສຸຂະພາບ ແລະ ຊ່ວຍເຫລືອຜູ້ທີ່ເກີດອຸປະຕິເຫດຈາກລູກລະເບີດບໍ່ທັນແຕກ.

**⊕ ຄາດໝາຍ**

ຮອດປີ 2020 ສູ້ຊົນເຮັດໃຫ້:

- ອັດຕາຄວາມທຸກຍາກໃຫ້ຫລຸດລົງຕ່ຳກວ່າ 5%.
- ອັດຕາຄອບຄົວທຸກຍາກຍັງເຫຼືອບໍ່ເກີນ 5%,
- ບ້ານທຸກຍາກຍັງເຫຼືອບໍ່ເກີນ 10%.
- ສ້າງຄອບຄົວພັດທະນາໃຫ້ໄດ້ຫຼາຍກວ່າ 50% ຂອງຈຳນວນຄອບຄົວທັງໝົດ.

- ສ້າງບ້ານພັດທະນາໃຫ້ໄດ້ຫຼາຍກວ່າ 50% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ.

- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດໄດ້ຫຼາຍກວ່າ 6 ແຫ່ງ.

- ແກ້ໄຂການເຄື່ອນຍ້າຍຂອງປະຊາຊົນ.

- ເກັບກູ້ລະເບີດທີ່ບໍ່ທັນແຕກອອກຈາກເນື້ອທີ່ບຸລິມະສິດ ເພື່ອຮັບໃຊ້ການທຳມາຫາກິນຂອງປະຊາຊົນບັນດາເຜົ່າ ແລະ ໂຄງການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃຫ້ໄດ້ 1.000 ເຮັກຕາ (200 ເຮັກຕາຕໍ່ປີ),

- ຊ່ວຍຜູ້ເຄາະຄ້າຍຈາກລະເບີດແຕກໃສ່ໃຫ້ໄດ້ 60%.

**⊕ ວຽກຈຸດສຸມແລະໂຄງການຕົ້ນຕໍ**

- ສືບຕໍ່ຫັນລົງຮາກຖານເພື່ອສຸມໃສ່ສ້າງບ້ານເປັນຫົວໜ່ວຍພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ: ໂດຍເລັ່ງການຕ້ານປະກົດການຫຍໍ້ທໍ້ຢູ່ໃນບ້ານ ແລະ ເມືອງຕ່າງໆ ເພື່ອເຮັດໃຫ້ພື້ນຖານມີຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນມີຄວາມກະຕືລືລົ້ນປະກອບສ່ວນເຂົ້າໃນການພັດທະນາ, ການແກ້ໄຂຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

- ສຸມໃສ່ການດູດດຶງທຶນຈາກແຫລ່ງຕ່າງໆ ແລະ ປຸກລະດົມໃຫ້ທຸກພາກສ່ວນຂອງສັງຄົມປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກຢ່າງກວ້າງຂວາງ ແລະ ຕັ້ງໜ້າ.

- ປັບປຸງ, ກໍ່ສ້າງໂຄງລ່າງພື້ນຖານທີ່ຈຳເປັນໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໂດຍການຍົກລະດັບ ແລະ ກໍ່ສ້າງເສັ້ນທາງເຊື່ອມຈອດລະຫວ່າງບ້ານຫາເມືອງ, ເມືອງຫາແຂວງທີ່ຍັງຫຍຸ້ງຍາກ ແລະ ເສັ້ນທາງ 18A ຕອນທາງແຕ່ເຊປຽນ ຫາ ເຊຄຳພໍ ພ້ອມກັບການຍູຢາງສາຍທາງດັ່ງກ່າວ ທີ່ມີຄວາມຍາວ 53 ກມ ອັດຕະປື-ເຊຄຳພໍ, ສ້າງສິ່ງອຳນວຍຄວາມສະດວກການບໍລິການຂອງພາກລັດ ແລະ ເອກະຊົນໄປສູ່ປະຊາຊົນ, ຂົນສົ່ງຜົນຜະລິດ ແລະ ສິນຄ້າອອກສູ່ຕະຫລາດຈຳໜ່າຍລະຫວ່າງເມືອງ, ແຂວງ ແລະ ຊາຍແດນ.

- ສືບຕໍ່ຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນໃຫ້ແກ່ປະຊາຊົນ ໂດຍສະເພາະບ້ານທີ່ບໍ່ມີບ່ອນທຳການຜະລິດ. ຈັດສັນແຜນຜັງບ້ານທີ່ດີ ແລະ ມີການປະຕິບັດຕາມແຜນຜັງຊຶ່ງປະກອບຫ້ອງການບ້ານ, ສະໂມສອນບ້ານ, ສູນຂໍ້ມູນຂ່າວສານບ້ານ ແລະອື່ນໆ.

- ຊຸກຍູ້ສົ່ງເສີມໃຫ້ປະຊາຊົນຜະລິດສິນຄ້າໃຫ້ມີຄວາມຫຼາກຫຼາຍຕາມມູນເຊື້ອທີ່ມີຢູ່ທ້ອງຖິ່ນຕ່າງໆ ເປັນຕົ້ນການຜະລິດຕະພັນກະສິກຳ-ປ່າໄມ້ ເພື່ອບໍລິໂພກພາຍໃນ ແລະ ຂາຍສົ່ງອອກ.

- ສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນຫຼາຍຂຶ້ນ ຕິດພັນກັບອຸດສາຫະກຳທ່ອງທ່ຽວ.

- ສຸມໃສ່ແກ້ໄຂບັນຫາລູກລະເບີດທີ່ບໍ່ທັນແຕກ.

## (2). ການພັດທະນາຂະແໜງການ

### 2.1. ການພັດທະນາຂົງເຂດເສດຖະກິດ

#### 2.1.1. ກະສິກຳ-ປ່າໄມ້

**⊕ ທິດທາງ**

ສືບຕໍ່ຊຸກຍູ້ ແລະ ສົ່ງເສີມພັດທະນາຜະລິດຕະພັນຂອງຂະແໜງກະສິກຳ-ປ່າໄມ້ທີ່ມີທ່າແຮງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສາມາດຕອບສະໜອງໃຫ້ແກ່ອຸດສະຫະກຳປຸງແຕ່ງ ແລະ ຂະແໜງບໍລິການ ໂດຍຮັບປະກັນທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອຮັບປະກັນການຊົມໃຊ້ພາຍໃນແຂວງ ແລະ ເພື່ອແນໃສ່ການເຂົ້າເຖິງຕະຫລາດ

ພາຍໃນ, ອານຸພາກພື້ນ ແລະ ສາກົນ ໂດຍໃຫ້ຕິດພັນກັບການສ້າງ ແລະ ປັບປຸງກຸ່ມຊາວກະສິກອນ, ສາມະຄົມຜູ້ຜະລິດ ແລະ ປຸງແຕ່ງກະສິກຳຢ່າງແຂງແຮງ ແລະ ຮອບດ້ານ.

⊕ **ຄາດໝາຍ**

**+ ການຜະລິດສະບຽງອາຫານ**

ເພື່ອຮັບປະກັນດ້ານໂພຊະນາການ ຂອງປະຊາຊົນໃຫ້ໄດ້ຮັບພະລັງງານ 2.600-2.700 ກິໂລກາຣໍລີຕໍ່ຄົນຕໍ່ວັນ ຫຼືໃຫ້ໄດ້ບໍລິໂພກໃນອັດຕາສ່ວນ ຄື: ເຂົ້າສານຢ່າງຕ່ຳ 167ກິໂລ/ຄົນ/ປີ (280ກິໂລເຂົ້າເປືອກ/ຄົນ/ປີ), ພືດຜັກ 44 ກິໂລ/ຄົນ/ປີ, ປະເພດຖົ່ວ-ງາ 0,70 ກິໂລ (ແຫ້ງ)/ຄົນ/ປີ, ສາລີ 1,50 ກລ/ຄົນ/ປີ, ພືດເປັນຫົວ (ເຜືອກ, ມັນຕ່າງໆ), ໝາກໄມ້ 8,10 ກິໂລ/ຄົນ/ປີ, ນ້ຳຕານ 1,30 ກິໂລ/ຄົນ/ປີ, ຊີ້ນ-ປາ 61,60 ກິໂລ/ຄົນ/ປີ (ຊີ້ນໝູ 7,70 ກລ/ຄົນ/ປີ, ຊີ້ນໄກ່ 11,60 ກລ/ຄົນ/ປີ, ປາ 31 ກລ/ຄົນ/ປີ ແລະ ຊີ້ນອື່ນໆ 11,30 ກລ/ຄົນ/ປີ), ໄຂ່ 3,40 ກິໂລ/ຄົນ/ປີ. ໂດຍຈະຕ້ອງສູ້ຊົນຜະລິດ ແລະ ສະໜອງເຂົ້າ, ພືດຜັກ, ປະເພດຖົ່ວ-ງາ, ໝາກໄມ້, ນ້ຳຕານ, ຊີ້ນ-ປາ ແລະ ໄຂ່ໃຫ້ພຽງພໍ ມີສ່ວນແຮໄວ້ ໂດຍຕ້ອງໄດ້ເອົາໃຈໃສ່ການຜະລິດສະບຽງທີ່ສຳຄັນ ດັ່ງນີ້:

- ສູ້ຊົນຜະລິດເຂົ້າເປືອກລວມບໍ່ໃຫ້ຫຼຸດ 133.000 ໂຕນ ໃນປີ 2020, ໃນນັ້ນຜົນຜະລິດເຂົ້າເພື່ອບໍລິໂພກ ບໍ່ໃຫ້ລຸດ 100.000 ໂຕນ ສະເລ່ຍອັດຕາເພີ່ມຂອງຜົນຜະລິດເຂົ້າ 5% ຕໍ່ປີ; ຜະລິດຕະພາບສະເລ່ຍ 4,47 ໂຕນ/ເຮັກຕາ; ບຸກເບີກເນື້ອທີ່ນາໃໝ່ໃນເຂດທົ່ງພຽງ ແລະ ສຸມໃສ່ການກໍ່ສ້າງສິ່ງອຳນວຍຄວາມສະດວກເພື່ອການປູກເຂົ້າແບບກະເສດສຸມ ຍົກຜະລິດຕະພາບ. ເພີ່ມສັດສ່ວນການປູກເຂົ້າຈ້າວໃຫ້ກວມເອົາ 70% ຂອງຜົນຜະລິດທັງໝົດ, ເລັ່ງໃສ່ຜະລິດເຂົ້າຄຸນນະພາບດີໂດຍສະເພາະແມ່ນການຜະລິດເຂົ້າຈ້າວເພື່ອສະໜອງພາຍໃນ ແລະ ສົ່ງອອກໃຫ້ໄດ້ 10.000 ໂຕນຕໍ່ປີ. ໃນນັ້ນ, ຈຸດສຸມຍົກຜະລິດຕະພາບແມ່ນເລັ່ງໃສ່ເຂດ 3 ທົ່ງພຽງ ແລະ ເຂດຊົນລະປະທານທີ່ມີເງື່ອນໄຂ.
- ຜະລິດພືດສະບຽງອາຫານສຳລັບບໍລິໂພກເຊັ່ນ: ສາລີຫວານໃຫ້ໄດ້ 258 ໂຕນຂຶ້ນໄປ, ໃນເນື້ອທີ່ 42,37 ຮຕ, ເຜືອກມັນໃຫ້ໄດ້ 310 ໂຕນ, ໝາກໄມ້ໃຫ້ໄດ້ 1.396 ໂຕນຂຶ້ນໄປ ແລະ ພືດຜັກອື່ນໆບໍ່ໃຫ້ຫລຸດ 7.581 ໂຕນ.
- ສູ້ຊົນຜະລິດຊີ້ນ, ປາ ແລະ ໄຂ່ໃຫ້ໄດ້ 11.200 ໂຕນຂຶ້ນໄປ, ລ້ຽງ ແລະ ເກັບກູ້ປາ ແລະ ສັດນ້ຳໃຫ້ໄດ້ 4.500 ໂຕນ/ປີ, ຕອບສະໜອງອັດຕາການບໍລິໂພກລວມສະເລ່ຍ 65 ກິໂລຕໍ່ຄົນຕໍ່ປີ ຫຼື ເຮັດໃຫ້ປະຊາຊົນໄດ້ຮັບພະລັງງານຈາກຊີ້ນສະເລ່ຍ 441 ໂລກາລໍລີຕໍ່ວັນ ແລະ ສູ້ຊົນໃຫ້ອັດຕາການຂະຫຍາຍຕົວຂອງຝູງສັດໃນລະດັບ 8% ຕໍ່ປີ, ຂະຍາຍການລ້ຽງປາ ແລະ ສັດນ້ຳ ໃຫ້ໄດ້ 53,50% ຕໍ່ປີ.

**+ ການຜະລິດເປັນສິນຄ້າ**

- ຜະລິດເຂົ້າເປັນສິນຄ້າສົ່ງອອກຕາມເຂດທີ່ມີເງື່ອນໄຂ ແລະ ທ່າແຮງເປັນຕົ້ນ: ເຂົ້າຈ້າວແຂງຊົນເຜົ່າທ້ອງຖິ່ນ, ເຂົ້າຈ້າວມະລິ, ເຂົ້າກ່ຳ, ເຂົ້າພັນປັບປຸງໃໝ່ທີ່ມີຄວາມຕ້ອງການຂອງຕະຫລາດ ເປັນຕົ້ນ: ເຂົ້າທ່າດອກຄຳ, ເຂົ້າທ່າສະໂນ, ເຂົ້າໂພນງາມ ແລະ ເຂົ້າຫອມອື່ນໆ. ເພີ່ມສັດສ່ວນການປູກເຂົ້າຈ້າວໃຫ້ກວມເອົາ 70% ຂອງຜົນຜະລິດທັງໝົດ, ໃນນັ້ນ: ເລັ່ງໃສ່ຜະລິດເຂົ້າເພື່ອສົ່ງອອກໃນມາດຕະຖານກະສິກຳທີ່ດີ (GAP) ໃຫ້ໄດ້ 6.000 ໂຕນ ເຂົ້າເປືອກໂດຍເລັ່ງໃສ່ຕະຫຼາດພາຍໃນ, ພາກພື້ນ ແລະ ສາກົນ.
- ສຳລັບພືດຕ່າງໆ: ສູ້ຊົນຜະລິດມັນຕົ້ນໃຫ້ໄດ້ 200.000 ໂຕນ, ໃນເນື້ອທີ່ 6.000 ຮຕ; ຜະລິດສາລີອາຫານສັດ ໃຫ້ໄດ້ 6.000 ໂຕນ, ໃນເນື້ອທີ່ 1.200 ຮຕ; ກາເຟ ໃຫ້ໄດ້ປະມານ 9.000 ໂຕນ, ໃນເນື້ອທີ່ 1.800 ຮຕ; ອ້ອຍໃຫ້ໄດ້ຫລາຍກວ່າ 620.000 ໂຕນ, ໃນເນື້ອທີ່ 12.000 ຮຕ. ພ້ອມດຽວກັນນັ້ນ, ກໍ່ຕ້ອງໄດ້ສູ້ຊົນຜະລິດພືດສິນຄ້າອື່ນໆທີ່ໄດ້ປຽບ.

- ສຳລັບການລ້ຽງສັດ: ສູ້ຊົນຫັນການລ້ຽງສັດແບບທຳມະຊາດ ໄປສູ່ການລ້ຽງແບບເປັນຟາມ ໃຫ້ສາມາດສະໜອງຜົນຜະລິດ ຈາກຟາມໃຫ້ໄດ້ 30% ຂອງຜົນຜະລິດສັດທັງໝົດ. ສຸມໃສ່ປັບປຸງທົ່ງຫຍ້າທຳມະຊາດ ແລະ ສ້າງທົ່ງຫຍ້າເຂດຕິດພັນກັບບັນດາຟາມ, ປັບປຸງພັນສັດລ້ຽງພື້ນເມືອງທີ່ມີຈຸດເດັ່ນ ແລະ ລ້ຽງ ສັດພັນປັບປຸງທີ່ມີປະສິດທິຜົນສູງ ໂດຍເພີ່ມນ້ຳໜັກງົວພື້ນເມືອງໃຫ້ໄດ້ 250-300 ກິໂລ ແລະ ສູ້ຊົນສືບຕໍ່ສົ່ງອອກສັດໃຫຍ່ປະເພດງົວ, ຄວາຍຢ່າງຕ່ຳໃຫ້ໄດ້ 1.000-1.500 ໂຕ.

**+ ການຄຸ້ມຄອງປ່າຜະລິດ**

- ສູ້ຊົນສ້າງຜົນຜະລິດຈາກປ່າປູກເພີ່ມຂຶ້ນ 50% ຟື້ນຟູປ່າ ໂດຍສະເພາະໄມ້ເສດຖະກິດ ເຊັ່ນ: ໄມ້ດູ່, ໄມ້ຍາງ, ໄມ້ບາກ, ໄມ້ຂະຍູງ ແລະ ໄມ້ອື່ນໆ ໃນເຂດປ່າຜະລິດໃຫ້ໄດ້ 158.218 ຮຕ, ສົ່ງເສີມການປູກໄມ້ອຸດສະຫາກຳທີ່ເປັນສິນຄ້າເປັນຕົ້ນ: ໄມ້ວິກ, ໄມ້ສັກ, ໄມ້ດູ່ ຮອດປີ 2020 ໃຫ້ໄດ້ໃນເນື້ອທີ່ 12.000 ຮຕ.

- ສົ່ງເສີມການປູກຢາງພາລາໃນທົ່ວແຂວງ ໃຫ້ຢູ່ໃນເນື້ອທີ່ທັງໝົດ 20.000 ຮຕ, ຄາດວ່າຈະໄດ້ນ້ຳຢາງດິບທັງໝົດ 40.000 ໂຕນ ເພື່ອຕອບສະໜອງໃຫ້ໂຮງງານປຸງແຕ່ງຜະລິດເປັນຢາງແຜ່ນເພື່ອສົ່ງອອກ ໂດຍຕິດພັນກັບການສ້າງສີມືແຮງງານໃນການເກັບກ່ຽວຢ່າງພຽງພໍກັບຄວາມຕ້ອງການຂອງຕະຫລາດ.

**⊕ ໜ້າວຽກຈຸດສຸມ, ແຜນງານ ແລະ ໂຄງການ**

**+ ສຳລັບການຜະລິດພືດ:**

- **ການຜະລິດເຂົ້າເປັນສະບຽງອາຫານ ແລະ ສິນຄ້າ:** ໄດ້ເອົາໃຈໃສ່ສົ່ງເສີມປູກເຂົ້າພັນພື້ນເມືອງ ທີ່ມີຄຸນລັກສະນະສະເພາະ ເຊັ່ນ: ເຂົ້າຈ້າວແຂງຊົນເຜົ່າທ້ອງຖິ່ນ, ເຂົ້າຈ້າວມະລິ, ເຂົ້າກ່ຳ, ເຂົ້າພັນປັບປຸງໃໝ່ ຢູ່ເຂດບ້ານໝື່ນຫົວເມືອງ, ເຂດໂພໄຊ, ເຂດໂພນງາມ, ເຂດໃຫຍ່ອຸດົມ, ເຂດພະເມືອງ, ເຂດລຽບຕີນພູຫລວງ, ເຂດລຽບຕາມແຄມນ້ຳເຊກອງ, ເຂດເທດສະບານ, ເຂດຈຸດສູມຊາຍແດນເມືອງຊານໄຊ, ເຂດນ້ຳກົງ, ເຂດວົງສຳພັນ, ເຊິ່ງມີເນື້ອທີ່ທັງໝົດ 23.150 ເຮັກຕາ, ສາມາດຜະລິດໄດ້ປະມານ 133.000 ໂຕນ. ໂດຍການປັບປຸງ ແລະ ຈັດຕັ້ງກຸ່ມການຜະລິດ ແລະ ສູນບໍລິການທີ່ເນັ້ນການຜະລິດຕາມມາດຕະຖານກະສິກຳສະອາດເປັນຕົ້ນ: ກະສິກຳທີ່ດີ ແລະ ກະສິກຳອິນຊີ.

- ຂະຫຍາຍພື້ນທີ່ຊົນລະປະທານໃນທົ່ວແຂວງ ຈາກ 1.800 ຮຕ ມາເປັນ 6.000 ຮຕ ໃນເນື້ອທີ່ນາທີ່ມີແລ້ວ, ໂດຍອີງໃສ່ໂຄງການປະເພດທີ່ມີນ້ຳໄຫລເອງ ເປັນຕົ້ນ: ໂຄງການເຂື່ອນດິນຫ້ວຍເປາະ, ໂຄງການຊົນລະປະທານນຳໃຊ້ນ້ຳທ້າຍເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍ ແລະ ເຂື່ອນເຊກະໝານ ແລະ ໂຄງການ ອື່ນໆ.

- ວາງແຜນນຳໃຊ້ທີ່ດິນ ແລະ ປັບປຸງດິນ, ຄົ້ນຫາວິທີການ ແລະ ປັບປຸງເຄື່ອງມື, ວິທີການ, ຫັລກການໃນທຸກລະດັບໃນການວາງແຜນນຳໃຊ້ທີ່ດິນ ແບບປະສົມປະສານ ເພື່ອຊຸກຍູ້ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຢູ່ໃນລະດັບຕ່າງໆໃຫ້ມີຄວາມຍືນຍົງ, ພ້ອມທັງປະເມີນຄຸນນະພາບຂອງດິນ ເພື່ອກຳນົດອັດຕາຝຸ່ນ ແລະ ການແຈກຢາຍຝຸ່ນໃຫ້ເໝາະສົມ.

- ເອື້ອອຳນວຍຄວາມສະດວກ ແລະ ຊຸກຍູ້ໃຫ້ສະຖານີຜະລິດແນວພັນເຂົ້າລຸ້ນ 2 ໃຫ້ໄດ້ 10-15 ໂຕນ, ຜະລິດແນວພັນເຂົ້າລຸ້ນ 3 ໃຫ້ 150-200 ໂຕນ, ໃນນັ້ນ, ແນວນັ້ນເຂົ້າຈ້າວໃຫ້ໄດ້ 30%, ຊຸກຍູ້ແນວພັນເຂົ້າປັບປຸງໃຫ້ກວມເອົາ 80%, ພ້ອມກັນນັ້ນໃຫ້ມີການນາໃຊ້ແນວພັນເຂົ້າທີ່ມີຢັ້ງຢືນໃຫ້ໄດ້ 10%.

- **ການຜະລິດສາລີແຂງ (ອາຫານສັດ):** ສູ້ຊົນຜະລິດໃຫ້ໄດ້ 50.000 ໂຕນ, ໃນເນື້ອທີ່ 5.000 ຮຕ ໂດຍໃຫ້ມີການສົ່ງເສີມການປູກຢູ່ເມືອງຊານໄຊ ແລະ ເມືອງສະໜາມໄຊເພື່ອປ້ອນຕະຫລາດພາຍໃນແຂວງ ແລະ ສົ່ງອອກ, ພ້ອມທັງໃຫ້ມີການຊຸກຍູ້ ແລະ ສົ່ງເສີມໃຫ້ກຸ່ມຜູ້ຜະລິດ ແລະຜູ້ປະກອບການລົງທຶນໃສ່ການຍົກສູງຄຸນນະພາບ ແລະ

ຫຼຸດຜ່ອນຜົນເສຍຫາຍຫຼັງການເກັບກ່ຽວ ເຊັ່ນ: ສ້າງໂຮງອົບ, ສາງເກັບມ້ຽນ ແລະ ໂຮງເຮືອນພັກຜົນຜະລິດກ່ອນການຂົນສົ່ງ.

- **ການປູກກາເຟ:** ສົ່ງເສີມປູກ ແລະ ຜະລິດຢູ່ເນີນສູງເປັນຕົ້ນ: ເມືອງຊານໄຊ: ເຂດຈຸດສູມນໍ້າງອນ, ນໍ້າຊຸຊໍາຫລວງ ແລະ ສໍາລັບເມືອງສະໜາມໄຊ: ເຂດໜອງຫີນ-ປາກບໍ່. ປະຈຸບັນມີເນື້ອທີ່ເກັບກ່ຽວທັງໝົດ ປະມານ 2.000 ເຮັກຕາ ຄາດຄະເນຜົນຜະລິດຈະໄດ້ເຖິງ 4.000 ໂຕນ ໂດຍສຸມໃສ່ຍົກລະດັບ ແລະ ສົ່ງເສີມການຜະລິດໃຫ້ໄດ້ມາດຕະຖານກະສິກໍາອິນຊີ ແລະ ກະສິກໍາທີ່ດີ.

- **ການປູກອ້ອຍ:** ຊຸກຍູ້ໃຫ້ມີການປູກອ້ອຍ ຢູ່ເມືອງໄຊເສດຖາ, ເມືອງສາມັກຄີໄຊ ແລະ ເມືອງພູວົງໃຫ້ໄດ້ 9.000 ຮຕ, ຜົນຜະລິດ 723.300 ໂຕນ ເພື່ອເປັນວັດຖຸດິບປ້ອນໂຮງງານນໍ້າຕານ ຂອງບໍລິສັດຮ່ວາງແຮັງ ອັດຕະປື; ນອກຈາກນັ້ນ, ໃຫ້ນໍາໃຊ້ສິ່ງເສດເຫຼືອຈາກການປຸງແຕ່ງນໍ້າຕານ ນໍາໄປຜະລິດເປັນຜະລິດຕະພັນອື່ນເຊັ່ນ: ຝຸ່ນ, ພະລັງງານທົດແທນ ແລະ ອື່ນໆ.

- **ການປູກມັນຕົ້ນ:** ສົ່ງເສີມໃຫ້ປູກຢູ່ເຂດທີ່ມີເງື່ອນໄຂເໝາະສົມ ຢູ່ເຂດໝື່ນຫົວເມືອງ ເມືອງສາມັກຄີໄຊ ແລະ ເຂດສົມບູນ ເມືອງພູວົງ ໃນເນື້ອທີ່ 1.500 ຮຕ, ຄາດຄະເນຜົນຜະລິດ 37.500ໂຕນ. ໂດຍຕ້ອງມີການສົ່ງເສີມພາກເອກະຊົນລົງທຶນກໍ່ສ້າງໃຫ້ໂຮງງານ ເພື່ອປຸງແຕ່ງຜະລິດຕະພັນເພື່ອສົ່ງອອກ.

- **ການປູກປາມ:** ປະຈຸບັນໄດ້ມີການປູກປາມ ໃນເນື້ອທີ່ທັງໝົດ 6.000 ຮຕ, ຄາດວ່າຈະໄດ້ຜົນຜະລິດທັງໝົດ 150.000 ໂຕນ ເພື່ອສະໜອງໃຫ້ໂຮງງານປຸງແຕ່ງຜະລິດເປັນນໍ້າມັນພືດ ເພື່ອສົ່ງອອກໂດຍຕິດພັນກັບການສ້າງສີມືແຮງງານໃນການເກັບກ່ຽວຢ່າງພຽງພໍກັບຄວາມຕ້ອງການຂອງຕະຫລາດ.

- **ໝາກໄມ້ ແລະ ພືດໃຫ້ໝາກ:** ປູກເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກ ໂດຍສົ່ງເສີມໃຫ້ປູກໝາກມ່ວງຢູ່ເມືອງສາມັກຄີໄຊ ເຂດໝື່ນຫົວເມືອງ

**+ ສໍາລັບຜະລິດສັດ:**

- **ງົວ:** ການລ້ຽງງົວເປັນສິນຄ້າແມ່ນເລັ່ງໃສ່ ເຂດລຽບຕາມລໍານໍ້າເຊກອງ ເມືອງສະໜາມໄຊ; ເຂດຈຸດສຸມນໍ້າງອນ, ນໍ້າຊຸ, ຊໍາຫລວງ ເມືອງຊານໄຊ ແລະ ເຂດສົມບູນ ເມືອງພູວົງ ໂດຍສົ່ງເສີມບຸກຄົນ ແລະ ຜູ້ປະກອບການ ຫຼື ກຸ່ມຜູ້ຜະລິດສ້າງຟາມລ້ຽງງົວພື້ນເມືອງ ແລະ ງົວພັນຊີ້ນລູກປະສົມ; ຊຸກຍູ້ຜູ້ປະກອບການລົງທຶນເຂົ້າໃສ່ໃນການສ້າງຟາມລ້ຽງງົວນົມ ໃຫ້ໄດ້ 1 ແຫ່ງ.
- **ໝູ:** ສົ່ງເສີມລ້ຽງໝູພັນລູກປະສົມ ແລະ ພັນສາມສາຍເລືອດ ຢູ່ໃນເຂດທີ່ມີທ່າແຮງ.
- ນອກນັ້ນ ໃຫ້ສຸມໃສ່ການຜະລິດສັດອື່ນ ໄກ່ພັນໄຂ່, ໄກພັນຊີ້ນ ແລະ ປາ.

**+ ສໍາລັບການຄຸ້ມຄອງປ່າໄມ້:** ສໍາຫລວດ ແລະ ວາງແຜນການປູກ ແລະ ຟື້ນຟູ ຢ່າງມີເປົ້າໝາຍ ແລະ ຈຸດສຸມໂດຍການມີສ່ວນຮ່ວມຂອງປະຊາຊົນໃນການຄຸ້ມຄອງ ແລະ ປົກປັກຮັກສາ.

### 2.1.2. ອຸດສາຫະກໍາ ແລະ ການຄ້າ

⊕ **ທິດທາງ**

ພັດທະນາຂະແໜງອຸດສາຫະກໍາໃຫ້ມີການຂະຫຍາຍຕົວສູງທັງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມຫລາກຫລາຍໃນການຜະລິດເປັນສິນຄ້າ ແລະ ລັກສະນະທີ່ທັນສະໄໝຂຶ້ນກວ່າເກົ່າ, ໂດຍຕົ້ນຕໍແມ່ນຕ້ອງມີຄວາມສາມາດໃນການຕອບສະໜອງການບໍລິໂພກ ແລະ ອຸປະໂພກທັງພາຍໃນ ແລະ ສົ່ງອອກ, ກາຍເປັນຂະແໜງເສົາຄໍ້າໃນການປະກອບສ່ວນ ແລະ ຊຸກຍູ້ການເຕີບໂຕຂອງເສດຖະກິດທີ່ໝັ້ນທ່ຽງ, ມີຄຸນນະພາບ ແລະ ມີຄວາມຍືນຍົງ.

⊕ **ຄາດໝາຍ**

- ສູ້ຊົນເຮັດໃຫ້ອັດຕາການຂະຫຍາຍຕົວຂອງຂະແໜງອຸດສາຫະກຳປຸງແຕ່ງ ເພີ່ມຂຶ້ນສະເລ່ຍ 15% ຕໍ່ປີ ແລະ ຫັດຖະກຳຂະຫຍາຍຕົວສະເລ່ຍປະມານ 9,5% ຕໍ່ປີ.
- ສູ້ຊົນໃຫ້ມູນຄ່າການສົ່ງອອກຂະຫຍາຍຕົວສະເລ່ຍ 10% ຕໍ່ປີ, ການນຳເຂົ້າສະເລ່ຍ 5% ຕໍ່ປີ.
- ສູ້ຊົນເຮັດໃຫ້ມູນຄ່າຈໍລະຈອນສິນຄ້າ ຂະຫຍາຍຕົວ ສະເລ່ຍ 15%/ປີ

⊕ **ວຽກຈຸດສຸມ ແລະ ໂຄງການ**

- **ຂະແໜງອຸດສາຫະກຳປຸງແຕ່ງ:** ສູ້ຊົນພັດທະນາເຮັດໃຫ້ອຸດສາຫະກຳປຸງແຕ່ງສາມາດຜະລິດສິນຄ້າທີ່ມີຄວາມຫຼາກຫຼາຍ, ຂະຫຍາຍຕົວສູງທັງດ້ານປະລິມານ ແລະ ຄຸນນະພາບ ສາມາດຕອບສະໜອງຕໍ່ການບໍລິໂພກທັງພາຍໃນແຂວງ ແລະ ສົ່ງອອກຕ່າງແຂວງ ແລະ ຕ່າງປະເທດ ໂດຍເປັນຂະແໜງການທີ່ນຳໃຊ້ຜົນຜະລິດຈາກຂະແໜງກະສິກຳ-ປ່າໄມ້ເຂົ້າໃນການຜະລິດ ແລະ ຫັນເປັນອຸດສາຫະກຳປຸງແຕ່ງທີ່ທັນສະໄໝ, ນຳໃຊ້ເຕັກໂນໂລຊີທັນສະໄໝເຂົ້າໃນອຸດສາຫະກຳປຸງແຕ່ງ ເພື່ອໃຫ້ສາມາດຜະລິດແຂ່ງຂັນກັບພາຍໃນ ແລະ ຕ່າງປະເທດ ແລະ ກາຍເປັນຂະແໜງການພື້ນຖານຂອງເສດຖະກິດທີ່ສາມາດສ້າງວຽກເຮັດງານທຳໃຫ້ປະຊາຊົນ, ຊຸກຍູ້ອຸດສາຫະກຳປຸງແຕ່ງແບບຄອບຄົວ ໃຫ້ກວ້າງຂວາງ ແລະ ສົ່ງເສີມການຜະລິດເປັນສິນຄ້າ.
- **ຂະແໜງຫັດຖະກຳ:** ພັດທະນາຜະລິດຕະພັນຫັດຖະກຳທີ່ມີທ່າແຮງ ແລະ ມີມູນເຊື້ອຂອງແຕ່ລະທ້ອງຖິ່ນຕາມຄວາມຕ້ອງການສູງຂອງຕະຫລາດ ຢູ່ທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີຄຸນນະພາບສູງເຊັ່ນ: ຜະລິດຕະພັນຈັກສານ, ແກະສະລັກໄມ້, ຄວັດຫີນອ່ອນ, ເຄື່ອງປັ້ນດິນເຜົາ, ຕໍ່າແຜນຜ້າໄໝ-ແຜນແພບັນດາເຜົ່າ ແລະ ອື່ນໆ.
- **ຂະແໜງການຄ້າ**: ຊຸກຍູ້ ແລະ ດຶງດູດການລົງທຶນໃນການພັດທະນາຕະຫລາດລະດັບຕ່າງໆເປັນຕົ້ນ: ສ້າງຕະຫລາດຊາຍແດນ, ສູນການຄ້າ ແລະ ຕະຫລາດຫີນອ່ອນ.

### 2.1.3. ພະລັງງານ-ບໍ່ແຮ່

⊕ ***ທິດທາງ***

ພັດທະນາຂະແໜງພະລັງງານ ແລະ ບໍ່ແຮ່ໃຫ້ມີການຂະຫຍາຍຕົວສູງ ທັງດ້ານປະລິມານ ແລະ ຄຸນນະພາບ ໃນລັກສະນະທີ່ທັນສະໄໝຂຶ້ນກວ່າເກົ່າ, ເຮັດໃຫ້ກາຍເປັນຂະແໜງເສົາຄ້ຳ ປະກອບສ່ວນ ແລະ ຊຸກຍູ້ການເຕີບໂຕ, ເສດຖະກິດທີ່ໝັ້ນທ່ຽງ, ມີຄຸນນະພາບ ແລະ ມີຄວາມຍືນຍົງ; ຕົ້ນຕໍເລັ່ງໃສ່ນຳໃຊ້ທ່າແຮງທຳມະຊາດ, ເພື່ອພັດທະນາ ແຫລ່ງພະລັງງານໄຟຟ້ານ້ຳ, ພະລັງງານຊີວະພາບ, ຊີວະມວນ, ພະລັງງານລົມ, ພະລັງງານແສງຕາເວັນ ແລະ ພະລັງງານທົດແທນອື່ນໆທີ່ເປັນມິດກັບສະພາບແວດລ້ອມ; ສືບຕໍ່ພັດທະນາ ສາຍສົ່ງໄຟຟ້າເພື່ອສະໜອງໄຟຟ້າຮັບໃຊ້ການຜະລິດ, ການພັດທະນາພາຍໃນ ແລະ ສົ່ງອອກ; ສຸມໃສ່ຄຸ້ມຄອງຕິດຕາມກວດກາໂຄງການພັດທະນາບໍ່ແຮ່ ເຊັ່ນ: ແຮ່ຄຳວັງຕັດເມືອງຊານໄຊ, ຫີນອ່ອນ (ປາໂກໄດ) ເມືອງພູວົງທີ່ລັດຖະບານອະນຸຍາດ ແລະ ໂຄງການຂັ້ນແຂວງອະນຸຍາດ ເຊັ່ນ: ການຂຸດຄົ້ນຫີນກໍ່ສ້າງ, ຖ່ານຕົມ, ດິນໜຽວ ແລະ ອື່ນໆ ເພື່ອປຸງແຕ່ງປຸຍຊີວະພາບ, ເຄື່ອງປັ້ນດິນເຜົາ ແລະ ການກໍ່ສ້າງຕ່າງໆ;ຊຸກຍູ້ໃຫ້ເກີດກິດຈະການຂຸດຄົ້ນຜະລິດປຸງແຕ່ງຫີນກຣານິກ ຢູ່ເມືອງໄຊເສດຖາ ແລະ ກິດຈະການແຮ່ທາດອື່ນໆ ຕາມເງື່ອນໄຂທ່າແຮງຂອງແຂວງໃຫ້ສາມາດຈັດຕັ້ງປະຕິບັດໄດ້ຖືກຕ້ອງ, ສອດຄ່ອງຕາມລະບຽບກົດໝາຍ ແລະ ຕາມທິດພັດທະນາແບບຍືນຍົງ.

⊕ **ຄາດໝາຍສູ້ຊົນ**

- ຊຸກຍູ້ໃຫ້ສຳເລັດການກໍ່ສ້າງໂຮງງານໄຟຟ້າຂະໜາດໃຫຍ່ກວ່າ 15 MW ໃຫ້ໄດ້ 5 ແຫ່ງ ແລະ ເຂື່ອນໄຟຟ້າຂະໜາດຕໍ່າກວ່າ 15 MW ໃຫ້ໄດ້ 3 ແຫ່ງ.

- ຊຸກຍູ້ການລົງທຶນຂອງເອກະຊົນ, ການລົງທຶນຂອງໄຟຟ້າລາວ ເປັນຕົ້ນໂຄງການ RERIII, P2P ແລະ ໂຄງການລົງທຶນຂອງລັດເພື່ອສູ້ຊົນຂະຫຍາຍຕາໜ່າງໄຟຟ້າແຕ່ນີ້ຮອດປີ 2020 ໃຫ້ບ້ານມີໄຟຟ້າໃຊ້ຢ່າງຖາວອນ 100% ແລະ ຄົວເຮືອນໃຫ້ໄດ້ 98% ທົ່ວແຂວງ.

- ປະສານງານກັບສູນກາງ ເພື່ອຊຸກຍູ້-ສົ່ງເສີມໂຄງການບໍ່ແຮ່ຂອງ 03 ບໍລິສັດ ທີ່ລັດຖະບານອານຸຍາດ ຄື: ບໍລິສັດຫຸ້ນສ່ວນຫວຽດ-ລາວບໍ່ແຮ່ ຈຳກັດ ດຳເນີນການຂຸດຄົ້ນ-ປຸງແຕ່ງແຮ່ຄຳ ພາກຂະຫຍາຍຢູ່ເຂດບ້ານໜອງໄກ່ໂອກ ເມືອງຊານໄຊ; ບໍລິສັດລາວບໍລິການມາຍນິງຈຳກັດສະເໜີຂຸດຄົ້ນ-ປຸງແຕ່ງແຮ່ຄຳ ຢູ່ເຂດບ້ານດາກບ໋ອກ ເມືອງຊານໄຊ; ບໍລິສັດ ເຄເອັນການລົງທຶນ ແລະ ບໍ່ແຮ່ຈຳກັດ ສະເໜີຂຸດຄົ້ນ-ປຸງແຕ່ງແຮ່ຄຳ ຢູ່ເຂດບ້ານດອນຈັນ ເມືອງຊານໄຊ ແລະ ໂຄງການພັດທະນາບໍ່ແຮ່ຫີນອຸດສາຫະກຳຫີນອ່ອນ (ປາໂກໄດ) ຢູ່ເຂດພູກາງໂຮງ ເມືອງພູວົງ ໃຫ້ກ້າວໄປສູ່ຂັ້ນຕອນຂຸດຄົ້ນ-ປຸງແຕ່ງ ແລະ ສ້າງເປັນຜະລິດຕະພັນໂດຍຕິດພັນກັບການທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ.

⊕ **ວຽກຈຸດສຸມ ແລະ ໂຄງການ**

- ສຸມໃສ່ພັດທະນາໂຄງການໄຟຟ້າ ຈາກແຫຼ່ງພະລັງງານນ້ຳ, ພະລັງານແສງຕາເວັນ, ພະລັງງານລົມ, ພະລັງງານທົດແທນຈາກຊີວະພາບ, ຊີວະມວນ ເພື່ອໃຫ້ກາຍເປັນຂະແໜງການສ້າງລາຍຮັບທີ່ມີຄວາມໝັ້ນຄົງ ແລະ ຍືນຍົງໃນອານາຄົດ
- ສືບຕໍ່ກໍ່ສ້າງຕາຂ່າຍໄຟຟ້າ 22/0,4 KV ໄປສູ່ເຂດຊົນນະບົດ 3 ເມືອງ (ຊານໄຊ, ພູວົງ ແລະ ສະໜາມໄຊ)
- ສືບຕໍ່ກໍ່ສ້າງສາຍສົ່ງໄຟຟ້າ 115-230 KV ຈາກເຂື່ອນໄຟຟ້າເຊກະໜານ 1 - ປຣາໄລກູ ສສ ຫວຽດນາມ;
- ສືບຕໍ່ກໍ່ສ້າງສາຍສົ່ງໄຟຟ້າ 115 KV ຈາກເຂື່ອນໄຟຟ້າ ນ້ຳກົງ 2-3 ຫາ ສະຖານີໄຟຟ້າສະເພົາທອງ
- ສືບຕໍ່ກໍ່ສ້າງເຂື່ອນໄຟຟ້າເຊກະໜານ 1, ເຊກະໜານຊານໄຊ, ນ້ຳກົງ 2-3, ເຊປຽນ-ເຊນ້ຳນ້ອຍໃຫ້ສຳເລັດ;
- ສືບຕໍ່ ຕິດຕາມ ຊຸກຍູ້ ໂຄງການໄຟຟ້າຕ່ຳກ່ວາ 15 ເມກາວັດ (MW) ທີ່ແຂວງອະນຸມັດ ແລະ ໂຄງການທີ່ໄດ້ຮັບອານຸຍາດພັດທະນາໂຄງການແລ້ວ ໃຫ້ໄດ້ດຳເນີນການກໍ່ສ້າງຕາມແຜນການທີ່ວາງໄວ້;
- ສືບຕໍ່ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ບັນດາໂຄງການຂຸດຄົ້ນ-ປຸງແຕ່ງແຮ່ທາດທີ່ລັດຖະບານອະນຸມັດໂດຍໃຫ້ແຂວງມີສ່ວນຮ່ວມ ແລະ ສາມາດຈັດຕັ້ງປະຕິບັດຕາມລະບຽບກົດໝາຍ.

ພ້ອມກັນນັ້ນ ການພັດທະນາແມ່ນໃຫ້ຕິດພັນກັບການປົກປັກສາສິ່ງແວດລ້ອມ ແລະ ຄວາມຍືນຍົງ ເຊັ່ນ: ໂຄງການຂຸດຄົ້ນແຮ່ຄຳ ຂອງບໍລິສັດ ຮຸ້ນສ່ວນຫວຽດ-ລາວ ບໍ່ແຮ່ ຈຳກັດ, ບໍລິສັດ ລາວບໍລິການມາຍນິງ ຈຳກັດ, ບໍລິສັດ ເຄເອັນ ການລົງທຶນ ແລະ ບໍ່ແຮ່ຈຳກັດ, ໂຄງການພັດທະນາແຫຼ່ງຫີນອ່ອນ (ປາໂກໄດ) ຢູ່ເຂດເມືອງພູວົງ.

### 2.1.4. ໂຍທາທິການ-ຂົນສົ່ງ

⊕ **ທິດທາງ**

ສືບຕໍ່ພັດທະນາລະບົບຄົມມະນາຄົມຂົນສົ່ງໂດຍສານ ແລະ ຂົນສົ່ງສິນຄ້າໃຫ້ມີຄຸນນະພາບ, ມີຄວາມສະດວກ ແລະ ວ່ອງໄວ ເພື່ອກາຍເປັນສູນກາງໃນກິດຈະການບໍລິການຜ່ານແດນຂອງເຂດ 3 ຫລ່ຽມພັດທະນາ ແລະ ອະນຸພາກພື້ນ, ພ້ອມດຽວກັນນັ້ນ ປັບປຸງ ແລະ ກໍ່ສ້າງ, ຂະຫຍາຍເສັ້ນທາງໃຫ້ເພີ່ມຂຶ້ນ ແລະ ໄດ້ມາດຕະຖານ ເພື່ອຮັບປະກັນໃນການບໍລິການຂົນສົ່ງສິນຄ້າ ແລະ ມີການເຊື່ອມຈອດກັບບັນດາແຂວງພາຍໃນ ແລະ ບັນດາແຂວງຂອງເຂດ 3 ຫລ່ຽມພັດທະນາ ໂດຍສະເພາະກຳປູເຈຍ, ອະນຸພາກພື້ນ ແລະ ສາກົນ, ກໍ່ສ້າງເສັ້ນທາງແຕ່ເມືອງຫາກຸ່ມບ້ານ-ບ້ານ ໃຫ້ທ່ຽວໄດ້ 2 ລະດູ, ລົບລ້າງທາງດິນແດງພາຍໃນເທດສະບານແຂວງ; ສ້າງສິ່ງອຳນວຍຄວາມສະດວກຕ່າງໆຕາມເສັ້ນທາງເປັນຕົ້ນ: ຈຸດພັກລົດ, ສາງສິນຄ້າ, ສະຖານີລົດ ແລະ ສ້າງສູນເຕົ້າໂຮມ ແລະ ແຈກຢາຍສິນຄ້າ; ປັບປຸງດ້ານເຂົ້າ-ອອກການບໍລິການ

ຜ່ານຊາຍແດນດ່ານສາກົນພູເກືອ, ດ່ານທ້ອງຖິ່ນຕ່າງໆ ໃຫ້ໄດ້ມາດຕະຖານສາກົນສາມາດຮອງຮັບການເຮັດບໍລິການຜ່ານໃຫ້ມີຄວາມສະດວກ ແລະ ວ່ອງໄວ; ປັບປຸງ ແລະ ຍົກສູງຄຸນນະພາບຂອງການບໍລິການນ້ຳປະປາຢູ່ເທດສະບານແຂວງ ແລະ ຂະຫຍາຍນ້ຳປະປາຢູ່ 3 ຕົວເມືອງທີ່ຍັງເຫລືອ, ສຳຫລວດ ແລະ ອອກແບບຕາຜັງກຸ່ມບ້ານສາມສ້າງ, ຄຸ້ມຄອງເທດສະບານແຂວງ ແລະ ເມືອງຕ່າງໆໃຫ້ສະອາດ ແລະ ຂຽວງາມ.

⊕ **ຄາດໝາຍສູ້ຊົນ**

**+ ດ້ານຂົວ-ທາງ**

- ສູ້ຊົນຂະຫຍາຍຕາໜ່າງເສັ້ນທາງພາຍໃນແຂວງໃຫ້ທົ່ວເຖິງ ແລະ ທ່ຽວໄດ້ສອງລະດູ, ໄປພ້ອມໆກັບການປັບປຸງຂະຫຍາຍເສັ້ນທາງຫຼວງແຫ່ງຊາດ ໃຫ້ສາມາດຮັບປະກັນໃນການສັນຈອນໄປມາໃຫ້ໄດ້ຮັບປະລິມານແລະຄຸນນະພາບ.
- ສູ້ຊົນໃຫ້ມີເສັ້ນທາງປູຢາງລະຫວ່າງແຂວງຫາເທດສະບານເມືອງ ແລະ ເຂດຈຸດສຸມສາມສ້າງ
- ສູ້ຊົນໃຫ້ສຳເລັດການສຳຫຼວດ-ອອກແບບ ແລະ ກໍ່ສ້າງທາງເສັ້ນທາງລຽບຕາມຊາຍແດນ.
- ສູ້ຊົນພັດທະນາລະບົບການຄຸ້ມຄອງທາງທ້ອງຖິ່ນຊົນນະບົດແບບມີສ່ວນຮ່ວມຂອງຊຸມຊົນ.

**+ ດ້ານການຂົນສົ່ງ**

- ສູ້ຊົນໃນພັດທະນາການຂົນສົ່ງທາງບົກ-ທາງອາກາດ ໃຫ້ມີການຂະຫຍາຍຕົວຂຶ້ນເທື່ອລະກ້າວ ແລະ ມີຄວາມເຂັ້ມແຂງຂຶ້ນ, ຄຸນນະພາບດ້ານການຈັດຕັ້ງຂອງສະມາຄົມຂົນສົ່ງທາງບົກ ແລະ ທາງອາກາດໃຫ້ໄດ້ຮັບການຍົກສູງຂຶ້ນແລະລະບຽບການຕ່າງໆຈະຕ້ອງໄດ້ມີການປັບປຸງໃຫ້ເໝາະສົມກັບສະພາບຕົວຈິງ, ສ້າງລະບຽບການຂົນສົ່ງຜ່ານແດນ ແລະ ອື່ນໆອີກຕາມຄວາມຈຳເປັນຕົວຈິງ.

- ສູ້ຊົນຊຸກຍູ້ຕິດຕາມ ແລະ ກວດກາພາຫານະໃຫ້ໄດ້ຕາມມາດຖານທາງດ້ານເຕັກນິກ ແລະ ການຂົນສົ່ງໃຫ້ມີປະສິດທິຜົນສູງກວ່າເກົ່າ, ຢຸດເຊົາການນຳໃຊ້ພາຫະນະທີ່ມີການດັດແປງເຕັກນິກ ແລະ ອາຍຸການນຳໃຊ້ເກີນ 15 ປີ, ປັບປຸງລະບົບກວດກາເອກະສານໃຫ້ເຂົ້າກັບສາກົນ.

- ສູ້ຊົນລົງເຜີຍແຜ່ກົດລະບຽບຈາລະຈອນໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ, ເອົາກົດລະບຽບຈາລະຈອນເຂົ້າໃນຫລັກສູດການສິດສອນຢູ່ໂຮງຮຽນປະຖົມ ແລະ ມັດທະຍົມຂອງເມືອງເທດສະບານ.

- ສູ້ຊົນລົງເຜີຍແຜ່ກົດໝາຍວ່າດ້ວຍທາງຫລວງ ແລະ ກົດໝາຍວ່າດ້ວຍຜັງເມືອງໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

**+ ວຽກງານເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ**

- ບັນດາຕົວເມືອງບ້ານຕ່າງໆພາຍໃນແຂວງ ຕ້ອງໄດ້ສຳເລັດການສຳຫລວດ-ອອກແບບວາງແຜນຜັງເມືອງເພື່ອເປັນພື້ນຖານໃນການພັດທະນາແບບຍືນຍົງ ແລະ ການເປັນຕົວເມືອງໃນອານາຄົດ, ຄຸ້ມຄອງຕົວ ເມືອງເອກຂອງແຂວງ, ບັນດາຕົວເມືອງຂອງເມືອງ ແລະ ກຸ່ມບ້ານໃຫ້ມີການພັດທະນາຕາມລະບຽບກຳນົດໄວ້ ເພື່ອໃຫ້ຕົວເມືອງພັດທະນາທີ່ເປັນລະບຽບ, ຈົບງາມ ຮັກສາໄດ້ຄວາມສະອາດ ແລະ ເອກະລັກດ້ານສະຖາປັດຕິຍະກຳຂອງຊາດເຮົາ.
- ເອົາໃຈໃສ່ຄົ້ນຄວ້າສິ່ງເສີມເອກະລັກດ້ານສະຖາປັດຕິຍະກຳຂອງຊົນເຜົ່າພາຍໃນແຂວງ ແລະ ບັນດາອາຄານທີ່ມີຄວາມໝາຍທາງດ້ານປະຫວັດສາດ, ຊອກຄົ້ນແຫລ່ງວັດສະດຸທ້ອງຖິ່ນ ເພື່ອນພາໃຊ້ໃນການກໍ່ສ້າງພື້ນຖານໂຄງລ່າງຕົວເມືອງ ແລະ ນ້ຳປະປາສາທາລະນຸປະໂພກ ຕ້ອງໄດ້ຮັບການກໍ່ສ້າງ ແລະ ປັບຢ່າງກວ້າງຂວາງ, ດ້ານເຕັກນິກກໍ່ສ້າງອາຄານຕ່າງໆພາຍໃນແຂວງຕ້ອງໄດ້ຄຸນນະພາບມາດຕາຖານ, ການຄຸ້ມຄອງວັດສະດຸ ແລະ ລາຄາຫົວໜ່ວຍກໍ່ຕ້ອງມີການປັບປຸງປະຕິບັດຢ່າງເຂັ້ມງວດ ເພື່ອຮັບປະກັນໃນ ການກໍ່ສ້າງອາຄານຕ່າງໆພາຍໃນແຂວງໃຫ້ໄດ້ຮັບປະສິດທິຜົນ.

- ສະໜອງນໍ້າປະປາໃຫ້ປະຊາຊົນພາຍໃນເທດສະບານແຂວງມີນໍ້າປະປາໃຊ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ ໂດຍການປັບປຸງ ແລະ ຂະຫຍາຍລະບົບນໍ້າປະປາ, ຂະຫຍາຍລົງສູ່ບັນດາເມືອງຕ່າງໆເປັນຕົ້ນ: ປັບປຸງ ແລະ ປ່ຽນຖ່າຍຕະໜ່າງທໍ່ນໍ້າປະປາເທດສະບານແຂວງຈາກທໍ່ເຫັລກມາເປັນທໍ່ຢາງ, ພ້ອມທັງເພີ່ມກໍາລັງການຜະລິດຂຶ້ນໃຫ້ໄດ້ຕາມຄວາມຕ້ອງການການຊົມໃຊ້ຂອງສັງຄົມ.

### 2.1.5. ໄປສະນີ ແລະ ໂທລະຄົມມະນາຄົມ

**⊕ ທິດທາງ :**

ສົ່ງເສີມການພັດທະນາໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມ ແລະ ຂໍ້ມູນຂ່າວສານທາງເອເລັກໂຕຣນິກທີ່ມີຄວາມໄວສູງໃຫ້ຂະຫຍາຍຕົວຢ່າງໄວແລະມີຄຸນນະພາບ ເພື່ອສ້າງໃຫ້ເປັນຂະແໜງບໍລິການທີ່ທັນສະໄໝ, ຊ່ວຍອໍານວຍຄວາມສະດວກໃຫ້ແກ່ການຄ້າຂາຍຜ່ານທາງເອເລັກໂຕຣນິກ ແລະ ຂັບເຄື່ອນອັດຕາຄວາມໄວຂອງການພັດທະນາເສດຖະກິດແລະ ສັງຄົມໃຫ້ເຂັ້ມແຂງ.

**⊕ ຄາດໝາຍສູ້ຊົນ:**

- ສືບຕໍ່ລົງກວດກາ ແລະ ຄຸ້ມຄອງ ບັນດາຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງຕ່າງໆທີ່ເປີດໃຫ້ບໍລິການຮ້ານຂາຍ-ສ້ອມແປງໂທລະສັບ, ຮ້ານອິນເຕີເນັດ ຄາເຟ ແລະ ຮ້ານຂາຍເຄື່ອງຄອມພິວເຕີ ຢູ່ພາຍໃນແຂວງຕ້ອງໄດ້ຂຶ້ນທະບຽນຢ່າງຖືກຕ້ອງ ແລະ ສາມາດເກັບກໍາຂໍ້ມູນໄດ້ 100%.
- ຈັດສັນ ແລະ ຄຸ້ມຄອງການນໍາໃຊ້ຊັບພະຍາກອນໂທລະຄົມໂດຍສະເພາະແມ່ນຄື້ນຄວາມຖີ່, ຂອງບັນດາອົງການຈັດຕັ້ງລັດ, ບຸກຄົນ, ນິຕິບຸກຄົນ ທີ່ນໍາໃຊ້ວິທະຍຸສື່ສານ (ໂຟນີ) ໃຫ້ມາຂຶ້ນທະບຽນຕາມລະບຽບ.
- ຊຸກຍູ້ ແລະ ສົ່ງເສີມບັນດາຫົວໜ່ວຍທຸລະກິດທີ່ໃຫ້ບໍລິການດ້ານໂທລະຄົມພາຍໃນແຂວງ ຂະຫຍາຍລະບົບພື້ນຖານໂຄງລ່າງໂທລະຄົມລົງສູ່ເຂດຊົນນະບົດເຂດຫ່າງໄກສອກຫຼີກ, ຂະຫຍາຍສັນຍານໂທລະສັບກວມເອົາ 100% ຂອງພື້ນທີ່ທົ່ວແຂວງ, ຂະຫຍາຍເຄືອຂ່າຍອິນເຕີເນັດ 3ຈີ ແລະ ລະບົບສາຍໃຍແກ້ວລົງສູ່ກຸ່ມບ້ານທີ່ມີເງື່ອນໄຂ.
- ຄົ້ນຄວ້າ ແລະ ຝຶກອົບຮົມວຽກງານໄອທີ ໃຫ້ແກ່ພະນັກງານນໍາພາ, ຄຸ້ມຄອງ ແລະ ວິຊາການ ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.
- ຊຸກຍູ້ ແລະ ສົ່ງເສີມ ບັນດາຫົວໜ່ວຍທຸລະກິດ, ບໍລິສັດພາຍໃນ ແລະ ຕ່າງປະເທດ ທີ່ມາດໍາເນີນທຸລະກິດພາຍໃນແຂວງຕ້ອງສ້າງເວັບໄຊເປັນຂອງຕົນເອງ ໂດຍໃສ່ຊື່ເວບໄຊທີ່ລົງທ້າຍດ້ວຍ (LA) ເຊິ່ງເປັນລະຫັດເວບໄຊ ຂອງ ສປປ ລາວ.
- ຂະຫຍາຍຕາໜ່າງການບໍລິການໄປສະນີລົງສູ່ບ້ານທີ່ມີເງື່ອນໄຂ.

**⊕ ວຽກຈຸດສຸມ ແລະ ໂຄງການຕົ້ນຕໍ:**

- ໂຄສະນາ ແລະ ເຜີຍແຜ່ບັນດານິຕິກໍາຕ່າງໆທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ສັງຄົມຢ່າງກວ້າງຂວາງ ໃນເງື່ອນໄຂທີ່ປະເທດ ກໍຄືແຂວງ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.
- ຄຸ້ມຄອງຄື້ນຄວາມຖີ່ວິທະຍຸ ແລະ ອຸປະກອນສື່ສານໃຫ້ສາມາດກວດກາ ແລະ ຕິດຕາມໄດ້.
- ສ້າງ ແລະ ປັບປຸງລະບົບຖານຂໍ້ມູນຂ່າວສານໃຫ້ມີປະສິດທິຜົນ ແລະ ທັນກັບສະພາບການ.

### 2.1.6. ການເງິນ-ການທະນາຄານ

#### (1) ດ້ານການເງິນ

**ກ. ການເກັບລາຍຮັບ**

⊕ **ທິດທາງ**

ເພີ່ມທະວີຈິດໃຈເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໂດຍຫລຸດຜ່ອນການເອື່ອຍອີງຈາກສູນກາງ ແລະ ພາຍນອກ ໂດຍຂຸດຄົ້ນແຫຼ່ງລາຍຮັບງົບປະມານທີ່ມີລັກສະນະໝັ້ນທ່ຽງ ແລະ ລະດົມແຫຼ່ງທຶນຈາກທຸກພາກສ່ວນເສດຖະກິດ ເພື່ອສ້າງພື້ນຖານການເງິນໃຫ້ມີຄວາມໜັກແໜ້ນ ແລະ ຍືນຍົງ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ; ປະຕິບັດນະໂຍບາຍການເງິນຢ່າງເໝາະສົມ, ສອດຄ່ອງ ແລະ ກົມກຽວກັບແຜນພັດທະນາເສດຖະກິດ-ສັງຄົມ ເພື່ອຊຸກຍູ້ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດໂດຍສະເພາະທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງໃຫ້ມີການຂະຫຍາຍຕົວໄວຂຶ້ນ ແລະ ສາມາດແຂ່ງຂັນໄດ້ໃນເງື່ອນໄຂເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ພ້ອມດຽວກັນນັ້ນ, ກໍຕ້ອງເກັບກຳໃຫ້ໄດ້ບັນຊີຫົວໜ່ວຍທຸລະກິດຕ່າງໆທີ່ເຄື່ອນໄຫວຢູ່ພາຍໃນແຂວງເພື່ອໃຫ້ສາມາດເກັບລາຍຮັບເຂົ້າງົບປະມານໄດ້ຕາມແຜນທີ່ວາງໄວ້.

**ຂ. ຄຸ້ມຄອງລາຍຈ່າຍ**

⊕ **ທິດທາງ:**

ຄຸ້ມຄອງການເງິນແຫ່ງລັດດ້ວຍກົດໝາຍ, ດັດປັບລາຍຈ່າຍໃນແຕ່ລະຂົງເຂດ ໃຫ້ສົມດຸນລະຫວ່າງລາຍຈ່າຍບໍລິຫານ ແລະ ລາຍຈ່າຍການລົງທຶນ, ລາຍຈ່າຍໃນຂົງເຂດເສດຖະກິດ ແລະ ຂົງເຂດວັດທະນະທຳ-ສັງຄົມ; ສືບຕໍ່ປະຕິບັດວິໄນການເງິນ-ງົບປະມານຢ່າງເຂັ້ມງວດ, ເພີ່ມມາດຕະການໃນການປະຢັດມັດທະຍັດລາຍຈ່າຍບໍລິຫານ, ສະກັດກັ້ນການໃຊ້ຈ່າຍຟຸມເຟືອຍ, ຕ້ານການສໍ້ລາດບັງຫຼວງ; ຫັນການຄຸ້ມຄອງທຸກແຫຼ່ງລາຍຮັບ-ລາຍຈ່າຍການເງິນຂອງລັດເຂົ້າໃນກອບແຜນງົບປະມານແຫ່ງລັດອັນດຽວ; ເຮັດໃຫ້ລະບົບການເງິນແຫ່ງລັດມີຄວາມໂປ່ງໃສ, ສາມາດກວດສອບໄດ້, ຫຼຸດຜ່ອນການຂາດດຸນງົບປະມານ ແລະ ບໍລິຫານໜີ້ສິນ;

ເພື່ອເຮັດໃຫ້ການເກັບລາຍຮັບ ແລະ ລາຍຈ່າຍມີການເພີ່ມຂຶ້ນ ຕ້ອງສຸມໃສ່ໜ້າວຽກຕົ້ນຕໍລຸ່ມນີ້:

⊕ **ຄາດໝາຍ**

- ສູ້ຊົນເກັບລາຍຮັບລວມໃຫ້ບໍ່ຫລຸດ 930,34 ຕື້ກີບ, ໃນນັ້ນ:
  - ລາຍຮັບຈາກອາກອນໃຫ້ໄດ້ 704,44 ຕື້ກີບ
  - ລາຍຮັບຈາກທີ່ດິນໃຫ້ໄດ້ 9,52 ຕື້ກີບ
  - ລາຍຮັບຈາກຊັບສິນໃຫ້ໄດ້ 99,70 ຕື້ກີບ
  - ລາຍຮັບວິສາຫະກິດ 109,84 ລ້ານກີບ
  - ລາຍຮັບພາສີ 10% 116,57 ຕື້ກີບ
- ຄຸ້ມຄອງລາຍຈ່າຍໃຫ້ບໍ່ໃຫ້ເກີນ 1.555,84 ຕື້ກີບ, ໃນນັ້ນ:
  - ເງິນເດືອນ 1.050,04 ຕື້ກີບ
  - ເງິນອຸດໜູນ 135,47 ຕື້ກີບ
  - ເງິນບໍລິຫານ 186,22 ຕື້ກີບ
  - ເງິນດັດສົມ 97,27 ຕື້ກີບ
  - ຈ່າຍບັງເອີນ 10,08 ຕື້ກີບ
  - ເງິນຊື້ເຊົ່າຊັບສົມບັດຄົງທີ່ 76,76 ຕື້ກີບ

⊕ **ວຽກຈຸດສຸມ ແລະ ໂຄງການ:**

- ສືບຕໍ່ປັບປຸງການຈັດຕັ້ງຂອງຂະແໜງການເງິນໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ເພື່ອໃຫ້ກາຍເປັນໜ່ວຍພັກແຂງ-ຮູ້ນະພາຮອບດ້ານ ໂດຍສຸມໃສ່ພັດທະນາພະນັກງານ-ລັດຖະກອນຂະແໜງການເງິນ ໃຫ້ມີຄຸນທາດການເມືອງໜັກແໜ້ນ ແລະ ມີຄວາມຮູ້ຄວາມສາມາດດ້ານວິຊາສະເພາະໃນລະດັບທີ່ແນ່ນອນ

- ສ້າງພື້ນຖານການເງິນຂອງແຂວງໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລ ມີຄວາມຍືນຍົງ, ຂຸດຄົ້ນທຸກແຫຼ່ງລາຍຮັບທີ່ຍັງບົ່ມຊ້ອນໃຫ້ຫລາຍຂຶ້ນ ເພື່ອຕອບສະໜອງຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

- ປັບປຸງກົນໄກການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ, ການຄຸ້ມຄອງໜີ້ສິນ ແລະ ການດຸນດ່ຽງງົບປະມານ, ຍົກສູງປະສິດທິພາບຂອງການນຳໃຊ້ງົບປະມານລັດ.

- ເຜີຍແຜ່-ແຜ່ຜັນຂະຫຍາຍກົດໝາຍ ແລະ ບັນດານິຕິກຳດ້ານການເງິນຢ່າງກວ້າງຂວາງ

- ພັດທະນາເຄື່ອງມືໃນການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານໃຫ້ມີຄວາມທັນສະໄໝ, ປັບປຸງລະບົບການເຊື່ອມໂຍງຂໍ້ມູນຂ່າວສານດ້ານການເງິນລະຫວ່າງ ກັບບັນດາຂະແໜງການ, ທ້ອງຖິ່ນ ແລະ ລະບົບທະນາຄານ ແລະ ສາຍຕັ້ງ.

**(2) ດ້ານທະນາຄານ**

**⊕ ທິດທາງ**

ຍົກສູງຄຸນນະພາບຂອງການບໍລິການຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ໄດ້ຕາມມາດຕະຖານສາກົນ, ມີຄວາມສະດວກ, ວ່ອງໄວ ເພື່ອເປັນການຊຸກຍູ້ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ. ພ້ອມດຽວກັນນັ້ນ, ກໍຕ້ອງຂະຫຍາຍຕະໜ່າງບໍລິການໃຫ້ໄດ້ໄດ້ໃນທຸກເມືອງ ແລະ ເຂດຈຸດສູມການພັດທະນາຕ່າງໆຂອງແຂວງທີ່ມີເງື່ອນໄຂ.

## 2.2. ການພັດທະນາຂົງເຂດສັງຄົມ

### 2.2.1. ການສຶກສາ, ພັດທະນາຊັບພະຍາກອນມະນຸດ ແລະ ກິລາ

**⊕ ທິດທາງ**

ພັດທະນາການສຶກສາ ແລະ ກິລາ ຖືເປັນວຽກງານບຸລິມະສິດ ແລະ ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ແລະ ຍຶດໝັ້ນໃນ 3 ລັກສະນະ ແລະ 5 ຫລັກມູນຂອງການສຶກສາແຫ່ງຊາດ, ເອົາການສຶກສາ ແລະ ກິລາເຂົ້າເຖິງທຸກກຸ່ມຄົນ ໂດຍບໍ່ຈຳແນກເຜົ່າ, ເພດ ແລະ ອາຍຸ. ສືບຕໍ່ດຳເນີນການປະຕິຮູບການສຶກສາ ແລະ ການປັບປຸງວຽກງານກິລາ-ກາຍຍະກຳໃຫ້ມີການຫັນປ່ຽນ ໂດຍການບຸກທະລຸສູ່ຄຸນນະພາບທີ່ສາມາດເຊື່ອມໂຍງກັບລະດັບການສຶກສາ ແລະ ກິລາຂອງພາກພື້ນ ແລະ ສາກົນ. ສ້າງຄົນລາວໃຫ້ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນານງານ, ມີສຸຂະພາບເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈ.

ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍສະຫັດສະວັດດ້ານການພັດທະນາ ທີ່ບໍ່ທັນສາມາດບັນລຸໄດ້ໃນປີ 2015 ໃຫ້ສຳເລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ໂດຍສະເພາະແມ່ນການຈົບຊັ້ນປະຖົມພາກບັງຄັບ ແລະ ກ້າວເຂົ້າສູ່ການສຶກສາພາກບັງຄັບຊັ້ນມັດທະຍົມຕົ້ນ.

ສືບຕໍ່ພັດທະນາພື້ນຖານໂຄງລ່າງການກິລາ ໃຫ້ສາມາດຮັບຮອງການເປັນເຈົ້າພາບກິລາແຫ່ງຊາດຄັ້ງທີ XII ປີ 2020, ປັບປຸງສະມາຄົມກິລາ-ກາຍຍະກຳ ແລະ ສະຫາພັນກິລາປະເພດຕ່າງໆ ແລະ ບຸກຄະລາກອນກິລາ ເພື່ອເຂົ້າຮ່ວມງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI ປີ 2017 ທີ່ແຂວງຊຽງຂວາງ ໃຫ້ມີຜົນສຳເລັດລື່ນກວ່າຄັ້ງທີ່ຜ່ານມາ. ຂະຫຍາຍການຮຽນ-ການສອນວິຊາກິລາ ແລະ ວິຊາສຶກສາກິລາປ້ອງກັນຊາດໃຫ້ທົ່ວເຖິງ, ຕ້ານ ແລະ ສະກັດກັ້ນຢາເສບຕິດໃນໝູ່ນັກຮຽນໃຫ້ຫລຸດໜ້ອຍຖອຍລົງ ແລະ ປອດຢາເສບຕິດໃນໂຮງຮຽນ.

⊕ **ຄາດໝາຍຕົ້ນຕໍ:**

- ຮອດປີ 2020 ເຮັດໃຫ້ເດັກໃນເກນອາຍຸ 0-2 ປີ ໄດ້ເຂົ້າຮຽນ 5%, 3-4 ປີ ໄດ້ເຂົ້າຮຽນ 45%, 3-5 ປີ ໄດ້ເຂົ້າຮຽນ 55%.
- ອັດຕາເຂົ້າຮຽນລວມຂອງເດັກອາຍຸ 5 ປີ ໃຫ້ໄດ້ 70% ແລະ ອັດຕາເຂົ້າຮຽນ 6 ປີ ໃຫ້ໄດ້ 100%.
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ 6-10 ປີໃຫ້ໄດ້ 99%, ອັດຕາລອດເຫຼືອຂອງນັກຮຽນຊັ້ນປະຖົມ ໃຫ້ໄດ້ 98%, ອັດຕາຄ້າງຫ້ອງ ໃຫ້ໄດ້ 0,5%, ອັດຕາປະລະ 0,5%.
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 85%, ຈັດສັນນັກຈົບຊັ້ນມັດທະຍົມຕົ້ນເຂົ້າຮຽນໃນສາຍວິຊາຊີບ ໃຫ້ໄດ້ 30% ແລະ ຮຽນຕໍ່ມັດທະຍົມປາຍ 60%.
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນປາຍ 75%,
- ເພີ່ມອັດຕາການຮູ້ໜັງສືຂອງປະຊາກອນ ໃນກຸ່ມອາຍຸ 15-24 ປີ ໃຫ້ໄດ້ 99% ແລະ ໃນກຸ່ມອາຍຸ 15 ປີຂຶ້ນໄປໃຫ້ໄດ້ 95%,
- ດັດສະນີຄວາມສະເໝີພາບລະຫວ່າງຍິງ-ຊາຍ ໂດຍສະເລ່ຍທຸກຊັ້ນ-ທຸກສາຍ ຢູ່ໃນລະດັບ 0,98
- ສົ່ງເສີມໃຫ້ທຸກຄົນໃນສັງຄົມໄດ້ອອກກຳລັງກາຍ ແລະ ການຫລິ້ນກິລາ-ກາຍຍະກຳໃຫ້ໄດ້ 30% ຂອງປະຊາກອນທັງໝົດ.
- ລະດັບຄວາມສາມາດເຂົ້າຮ່ວມການແຂ່ງຂັນກິລາປະເພດຕ່າງໆໃນລະດັບພາກພື້ນ ແລະ ສາກົນ

⊕ **ວຽກງານຈຸດສຸມ, ແຜນງານ ແລະ ໂຄງການຕົ້ນຕໍ**

**ກ. ແຜນງານ**

(1) ແຜນງານ ຂະຫຍາຍໂອກາດເຂົ້າເຖິງການສຶກສາ ແລະ ກິລາ

(2) ແຜນງານ ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ.

(3) ແຜນງານ ສ້າງຄວາມເຂັ້ມແຂງການຄຸ້ມຄອງ ແລະ ບໍລິຫານການສຶກສາ-ກິລາ

**ຂ. ໂຄງການ**

(1) ໂຄງການ ພັດທະນາການສຶກສາຂັ້ນພື້ນຖານ

(2) ໂຄງການ ສ້າງຄວາມເຂັ້ມແຂງໃຫ້ວຽກງານອາຊີວະສຶກສາ

(3) ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສຶກສາຊັ້ນສູງ

(4) ໂຄງການ ສຶກສາຮຽນຮ່ວມ

(5) ໂຄງການ ກໍ່ສ້າງຫໍພັກນັກຮຽນໃຫ້ຜູ້ຢູ່ໄກຈາກໂຮງຮຽນ

(6) ໂຄງການ ປັບສະພາບແວດລ້ອມໃນໂຮງຮຽນມັດທະຍົມ

(7) ໂຄງການ ສົ່ງເສີມຊຸມຊົນ ເພື່ອການພັດທະນາສຶກສາ

(8) ໂຄງການ ຍ່ອຍອື່ນໆທີ່ຈັດຕັ້ງໂດຍອີງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ.

### 2.2.2. ສາທາລະນະສຸກ ແລະ ໂພສະນາການ

⊕ **ທິດທາງ**

ຫັນເອົາວຽກງານສາທາລະນະສຸກໃຫ້ກາຍເປັນຂອງທົ່ວປວງຊົນ, ຍົກສູງຖານະສຸຂະພາບຂອງປະຊາຊົນບັນດາເຜົ່າໃຫ້ມີຄວາມສົມບູນຂຶ້ນ ໂດຍຮັບປະກັນໃຫ້ເຂົາເຈົ້າໄດ້ເຂົ້າເຖິງການບໍລິການຮັກສາສຸຂະພາບທີ່ມີຄຸນນະພາບ, ມີ

ຄວາມສະເໝີພາບ ແລະຍຸດຕິທຳ. ປັບປຸງ ແລະ ຂະຫຍາຍໂຄງລ່າງພື້ນຖານດ້ານສາທາລະນະສຸກໃຫ້ໄປເຖິງຊົນນະບົດ ບ່ອນຫ່າງໄກສອກຫຼີກ; ຄຽງຄູ່ກັນນັ້ນ, ກໍຕ້ອງຍົກລະດັບຄວາມສາມາດດ້ານການຄຸ້ມຄອງ ແລະ ດ້ານວິຊາການໃນການ ປິ່ນປົວແຕ່ລະຂັ້ນຂອງການບໍລິການໃຫ້ສູງຂຶ້ນ ໂດຍສະໜອງ ແລະ ສ້າງໃຫ້ໄດ້ພະນັກງານແພດ, ພະຍາບານມີຄວາມຊຳ ນິຊຳນານ ແລະ ມີຈັນຍາບັນ, ທັດສະນະຮັບໃຊ້, ບໍລິການທີ່ດີ ແລະ ນຳໃຊ້ເຕັກໂນໂລຊີຢ່າງເໝາະສົມ ເພື່ອຍົກສູງຄຸນນະ ພາບຂອງການບໍລິການຮັກສາສຸຂະພາບ; ຂະຫຍາຍກອງທຶນປະກັນສຸຂະພາບໃນທົ່ວສັງຄົມ ເພື່ອໃຫ້ເຂົາເຈົ້າໄດ້ຮັບການ ບໍລິການຮັກສາສຸຂະພາບໃນເວລາເຈັບເປັນ. ຮັບປະກັນໃຫ້ແມ່ຍິງເກີດລູກທີ່ປອດໄພ; ຮັບປະກັນໃຫ້ເດັກນ້ອຍໄດ້ຮັບ ສານອາຫານຢ່າງພຽງພໍ, ຖືກຫຼັກອານາໄມ ແລະ ຄົບ 3 ໝວດ 5 ໝູ່ ຕາມຫຼັກໂພຊະນາການ; ປຸກລະດົມ ແລະ ໂຄສະ ນາຂົນຂວາຍຊຸມຊົນໃຫ້ເຂົ້າໃຈເຖິງບັນຫາສຳຄັນຂອງການຮັກສາສຸຂະພາບ, ວຽກງານສຸຂະອານາໄມກັນພະຍາດ ພ້ອມ ທັງສະໜອງນ້ຳສະອາດ ແລະ ວິດຖ່າຍໃຫ້ທົ່ວເຖິງເຂດຫ່າງໄກສອກຫລີກຫລາຍຂຶ້ນ ເພື່ອຮັບປະກັນໃຫ້ປະຊາຊົນ ຫລຸດ ພົ້ນອອກຈາຄວາມດ້ອຍພັດທະນາດ້ານສຸຂະພາບ, ເຮັດໃຫ້ການບໍລິການສູຂະພາຍລະ ຫວ່າງຕົວເມືອງ ແລະ ຊົນນະບົດ ບໍ່ຫລຸດໂຕນກັນຫລາຍ.

⊕ **ຄາດໝາຍຕົ້ນຕໍ**

- ສ້າງບ້ານສາທາລະນະສຸກແບບຢ່າງໃຫ້ໄດ້ 70% ຂອງຈຳນວນບ້ານທັງໝົດ.
- ປັບປຸງ ແລະ ພັດທະນາ ສຸກສາລາຕົວແບບ ໃຫ້ໄດ້ 3 ແຫ່ງ.
- ຮອດປີ 2020 ເພີ່ມອາຍຸຍືນຂອງປະຊາກອນສະເລ່ຍໃຫ້ໄດ້ 63 ປີ,
- ຫຼຸດອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານໃຫ້ໄດ້ 15% ແລະ ເດັກນ້ອຍທີ່ ເຕ້ຍໃຫ້ໄດ້ 28%,
- ອັດຕາການຕາຍຂອງເດັກອາຍຸຕ່ຳກວ່າ 1 ປີ ໃຫ້ຫຼຸດລົງຢູ່ 30/1.000 ເດັກເກີດມີຊີວິດ,
- ອັດຕາການຕາຍຂອງເດັກອາຍຸຕ່ຳກວ່າ 5 ປີ ໃຫ້ຫຼຸດລົງຢູ່ 45/1.000 ເດັກເກີດມີຊີວິດ,
- ອັດຕາສ່ວນການຕາຍຂອງແມ່ ໃຫ້ຫຼຸດລົງຢູ່ 180/100.000 ເດັກເກີດມີຊີວິດ,
- ອັດຕາຊົມໃຊ້ນ້ຳສະອາດຂອງປະຊາຊົນໃຫ້ບັນລຸໄດ້ 90%,
- ອັດຕາການຊົມໃຊ້ວິດຖ່າຍ ໃຫ້ບັນລຸໄດ້ 80%,
- ອັດຕາການສັກຢາກັນພະຍາດ ໃຫ້ບັນລຸໄດ້ 90%,
- ອັດຕາປົກຄຸມການປະກັນສຸຂະພາບໃຫ້ໄດ້ 80%,
- ເຂດຫ່າງໄກສອກຫລີກໃຫ້ມີແພດບ້ານລະ 1 ຄົນ
- ໂຮງໝໍນ້ອຍ (ສຸກສາລາ) ໃຫ້ມີແພດຊັ້ນສູງ ແລະ ປະດົງຄັນ 1 ຄົນ

⊕ **ວຽກງານຈຸດສຸມ ແລະ ໂຄງການຕົ້ນຕໍ:**

- ປັບປຸງຕະໜ່າງການບໍລິການສາທາລະນະສຸກທຸກຂັ້ນໃຫ້ມີຄວາມເຂັ້ມແຂງ, ມີຄຸນນະພາບໃນການປິ່ນປົວ.
- ປັບປຸງລະບົບຂໍ້ມູນຂ່າວສານສາທາລະນະສຸກ, ການຄຸ້ມຄອງບໍລິຫານ, ການຄຸ້ມຄອງງົບປະມານລາຍຮັບ-ລາຍຈ່າຍ, ກອງທຶນ, ການຊ່ວຍເຫລືອ ແລະ ງົບປະມານລັດໃຫ້ມີຄວາມຊັດເຈນ, ວ່ອງໄວ, ທັນການ ແລະ ມີປະສິດທິ ພາບສູງ.
- ປັບປຸງ ແລະ ກໍ່ສ້າງສຸກສາລາ ຢູ່ບ່ອນທີ່ເໝາະສົມ ແລະ ຈຳເປັນ, ຍົກລະດັບໂຮງໝໍເມືອງໃຫ້ສາມາດຜ່າຕັດ ນ້ອຍ, ປັບປຸງໂຮງໝໍແຂວງ ໃຫ້ສາມາດຮອງຮັບການບໍລິການຮັກສາສຸຂະພາບຂອງປະຊາຊົນ ໂດຍໂຮງໝໍແຂວງໃຫ້ມີຊ່ຽວ

ຊານທຸກຂະແໜງການປິ່ນປົວ ແລະ ຂະແໜງການຍ່ອຍທີ່ຈຳເປັນ ໃຫ້ມີເຄື່ອງຟອກໄຂ່ຫລັງ ແລະ Ex-ray ເຄື່ອນທີ່ ປະກອບເຄື່ອງອຸປະກອນການແພດທີ່ທັນສະໄໝ CTS Scan ໃຫ້ໂຮງໝໍແຂວງ ແລະ ໂຮງໝໍເມືອງທີ່ຈຳເປັນ.

- ປັບປຸງການຈັດຕັ້ງ, ກໍ່ສ້າງ ແລະ ບຳລຸງພະນັກງານແພດແບບຕໍ່ເນື່ອງໃຫ້ຜູ້ທີ່ປະຈຳການຢູ່ເຂດຫ່າງໄກສອກຫຼີກ; ຈັດສົ່ງນັກສຶກສາແພດທີ່ຮຽນຈົບໃໝ່ລົງຝຶກຫັດຢູ່ທ້ອງຖິ່ນ ແລະ ສະໜັບສະໜູນງົບປະມານໃຫ້ຫຼາຍຂຶ້ນ.
- ສືບຕໍ່ຈັດຕັ້ງປະຕິບັດ ແລະ ຂະຫຍາຍກອງທຶນປະກັນສຸຂະພາບແຕ່ລະຂັ້ນຢ່າງທົ່ວເຖິງ, ເພື່ອເຮັດໃຫ້ເສດຖະກິດສາທາລະນະສຸກມີຄວາມໝັ້ນຄົງ, ມີຄວາມຍືນຍົງ ແລະ ແຂງແຮງຂຶ້ນເລື້ອຍໆ.
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງສືບຕໍ່ສ້າງບ້ານສາທາລະນະສຸກແບບຢ່າງໃຫ້ໄດ້ 90% ຂອງຈຳນວນບ້ານທັງໝົດ ແລະ ມີປະສິດທິພາບ.
- ສົ່ງເສີມໂພສະນາການຕິດພັນກັບການແກ້ໄຂຄວາມທຸກຍາກ ແລະ ຄວາມພ້ອມຮ່ວມມືຕ້ານໄພພິບັດທຳມະຊາດ ແລະ ໂລກລະບາດຕ່າງໆ,
- ສືບຕໍ່ເອົາໃຈໃສ່ກວດກາຄຸນນະພາບຂອງອາຫານ ແລະ ຢາ.
- ປະສານ ແລະ ຍາດແຍ່ງການຊ່ວຍເຫລືອ ຈາກຄູ່ຮ່ວມພັດທະນາ ໃຫ້ເຂົາເຈົ້າມີຄວາມສົນໃຈຫລາຍຂຶ້ນ.

### 2.2.3. ແຮງງານ ແລະ ສະຫວັດດີການສັງຄົມ.

#### 1). ພັດທະນາກຳລັງແຮງງານ.

**⊕ ທິດທາງ.**

ຍົກລະດັບສີມືແຮງງານໃຫ້ໄດ້ຕາມຄວາມຕ້ອງການ ເສີມສ້າງຂະບວນການສ້າງອາຊີບ, ສ້າງວຽກເຮັດງານທຳທີ່ມີຄຸນະພາບ ແລະ ມີລາຍໄດ້ທີ່ໝັ້ນຄົງໃຫ້ແກ່ປະຊາຊົນຢ່າງທົ່ວເຖິງສົ່ງເສີມໃຫ້ມີຄວາມຮູ້, ຄວາມສຳນານ ແລະ ຄວາມຄິດສ້າງສັນໃນການສ້າງໂອກາດ, ການເຂົ້າເຖິງແຫຼ່ງທຶນ ເພື່ອສົ່ງເສີມໃຫ້ເກີດການຜະລິດ ແລະ ການແປຮູບເປັນສິນຄ້າ, ເອົາໃຈໃສ່ໃຫ້ປະຊາຊົນໄດ້ຮັບການປົກປ້ອງຈາກລະບົບປະກັນສັງຄົມໃນຂັ້ນພື້ນຖານເປັນທຳ ແລະ ຍຸດຕິທຳ ລວມທັງການຊ່ວຍເຫຼືອ ແລະ ພັດທະນາຜູ້ທຸກຍາກ, ຜູ້ດ້ອຍໂອກາດໃຫ້ສາມາດເພິ່ງຕົນເອງ ທີ່ຍືນຍົງຄຸ້ຄອງແຮງງານພາຍໃນ ແລະ ຕ່າງປະເທດຢ່າງເຂັ້ມງວດຕາມລະບົບກົດໝາຍຈັດເຝິກອົບຮົມວິຊາອາຊີບ, ຈັດສັນໃຫ້ເຂົາເຈົ້າມີວຽກເຮັດງານທຳ, ພ້ອມທັງປົກປ້ອງຄຸ້ມຄອງແຮງງານລາວ ແລະ ຕ່າງປະເທດຕາມລະບຽບກົດໝາຍ, ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູທີ່ມີຜົນງານ, ຕໍ່ປະເທດຊາດ, ຕໍ່ການປະຕິວັດ, ບັນເທົາ ແລະ ຊ່ວຍເຫຼືອຢ່າງທັນການຕໍ່ຜົນສະທ້ອນຈາກໄພພິບັດທີ່ເກີດຂຶ້ນ.

**⊕ ຄາດໝາຍຕົ້ນຕໍ.**

- ກໍ່ສ້າງສູນພັດທະນາສີມືແຮງງານຂັ້ນແຂວງໃຫ້ໄດ້ 1 ແຫ່ງ.
- ສູ້ຊົນເຮັດໃຫ້ການພັດທະນາສີມືແຮງງານໃຫ້ໄດ້ 15 ສາຂາອາຊີບ.
- ຮອດປີ 2020 ຄາດວ່າຈະມີກຳລັງແຮງງານພາຍໃນທັງໝົດປະມານ 79.806 ຄົນ, ຍິງ 40.164 ຄົນ, ແຮງງານທີ່ຈະເພີ່ມໃໝ່ຈາກປີ 2015 ຈະມີປະມານ 1.564 ຄົນ.
- ຂະຫຍາຍເຂດປົກຄຸມປະກັນສັງຄົມ ແລະ ປະກັນສຸຂະພາບໃຫ້ໄດ້ 65% ຂອງພົນລະເມືອງໃນທົ່ວແຂວງ.
- ຈັດຝຶກອົບຮົມໃຫ້ບັນດາກຳລັງແຮງງານໃນແຕ່ລະໄລຍະຢ່າງເປັນປົກກະຕິ ໃຫ້ໄດ້ 2.124 ຄົນ.
- ພັດທະນາສ້າງນາຍສ່າງໃນສາຂາວິຊາທີ່ສອດຄ່ອງກັບການພັດທະນາເປັນຕົ້ນແມ່ນນາຍຊ່າງກໍ່ສ້າງ, ຊ່າງສ້ອມແປງ, ປຸງແຕ່ງອາຫານ, ການບໍລິການ ແລະ ອື່ນໆ ໃຫ້ໄດ້ 15 ສາຂາອາຊີບ ເພື່ອສະໜອງແຮງງານພາຍໃນໃຫ້ໂຄງການຕ່າງໆ ໃຫ້ໄດ້ 2.515 ຄົນ.

- ຊຸກຍູ້ຫົວໜ່ວຍແຮງງານຕ່າງໆ ໃຫ້ມີສ່ວນຮ່ວມໃນການພັດທະນາສີມືແຮງງານທັງປະລິມານໃນ ແລະ ນອກສູນພັດທະນາໃຫ້ໄດ້ 3.545 ຄົນ ໂດຍສຸມໃສ່ກຸ່ມຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຜູ້ພິການ ແລະ ຜູ້ຫວ່າງງານໃຫ້ໄດ້ 50% ຂອງກຸ່ມເປົ້າໝາຍ.

- ສ້າງລະບົບຖານຂໍ້ມູນຂ່າວສານຕະຫລາດແຮງງານ, ບໍລິການຈັດຫາວຽກເຮັດງານທຳໃຫ້ເພີ່ມຂຶ້ນ, ຈັດຕັ້ງການແຂ່ງຂັນສີມືແຮງງານລະດັບແຂວງ, ເມືອງ ໃຫ້ໄດ້ 1 ຄັ້ງ/ປີ.

- ໂຄສະນາ ແລະ ເຜີຍແຜ່ກົດໝາຍແຮງງານ ແລະ ກົດໝາຍປະກັນສັງຄົມໃນບັນດາຫົວໜ່ວຍແຮງງານຕ່າງໆ ໃຫ້ໄດ້ 85% ຂອງຫົວໜ່ວຍແຮງງານ.

**⊕ ວຽກງານຈຸດສຸມ, ແຜນງານ ແລະ ໂຄງການຕົ້ນຕໍ:**

(1) ສ້າງວຽກເຮັດງານທຳທີ່ໝັ້ນຄົງ ມີລາຍໄດ້ທີ່ສົມເຫດສົມຜົນ ໂດຍຕິດພັນກັບອຸດສະຫະກຳ, ກະສິກຳ, ການບໍລິການ ແລະ ທ່ອງທ່ຽວ.

(2) ສຸມໃສ່ສ້ອມແປງສູນພັດທະນາສີມືແຮງງານໃຫ້ຄົບຊຸດແບບຖາວອນ

(3) ພັດທະນາສີມືແຮງງານດ້ານປະລິມານ ແລະ ຄຸນນະພາບ

(4) ໂຄງການ ສ້າງຄວາມເຂັ້ມແຂງດ້ານການບໍລິການຈັດຫາງານ ແລະ ສ້າງວຽກເຮັດງານທຳ

(5) ໂຄງການ ປົກປ້ອງສິດຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ການຄຸ້ມຄອງແຮງງານ

(6) ໂຄງການ ປະຕິບັດນະໂຍບາຍຕໍ່ຜູ້ຜົນງານຄຸນງານຄວາມດີຕໍ່ການປະຕິວັດ, ຜູ້ເສຍອົງຄະ, ພິການ ແລະ ຜູ້ອາຍຸສູງ

(7) ໂຄງການ ກອງທຶນສົງເຄາະ

(8) ໂຄງການ ສ້າງ ແລະ ປັບປຸງບູລະນະພື້ນຖານໂຄງລ່າງຂະແໜງແຮງງານ ແລະ ສະຫັວດດີການສັງຄົມ.

### 2.2.4. ຖະແຫລ່ງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ

#### 1). ດ້ານຖະແຫລ່ງຂ່າວ-ວັດທະນະທຳ

**⊕ ທິດທາງ:**

ພັດທະນາພາຫານະສື່ມວນຊົນໃຫ້ມີຄຸນນະພາບ, ເປັນລະບົບ, ທັນສະໄໝວ່ອງໄວ ແລະ ທັນເຫດການ, ສ້າງໄດ້ສື່ມວນຊົນເປັນກະບອກສຽງອັນແຫລມຄົມຂອງພັກ-ລັດ, ພັດທະນາບຸກຄະລາກອນໃນຂົງເຂດຖະແຫລ່ງຂ່າວສື່ມວນຊົນ, ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານຖະແຫລ່ງຂ່າວສື່ມວນຊົນໃຫ້ມີຄວາມໜັກແໜ້ນ.

ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກທາງດ້ານວັດທະນະທຳ ແລະ ຮັກສາຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າພາຍໃນແຂວງ ກໍຄືຂອງຊາດໃຫ້ຢູ່ຄູ່ກັບສັງຄົມລາວຕະຫລອດໄປ; ເສີມຂະຫຍາຍວັດທະນະທຳອັນດີງາມທີ່ເປັນເອກະລັກສະເພາະຂອງເຜົ່າຊົນ ແລະ ໂຄສະນາໃຫ້ສັງຄົມ ແລະ ຊາວໂລກໄດ້ຮັບຮູ້ ເພື່ອເປັນການສົ່ງເສີມວຽກງານການທ່ອງທ່ຽວຕິດພັນກັບວັດທະນະທຳ. ສ້າງ ແລະ ພັດທະນາບ້ານວັດທະນະທຳ ແລະ ຄອບຄົວວັດທະນະທຳໃຫ້ຫລາຍຂຶ້ນ ອັນເປັນການສົ່ງຜົນດີໃຫ້ແກ່ການສ້າງສັງຄົມໃຫ້ມີຄວາມສະຫງົບ, ປອດໄພ ແລະ ສີວິໄລ. ເຄື່ອນໄຫວສະແດງສິນລະປະວັນນະຄະດີສະມັກຫລິ້ນຂອງຮາກຖານໃນງານສຳຄັນຕ່າງໆຂອງທ້ອງຖິ່ນ ແລະ ເຂົ້າຮ່ວມແລກປ່ຽນວັດທະນະທຳລະຫວ່າງຊາດ.

**⊕ ຄາດໝາຍຕົ້ນຕໍ:**

- ຂະຫຍາຍການກະຈາຍສຽງຄືນວິທະຍຸໃຫ້ກວມເອົາ 100%, ໂທລະພາບກວມເອົາ 90% ຂອງພື້ນທີ່ທົ່ວແຂວງ, ປັບປຸງລະບົບສື່ມວນຊົນທັນເປັນທັນສະໄໝເທື່ອລະກ້າວ.

- ດຳເນີນການພັດທະນາ ແລະ ປັບປຸງວັດຖຸອຸປະກອນເຕັກນິກວິທະຍຸ, ໂທລະພາບ ຈາກລະບົບອານາລັອກໄປສູ່ລະບົບດີຈີຕອນໃຫ້ເປັນລະບົບຄົບຊຸດ, ທັນສະໄໝປົກກະຕິ ແລະ ສາມາດເຊື່ອມໂຍງ.

- ໂຄສະນາເຜີຍແຜ່ອອກສູ່ສັງຄົມຜ່ານບັນດາພາຫະນະສື່ມວນຊົນໃຫ້ຮັບຮູ້ວັດທະນະທຳປະຈຳຊາດ ແລະ ບັນດາເຜົ່າ.

- ສ້າງ, ສົ່ງເສີມ ແລະ ພັດທະນາຜູ້ສືບທອດທີ່ມີພອນສະຫວັນໃຫ້ຄົນລຸ້ນໜຸ່ມ.

- ສ້າງ, ປັບປຸງ ແລະ ພັດທະນາພື້ນຖານໂຄງລ່າງດ້ານວັດທະນະທຳໃຫ້ມີຄວາມເຂັ້ມແຂງຍືນຍົງ.

- ສ້າງໃຫ້ມີຄອບຄົວວັດທະນະທຳໃຫ້ໄດ້ 8.000 ຄອບຄົວ, ກວມ 95%ຂອງຄອບຄົວທົ່ວແຂວງ; ບ້ານວັດທະນະທຳ129 ບ້ານ, ກວມເອົາ 100% ບ້ານທັງໝົດ.

- ຟື້ນຟູ, ອະນຸລັກ ແລະ ສົ່ງເສີມມໍລະດົກວັດທະນະທຳທາງດ້ານວັດຖຸແລະບໍ່ເປັນວັດຖຸທີ່ເປັນເອກະລັກແຕ່ລະປະເພດໃຫ້ກວ້າງຂວາງກວ່າເກົ່າ.

- ຍົກລະດັບມໍລະດົກວັດທະນະທຳ, ປະຫວັດສາດແລະທຳມະຊາດລະດັບທ້ອງຖິ່ນໃຫ້ເປັນມໍລະດົກລະດັບຊາດ.

- ສ້າງບ້ານວັດທະນະທຳຕົວແບບໃຫ້ກາຍເປັນຈຸດຫມາຍປາຍທາງ ໃຫ້ແກ່ການທ່ອງທ່ຽວ.

- ຄຸ້ມຄອງປ້າຍໂຄສະນາຕ່າງໆ ໃຫ້ຖືກຕ້ອງຕາມວັດທະນະທຳຂອງລາວ

**2). ການພັດທະນາການທ່ອງທ່ຽວ**

**⊕ ທິດທາງ**

ສືບຕໍ່ພັດທະນາບັນດາຂະແໜງບໍລິການຕ່າງໆ ໂດຍຕ້ອງຕິດພັນສະໜິດແໜ້ນກັບການຜະລິດໃຫ້ສາມາດສ້າງລາຍຮັບຕໍ່ແຂວງ, ສາມາດປະກອບສ່ວນສ້າງວຽກເຮັດງານທຳໃຫ້ປະຊາຊົນ ແລະ ກາຍເປັນຈຸດບໍລິການຂົນສົ່ງສິນຄ້າຜ່ານແດນໃນເຂດ 3 ຫລ່ຽມພັດທະນາ ລາວ-ຫວຽດນາມ-ກຳປູເຈຍ ແລະ ອະນຸພາກພື້ນ ກໍ່ຄືສາກົນ, ຕອບສະໜອງສິນຄ້າ ແລະ ການບໍລິການທີ່ຫລາຍຮູບຫລາຍສີ ຕາມຄວາມຕ້ອງການຂອງຕະຫລາດທັງຢູ່ພາຍໃນ ແລະ ຕ່າງປະເທດ.

**⊕ ຄາດໝາຍຕົ້ນຕໍ**

- ຮອດປີ 2020 ໃຫ້ມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ແລະ ທ່ຽວແຂວງອັດຕະປື ໃຫ້ໄດ້ປະມານ 1.371.807 ຄົນ, ສະເລ່ຍໄລຍະການພັກເຊົາຂອງນັກທ່ອງທ່ຽວ ບໍ່ຕໍ່າກວ່າ 4ວັນ/ຄົນ ແລະ ສ້າງລາຍຮັບຈາກການທ່ອງທ່ຽວ ໃຫ້ໄດ້ບໍ່ຕໍ່າກວ່າ 63,10 ລ້ານໂດລາສະຫາລັດ.

- ສູ້ຊົນພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງໜຶ່ງຜະລິດຕະພັນໃນທົ່ວແຂວງ ກ່ອນປີ 2020, ສ້າງແຜນພັດທະນາແຫລ່ງທ່ອງທ່ຽວໃຫ້ໄດ້ 5 ແຫ່ງ, ສຳຫລວດ ແລະ ຈັດສັນແຫລ່ງທ່ອງທ່ຽວໃຫ້ໄດ້ 15 ແຫ່ງ, ປັບປຸງ ແລະ ພັດທະນາສະຖານທີ່ທ່ອງທ່ຽວທີ່ມີການບໍລິການແບບຄົບວົງຈອນໃຫ້ໄດ້ 2 ແຫ່ງ.

- ຊຸກຍູ້ການລົງທຶນຂອງທຸລະກິດພາກເອກະຊົນເຂົ້າໃນຂະແໜງການທ່ອງທ່ຽວເປັນຕົ້ນ: ໂຮງແຮມ ແລະ ຣີສອດໃຫ້ໄດ້ 29 ແຫ່ງ, ເຮືອນພັກໃຫ້ໄດ້ 60 ແຫ່ງ, ຮ້ານອາຫານ ໃຫ້ໄດ້ 100 ແຫ່ງ ແລະ ຮ້ານບັນເທີງໄດ້ຮັບການປັບປຸງ ແລະ ຍົກລະດັບ ໃຫ້ໄດ້ 50 ແຫ່ງ ແລະ ບໍລິສັດທ່ອງທ່ຽວ 4 ບໍລິສັດ.

- ສູ້ຊົນສ້າງການເຊື່ອມໂຍງເວັບໄຊໂຄສະນາການທ່ອງທ່ຽວແຂວງ ເຂົ້າກັບເວັບໄຊຂອງອົງການທ່ອງທ່ຽວແຫ່ງຊາດ ພ້ອມທັງເຊື່ອມໂຍງເຂົ້າກັບເວັບໄຊຂອງເຂດ 3 ຫລ່ຽມພັດທະນາ, ເວັບໄຊຂອງ ASEAN ແລະ ເວັບໄຊຂອງ GMS, ຂະຫຍາຍທຸລະກິດການບໍລິການການນຳທ່ຽວພາຍໃນແຂວງໃຫ້ໄດ້ 2 ບໍລິສັດ.

⊕ **ໜ້າວຽກຈຸດສຸມ ແລະ ໂຄງການ:**

- ສົ່ງເສີມ ແລະ ພັດທະນາການທ່ອງທ່ຽວ ໂດຍນຳໃຊ້ທ່າແຮງບົ່ມຊ້ອນທາງດ້ານທຳມະຊາດ, ວັດທະນະທຳ ແລະ ມູນເຊື້ອທາງດ້ານປະຫວັດສາດທີ່ມີສັນກາຍເປັນແຫ່ງທ່ອງທ່ຽວສີຂຽວ ແລະ ມີລັກສະນະຍືນຍົງ ໂດຍການຊົນປະຊາຊົນ ແລະ ຊຸມຊົນມີສ່ວນຮ່ວມ;
- ສ້າງເງື່ອນໄຂເອື້ອອຳນວຍທຸລະກິດ, ຜູ້ປະກອບການດ້ານການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດມາລົງທຶນຢູ່ແຂວງຂອງພວດເຮົາໃຫ້ຫລາຍຂຶ້ນກວ່າເກົ່າ ຄຽງຄູ່ກັບຂະແໜງການອື່ນ ແລະ ມີການເຊື່ອມໂຍງກັນພາຍໃນປະເທດ ແລະ ກັບພາກພື້ນ ແລະ ສາກົນ;
- ສ້າງບຸກຄະລະກອນການນຳທ່ຽວໃຫ້ພຽງພໍ; ພັດທະນາການທ່ອງທ່ຽວໃຫ້ກາຍເປັນຂະແໜງສ້າງລາຍຮັບນຳໜ້າເຂົ້າສູ່ແຂວງ ພ້ອມທັງສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ແກ່ປະຊາຊົນໃນທ້ອງຖິ່ນ.

### 2.2.5. ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ພັດທະນາແມ່ຍິງ, ຄວາມກ້າວໜ້າຂອງແມ່ຍິງ ແລະ ວຽກແມ່ ແລະ ເດັກ.

⊕ **ທິດທາງ**

ເພີ່ມທະວີການສຶກສາອົບຮົມດ້ານການເມືອງ-ແນວຄິດ,ການພັດທະນາເສດຖະກິດ, ວັດທະນາທຳ-ສັງຄົມ ແລະ ຄອບຄົວ, ຮັບປະກັນສິດ ແລະ ການພັດທະນາທີ່ສະເຫມີພາບເທົ່າທຽມກັນລະຫວ່າງຍິງ-ຊາຍ; ຫລຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໂດຍຖືສຳຄັນວຽກປົກປ້ອງຊ່ວຍເຫລືອເດັກ ເພື່ອຮັບປະກັນການຢູ່ລອດ, ການພັດທະນາ ແລະ ການມີສ່ວນຮ່ວມຂອງເດັກ. ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດແກ່ແມ່ຍິງ ເພື່ອປະກອບສ່ວນເຂົ້າໃນຂະບວນການພັດທະນາໃຫ້ຫລາຍຂຶ້ນ.

⊕ **ຄາດໝາຍຕົ້ນຕໍ**

- ເພີ່ມຈຳນວນແມ່ຍິງ ເຂົ້າໃນສາມະຊິກສະພາເພດຍິງ ຊຸດທີ VII ໃຫ້ໄດ້ບໍ່ຫລຸດ 30% ຂຶ້ນໄປ.
- ເພີ່ມຈຳນວນແມ່ຍິງເຂົ້າໃນຄະນະນຳຂອງອົງການຈັດຕັ້ງຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນຕ່າງໆກວມບໍ່ຫລຸດ 20%.
- ສ້າງເງື່ອນໄຂໃຫ້ພະນັກງານ-ລັດຖະກອນແມ່ຍິງໄດ້ຮັບການຍົກລະດັບທິດສະດີການເມືອງ-ການປົກຄອງ, ກົດໝາຍ,ການບໍລິຫານຄຸ້ມຄອງ, ວິຊາຊີບ, ວິຊາການ-ສັງຄົມໃຫ້ໄດ້ 40% ຂອງຈານວນທັງໝົດທີ່ໄດ້ຮັບການຍົກລະດັບ.
- ປະຕິບັດສິດສະເໝີພາບລະຫວ່າງຍິງ-ຊາຍໃນການເຂົ້າເຖິງດ້ານການບໍລິການຕ່າງໆເປັນຕົ້ນການສຶກສາ, ສາທາລະນະສຸກ, ສະຫວັດດີການສັງຄົມໃຫ້ໄດ້ 40% ຂອງຜູ້ໃຫ້ບໍລິການ.
- ຮັບປະກັນທັງຍິງ-ຊາຍມີສິດສະເໝີພາບ ກ່ຽວກັບກາລະໂອກາດທາງດ້ານເສດຖະກິດເປັນຕົ້ນ: ການເຂົ້າເຖິງແຫຼ່ງຊັບພະຍາກອນທາງດ້ານເສດຖະກິດເພື່ອທຳມາຫາກິນ ເຊັ່ນ: ດິນ, ທຶນ, ການຍົກລະດັບວິຊາຊີບດ້ານວິຊາການເຕັກໂນໂລຊີອັນໃໝ່ ແລະ ພື້ນຖານໂຄງລ່າງ (ໄຟຟ້າ, ຫົນທາງ, ຕະຫຼາດ).
- ຫຼຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃຫ້ໄດ້ໃນລະດັບສູງ.
- ຮັບປະກັນໃຫ້ແມ່ຍິງມີສ່ວນຮ່ວມໃນການຕັດສິນບັນຫາໃນລະດັບສູງ.

- ຮັບປະກັນໃຫ້ແມ່ຍິງມີສ່ວນໃນການຕັດສິນໃຈບັນຫາໃນລະດັບຄອບຄົວ ແລະ ຊຸມຊົນ ຕາມທິດສາມສ້າງ

- ຕິດພັນກັບການສ້າງຂະບວນການສ້າງຂະບວນການແຂ່ງຂັນ 3 ດີ ແລະ ຍັ້ງຢືນເປັນຄອບຄົວດີມີຄວາມຜາສຸກ 80 % ແລະ ສາມາດປະກາດເປັນເມືອງສະຫະພັນແມ່ຍິງ 3 ດີໃຫ້ໄດ້ 80% ແລະ ແຂວງສະຫະພັນແມ່ຍິງ 3 ດີໃນປີ 2020.

⊕ **ວຽກຈຸດສຸມ, ແຜນງານ ແລະ ໂຄງການຕົ້ນຕໍ:**

(1) ແຜນງານ ສຶກສາອົບຮົມການເມືອງແນວຄິດ ແລະ ຍົກລະດັບຄວາມຮູ້ດ້ານກົດໝາຍໃຫ້ແມ່ຍິງ

(2) ແຜນງານ ສ້າງຄວາມເຂັ້ມແຂງ ໃຫ້ອົງການຈັດຕັ້ງສະຫະພັນແມ່ຍິງ

(3) ແຜນງານ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ-ເດັກນ້ອຍ ແລະ ສົ່ງເສີມຄວາມສະເໝີພາຍຍິງ-ຊາຍ

(4) ແຜນງານ ສົ່ງເສີມການປະກອບອາຊີບ, ພັດທະນາສີມືແຮງງານ, ທຸລະກິດຂະໜາດນ້ອຍໃຫ້ແມ່ຍິງ ເພື່ອຫລຸດຜ່ອນຄວາມທຸກຍາກ.

(5) ແຜນງານ ປົກປັກຮັກສາ ແລະ ເສີມຂະຫຍາຍ ມູນເຊື້ອວັດທະນະທຳອັນດີງາມຂອງຊາດ

(6) ແຜນງານ ພົວພັນ ແລະ ຮ່ວມມືກັບຕ່າງປະເທດ

### 2.2.6. ການພັດທະນາເຍົາວະຊົນ ແລະ ໄວໜຸ່ມ

⊕ **ທິດທາງ**

ເອົາໃຈໃສ່ໃນການສ້າງໃຫ້ຊາວໜຸ່ມ ແລະ ເຍົາວະຊົນລາວບັນດາເຜົ່າ ໃຫ້ກາຍເປັນກຳລັງສືບທອດມູນເຊື້ອ, ອຸດົມການຂອງພັກ ແລະ ຂອງຊາດ ໂດຍການສຶກສາອົບຮົມການເມືອງ-ແນວຄິດຊາວໜຸ່ມ-ເຍົາວະຊົນ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນາທຳອັນດີງາມຂອງຊາດ ແລະ ເປັນເອກະລັກສະເພາະຂອງແມ່ຍິງບັນດາເຜົ່າ, ປະຕິບັດສິດພັນທະປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍຄືຂອງຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ; ຍົກລະດັບການສຶກສາ, ວິຊາຊີບ ແລະ ສີມືແຮງງານ, ວິທະຍາສາດ-ເຕັກໂນໂລຊີໃໝ່ທີ່ທັນສະໄໝ ແລະ ພາສາຕ່າງປະເທດ; ເຮັດໃຫ້ຊາວໜຸ່ມ-ເຍົາວະຊົນຮູ້ການບຳລຸງສຸຂະພາບຮ່າງກາຍ ແລະ ຈິດໃຈ, ປຸກຈິດສຳນຶກທີ່ຖືກຕ້ອງ, ຕີຖ້ອຍປະກົດການຫຍໍ້ທໍ້ດ້ານຕ່າງໆໃນສັງຄົມ ແລະ ຈຳກັດພຶດຕິກຳລະເມີດລະບຽບກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຽດອັນຊອບທຳຂອງຊາວໜຸ່ມ ແລະ ເຍົາວະຊົນ.

⊕ **ຄາດໝາຍຕົ້ນຕໍ**

- ສະມາຊິກຊາວໜຸ່ມ, ເຍົາວະຊົນ ແລະ ໄວໜຸ່ມທົ່ວໄປທີ່ເປັນນັກຮຽນນັກສຶກສາໃຫ້ໄດ້ 90%.
- ສະມາຊິກຊາວໜຸ່ມ, ເຍົາວະຊົນ ແລະ ໄວໜຸ່ມທົ່ວໄປຢູ່ຂັ້ນຮາກຖານທົ່ວແຂວງໃຫ້ໄດ້ 70%.
- ປັບປຸງ ແລະ ຂະຫຍາຍການຈັດຕັ້ງຊາວໜຸ່ມ, ເຍົາວະຊົນ ແລະ ກໍ່ສ້າງສະຫະພັນ ແລະ ສະມາຄົມໃຫ້ເຕີບໃຫຍ່ເຂັ້ມແຂງ, ມີຄວາມສາມາດໃນການນຳພາ, ສຶກສາອົບຮົມ, ເຕົ້າໂຮມຊາວໜຸ່ມ, ເຍົາວະຊົນ ແລະ ໄວໜຸ່ມລາວບັນດາເຜົ່າໃຫ້ເປັນປີກແຜ່ນຢູ່ອ້ອມຂ້າງແຂວງໃນນັ້ນ;
    - ຂັ້ນແຂວງຮອດຂັ້ນເມືອງໃຫ້ໄດ້ 75%
    - ຂັ້ນຮາກຖານໃຫ້ໄດ້ 50%
    - ວຽກງານກອງເຍົາວະຊົນ, ອະນຸຊົນທັນວານຳໜ້າໃຫ້ໄດ້ 90% ຂອງຈຳນວນການຈັດຕັ້ງທີ່ມີຢູ່.
- ຂະຫຍາຍສະມາຊິກຊາວໜຸ່ມ, ສະມາຊິກເຍົາວະຊົນ ແລະ ອະນຸຊົນທັນວາໃຫ້ໄດ້ 50% ຂອງຈຳນວນສະມາຊິກທີ່ມີຮອດປີ 2020.

- ປຸກລະດົມ, ຊຸກຍູ້ເຮັດໃຫ້ຊາວໜຸ່ມ ແລະ ໄວໜຸ່ມໃຫ້ຜູ້ຢູ່ໃນເກນອາຍຸອອກແຮງງານຕ້ອງໄດ້ຮັບການຝຶກອົບຮົມວິຊາຊີບໃຫ້ໄດ້ 50% ຂອງຈຳນວນສະມາຊິກຊາວໜຸ່ມທັງໝົດໃນປີ 2020.
- ນຳພາຈັດຕັ້ງສ້າງໜ່ວຍຊາວໜຸ່ມໃນທົ່ວແຂວງໃຫ້ໄດ້75% ຂອງໜ່ວຍຊາວໜຸ່ມທົ່ວແຂວງ ແລະ ສູ້ຊົນສ້າງກອງເຍົາວະຊົນ 3 ດີ 4 ຮູ້ໃຫ້ໄດ້ 70% ຂອງກອງເຍົາວະຊົນທົ່ວແຂວງ.
- ສ້າງຕັ້ງສະຫະພັນຊາວໜຸ່ມ ກອງອາສາສະໝັກຮັບໃຊ້ສັງຄົມໃຫ້ໄດ້ 5 ເມືອງ ທົ່ວແຂວງໃຫ້ໄດ້ 4 ກອງ.

### 2.2.7. ວິທະຍາສາດ ແລະ ເຕັກໂນໂລຊີ

**⊕ ທິດທາງ**

ສຸມໃສ່ເຜີຍແຜ່ ແລະ ການນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝຂອງປະເທດ, ພາກພື້ນ ແລະ ສາກົນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍສະເພາະຂົງເຂດການຜະລິດ ແລະ ການສົ່ງອອກສິນຄ້າ ເພື່ອເຮັດໃຫ້ປະຢັດເວລາ, ຫລຸດຕົ້ນທຶນລົງ ແລະ ທັນເປັນທັນສະໄໝເທື່ອລະກ້າວ; ພ້ອມດຽວກັນນັ້ນ, ກໍ່ຕ້ອງປະສານກັບສາຍຕັ້ງ ເພື່ອດຳເນີນການຄົ້ນຄວ້າວິທະຍາສາດ ແລະ ພັດທະນາເຕັກໂນໂລຊີຕາມທ່າແຮງຂອງແຂວງ ໂດຍສະເພາະແມ່ນຂົງເຂດເຕັກໂນໂລຊີຊີວະພາບ ແລະ ການນຳໃຊ້ພະລັງງານທົດແທນ.

**⊕ ຄາດໝາຍຕົ້ນຕໍ:**

- ເຜີຍແຜ່ນິຕິກຳ-ລະບຽບການທີ່ກ່ຽວຂ້ອງກັບການຖ່າຍທອດເຕັກໂນໂລຊີ, ການຄົ້ນຄວ້າວິທະຍາສາດ ແລະ ການປົກປ້ອງລິຂະສິດ.
- ສືບຕໍ່ປະສານກັບສາຍຕັ້ງ ເພື່ອຄົ້ນຄວ້າໃຫ້ໄດ້ເຕັກໂນໂລຊີໃໝ່ທີ່ເປັນມິດກັບສິ່ງແວດລ້ອມເປັນຕົ້ນ: ປຸ໋ຍຊີວະພາບ, ນ້ຳມັນໄບໂອດີແຊວ, ເຕົາແກັດຊີວະພາບ, ພະລັງງານນ້ຳ, ພະລັງງານລົມ, ພະລັງງານແສງແດດ.
- ຝຶກອົບຮົມ ແລະ ນຳໃຊ້ ວິທະຍາສາດ ລວມທັງວຽກງານຊັບສິນທາງປັນຍາ, ມາດຖານວັດແທກ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ເຂົ້າໃນວຽກງານຕົວຈິງ.

**⊕ ວຽກງານຈຸດສຸມ ແລະ ໂຄງການຕົ້ນຕໍ:**

(1) ສຸມໃສ່ປະສານກັບສາຍຕັ້ງ ເພື່ອພັດທະນາວຽກງານຄົ້ນຄວ້າວິທະຍາສາດ ແລະ ພັດທະນາເຕັກໂນໂລຊີ, ຂໍ້ມູນຂ່າວສານ, ຊີວະພາບ ແລະ ພະລັງງານທົດແທນ-ວັດສະດຸໃໝ່. ພ້ອມດຽວກັນນັ້ນ, ກໍຕ້ອງໄດ້ການເຜີຍແຜ່ຜົນການຄົ້ນຄວ້າດັ່ງກ່າວໃຫ້ສັງຄົມ.

(2) ເພີ່ມທະວີການຄຸ້ມຄອງ, ບໍລິການ ແລະ ໂຄສະນາເຜີຍແຜ່ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ.

(3) ພັດທະນາພື້ນຖານໂຄງລ່າງໃຫ້ມີມາດຕະຖານຫ້ອງຖິ່ນໂດຍສະເພາະຫ້ອງທົດລອງໃນຂົງເຂດຄົ້ນຄ້ວາ, ນຳໃຊ້ວິທະຍາສາດ ແລະ ນະວັດຕະກຳ, ສວນອຸດທິຍານວິທະຍາສາດສູນຂໍ້ມູນຂ່າວສານທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ.

(4) ປັບປຸງບໍລິການຂົງເຂດຊັບສິນທາງປັນຍາ, ມາດຖານ-ວັດແທກ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະສະຖິຕິຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີເພື່ອປົກປ້ອງຜູ້ຊົມໃຊ້ໃຫ້ສົ່ງເສີມຄວາມເປັນທຳໃນກຸ່ມຜູ້ຜະລິດ ແລະ ສົ່ງເສີມຫົວຄິດປະດິດສ້າງໃນສັງຄົມ.

### 2.2.8. ການເສີມສ້າງຄວາມສາມັກຄີທົ່ວປວງຊົນ

**⊕ ທິດທາງ**

ເສີມຂະຫຍາຍ ແລະ ຍົກສູງສະຕິເຄົາລົບໃຫ້ປະຊາຊົນບັນດາເຜົ່າມີຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃຫ້ມີຄວາມໜັກແໜ້ນຕໍ່ອຸດົມການສັງຄົມນິຍົມ; ເປີດກ້ວາງ ແລະ ເສີມຂະຫຍາຍປະຊາທິປະໄຕຕາມຫຼັກການແບບລວມສູນຢ່າງເຂັ້ມງວດ, ເພີ່ມທະວີກໍ່ສ້າງຮາກຖານການເມືອງໃຫ້ເຂັ້ມແຂງດ້ວຍການອົບຮົມດ້ານການເມືອງ-ແນວຄິດ ແລະ ລະບຽບວິໄນທີ່ພັກ-ລັດວາງອອກ. ເສີມຂະຫຍາຍແນວຄິດປະດິດສ້າງຂອງນັກຮຽນຮູ້ປັນຍາຊົນ, ພະນັກງານທະຫານ-ຕຳຫລວດປະກອບສ່ວນໃນການສ້າງລັດປະຊາທິປະໄຕ, ມີສັນຕິພາບ, ເອກະລາດ, ວັດທະນາຖາວອນ. ເສີມຂະຫຍາຍແບບແຜນນຳພາທີ່ເປັນມູນເຊື້ອອັນດີງາມຂອງພັກ-ລັດ ໃຫ້ແທດເໝາະກັບສະພາບຕົວຈິງ, ມີວິທະຍາສາດ, ມີປະຊາທິປະໄຕ. ໃນໄລຍະການເຊື່ອມໂຍງ ແລະ ຮ່ວມມືກັບຕ່າງປະເທດ ຈຶ່ງຖືສຳຄັນການປະຕິບັດແນວທາງການຕ່າງປະເທດຂອງພັກ-ລັດ.

⊕ **ວຽກຈຸດສຸມແລະໂຄງການຕົ້ນຕໍ:**

(1) ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການສຶກສາອົບຮົມການເມືອງແນວຄິດໃຫ້ແມ່ຍິງ, ໄວໜຸ່ມ, ເຍົາວະຊົນ ແລະ ປະຊາຊົນບັນດາເຜົ່າໃຫ້ເຊື່ອມຊຶມຢ່າງກວ້າງຂວາງ ແລະ ເລິກເຊິ່ງເພື່ອປະກອບ ສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາປະເທດຊາດ.

(2) ປັບປຸງກົງຈັກການຈັດຕັ້ງ ແລະ ການຄຸ້ມຄອງຕາມທິດເສີມຂະຫຍາຍວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ (3ສ້າງ).

### 2.2.9. ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ

ເພີ່ມທະວີໃນການໂຄສະນາເຜີຍແຜ່, ເຊື່ອມຊຶມບັນດານິຕິກຳ, ລະບຽບ, ກົດໝາຍ ແລະ ນະໂຍບາຍຂອງພັກ ແລະລັດໃຫ້ແກ່ສັງຄົມ ໂດຍສະເພາະປະຊາຊົນໃນຂົງເຂດຊົນນະບົດດ້ວຍຫລາຍຮູບຫລາຍແບບແນ່ໃສ່ການເຂົ້າຮ່ວມໃນຂະບວນການພັດທະນາໃຫ້ຫຼາຍຂຶ້ນ, ເພີ່ມຄວາມເຂັ້ມງວດຕໍ່ການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ເພື່ອສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມເປັນຕົ້ນ: ການສໍ້ລາດຫວັງຫລວງ, ການຂີ້ລັກງັດແງະ, ການຄ້າມະນຸດ-ຂາຍປະເວນີ, ການພະນັນ, ການນຳໃຊ້ພາພານະບໍ່ຖືກເປົ້າໝາຍ,ໃຊ້ອາວຸດລາເນື້ອໂດຍບໍ່ໄດ້ຮັບອະນຸຍາດ, ການຄ້າຂາຍ ແລະ ເສບຢາເສບຕິດໂດຍສະເພາະເລັ່ງໃສ່ກຸ່ມໄວໜຸ່ມຢູ່ເຂດເທດສະບານແຂວງ, ບັນດາເມືອງ ແລະ ໃນຊົນນະບົດ ເຂດຫ່າງໄກສອກຫລີກ ເຊິ່ງປະຈຸບັນພວມມີບັນຫາເກືອບທຸກບ້ານໃນທົ່ວແຂວງ.

## 2.3. ການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການຄຸ້ມຄອງພັດທະນາທີ່ດິນ.

⊕ **ທິດທາງ**

ເປັນເຈົ້າການປົກປັກຮັກສາສິ່ງແວດລ້ອມ ແລະ ເປັນເຈົ້າການໃນການຮັບມືກັບໄພພິບັດຕ່າງໆ. ສ້າງເສດຖະກິດສີຂຽວ, ສະອາດ ແລະ ສວຍງາມ ເພື່ອໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີ, ມີສຸຂະພາບທີ່ແຂງແຮງ ແລະ ປອດໄພຈາກມົນລະພິດ, ໂດຍມີການວາງຜັງເມືອງແບບຍືນຍົງ. ເພີ່ມທະວີຄວາມສາມາດໃນການປັບໂຕ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ.

⊕ **ຄາດໝາຍ**

**1). ວຽກງານທີ່ດິນ**

- ສູ້ຊົນຈັດຕັ້ງປະຕິບັດຕາມກົນໄກບໍລິຫານທີ່ດິນທີ່ເປັນທຳ ແລະ ການເຂົ້າເຖິງການນຳໃຊ້ທີ່ດິນ ທີ່ສະເໝີພາບກັນຂອງປະຊາຊົນບັນດາເຜົ່າ ແລະ ສົ່ງເສີມບົດບາດຍິງ-ຊາຍໃຫ້ເທົ່າທຽມກັນ.

- ສູ້ຊົນເກັບລາຍຮັບຈາກຄ່າບໍລິການວິຊາການ ແຕ່ປີ 2016-2020 ລວມມີມູນຄ່າ 1.000.000.000ກີບ

- ສູ້ຊົນສ້າງສຳມະໂນທີ່ດິນໃຫ້ໄດ້ 50.000 ຕອນ ໃນ 5 ຕົວເມືອງ, ສຳຫຼວດວັດແທກ, ພິສູດຫຼັກຖານຂຶ້ນທະບຽນອອກໃບຕາດິນໃຫ້ໄດ້ 30.000 ຕອນ, ສ້າງສັນຍາເຊົ່າ-ສຳປະທານ ໃຫ້ໄດ້ 25 ໂຄງການ ເນື້ອທີ່ 41.000 ເຮັກຕາ ລວມມູນຄ່າເກັບລາຍຮັບທັງໝົດ 6,4 ຕື້ກີບ.

- ສູ້ຊົນວາງແຜນ-ຈັດສັນນຳໃຊ້ທີ່ດິນຈຸລະພາກພາຍໃນ 3 ເມືອງ ລວມມີ 68 ບ້ານ ຄື: ເມືອງໄຊເສດຖາ 20 ບ້ານ, ເມືອງສະໜາມໄຊ 22 ບ້ານ, ເມືອງສາມັກຄີໄຊ 26 ບ້ານ.

- ດຳເນີນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການບູລິມະສິດທີ່ນອນຢູ່ໃນຂະແໜງຄຸ້ມຄອງທີ່ດິນ ແລະ ຈັດສັນທີ່ດິນ ລວມມີ 3 ໂຄງການ.

**2). ວຽກງານຊັບພະຍາກອນນ້ຳ, ອຸຕຸນິຍົມ ແລະ ອຸທົກກະສາດ.**

- ດຳເນີນການສຳຫຼວດຊັບພະຍາກອນນ້ຳໜ້າດິນ-ນ້ຳໃຕ້ດິນ, ກຳນົດຈຸດຕິດຕາມກວດກາ ແລະ ເກັບກຳຕົວຢ່າງຄຸນນະພາບນ້ຳຈຳນວນ 16 ຈຸດ ໃນ 7 ສາຍນ້ຳຫຼັກຂອງແຂວງ.

- ຕິດຕາມ-ກວດກາຄຸນນະພາບນ້ຳທີ່ປ່ອຍອອກຈາກຄົວເຮືອນ, ຫ້າງຮ້ານ, ບໍລິສັດ, ລັດວິສະຫະກິດ, ໂຮງຈັກໂຮງງານຕ່າງໆ.

- ດຳເນີນການເຜີຍແຜ່ ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ດຳລັດວ່າດ້ວຍຄະນະກຳມະການຄຸ້ມຄອງອ່າງແມ່ນ້ຳເຊກອງ.

- ສ້າງຕັ້ງສະຖານີອຸຕຸນິຍົມ-ອຸທົກກະສາດ ປະເພດ II ຈຳນວນ 2 ແຫ່ງ ຢູ່ເມືອງພູວົງ-ຊານໄຊ, ສະຖານີອຸຕຸການບິນ 1 ແຫ່ງຢູ່ສະໜາມບິນສາກົນອັດຕະປື ແລະ ພ້ອມທັງປັບປຸງສະຖານີວັດແທກປະລິມານນ້ຳຝົນຈຳນວນ 8 ຈຸດທີ່ມີແລ້ວ.

- ເພີ່ມທະວີການຄຸ້ມຄອງ, ການຕິດຕາມກວດກາ ແລະ ການເກັບກຳຂໍ້ມູນ ການເຝົ້າລະວັງການປ່ຽນແປງຂອງດິນຟ້າອາກາດໃນແຕ່ລະໄລຍະ ເຊັ່ນ: ນ້ຳຖ້ວມ ,ແຫ້ງແລ້ງ, ລົມພະຍຸ ເພື່ອເຮັດການພະຍາກອນອາກາດແຈ້ງເຕືອນໄພລ່ວງໜ້າເພື່ອລາຍງານກົມອຸຕຸນິຍົມ-ອຸທົກກະສາດ ແລະ ອຳນາດການປົກຄອງທ້ອງຖິ່ນໃນແຕ່ລະຂັ້ນຮັບຊາບ.

**3). ວຽກງານທໍລະນີສາດ ແລະ ແຮ່ທາດ**

- ປະສານສົມທົບກັບບໍລິສັດການຊອກຄົ້ນ-ສຳຫຼວດແຮ່ທາດ, ເກັບກຳຂໍ້ມູນຈຸດປະກົດແຮ່ທາດຕ່າງໆພາຍໃນແຂວງ ແລະ ສ້າງແຜນທີ່ຈຸດປະກົດແຮ່ທາດຂັ້ນພື້ນຖານໂດຍສະເພາະແມ່ນແຮ່ທາດທີ່ມີຄວາມສຳຄັນທາງດ້ານເສດຖະກິດເປັນຕົ້ນ: ແຮ່ຄຳ, ທອງ, ຊືນ, ຫີນອ່ອນ, ຫີນອຸດສະຫະກຳ ແລະອື່ນໆ ໃນຂອບເຂດ 4 ເມືອງຄື: ເມືອງສະໜາມໄຊ, ເມືອງພູວົງ, ເມືອງໄຊເສດຖາ ແລະ ເມືອງຊານໄຊ ເພື່ອເປັນຂໍ້ມູນເບື້ອງຕົ້ນໃຫ້ແກ່ການລົງທຶນ.

- ຕິດຕາມເກັບກຳຂໍ້ມູນຂອງບໍລິສັດຕ່າງໆທີ່ໄດ້ເຄື່ອນໄຫວວຽກງານຊອກຄົ້ນ-ສຳຫຼວດແຮ່ທາດພາຍໃນແຂວງ ເພື່ອເປັນບ່ອນອີງໃນການສຶກສາໂຄງສ້າງທາງດ້ານທໍລະນີສາດ ແລະ ແຮ່ທາດ

- ດຳເນີນການສ້າງກົນໄກ ແລະ ລະບົບຖານຂໍ້ມູນການຄຸ້ມຄອງການຊອກຄົ້ນ ແລະ ການສຳຫຼວດແຮ່ທາດແບບຄົບຊຸດ

- ດຳເນີນການສຳຫຼວດ ແລະ ວິໄຈທາດເຈືອປົນ ກັບບັນດາບໍລິສັດທີ່ເຂົ້າມາລົງທຶນພາຍໃນແຂວງ

- ວາງແຜນການ, ສ້າງໂຄງການຂະໜາດນ້ອຍ ເພື່ອເກັບກຳຂໍ້ມູນ ແລະ ສຳຫຼວດເບື້ອງຕົ້ນ ກ່ຽວກັບຫີນອ່ອນແກ້ວ ແລະ ຫີນອຸດສາຫະກຳອື່ນໆໃນຂອບເຂດ 04 ຕົວເມືອງຄື: ເມືອງສະໜາມໄຊ, ເມືອງພູວົງ, ເມືອງໄຊເສດຖາ ແລະ ເມືອງຊານໄຊ ເພື່ອເປັນຂໍ້ມູນເບື້ອງຕົ້ນໃຫ້ແກ່ການລົງທຶນ

- ສ້າງໂຄງການສຳຫຼວດແຮ່ເມັດໜັກ (ຂີ້ປີກດຳ) ເຈືອປົນກັບຫີນແຮ່-ຊາຍຕາມລຳເຊ ແລະ ນຳສະເໜີຕໍ່ຂັ້ນເທິງໃນການອະນຸຍາດແຍກເອົາທາດດັ່ງກ່າວ ຕິດພັນກັບໂຄງການຂຸດຄົ້ນແຮ່ຫີນ-ຊາຍ.

- ວາງມາດຕະການຄຸ້ມຄອງກັບບັນດາກິດຈະການຂໍອະນຸຍາດຂຸດຄົ້ນແຮ່ຫີນ-ຊາຍ ຕາມລຳເຊ.

**4). ວຽກງານຄຸ້ມຄອງຊັບພະຍາກອນປ່າໄມ້.**

- ສືບຕໍ່ວຽກງານເຜີຍແຜ່ລະບຽບກົດໝາຍ, ສ້າງຈິດສຳນຶກໃນການອານຸລັກຊັບພະຍາກອນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ.

- ວາງແຜນສຳຫຼວດຈັດສັນປ່າສະຫງວນ, ປ່າປ້ອງກັນພ້ອມທັງເຮັດວຽກງານການຟື້ນຟູປ່າແບບທຳມະຊາດ ແລະ ປູກໃນເຂດປ່າຊຸດໂຊມ.

- ສືບຕໍ່ສຳຫຼວດປັກຫຼັກໝາຍ, ຕິດປ້າຍປ່າສະຫງວນ ແລະ ປ່າປ້ອງກັນໃຫ້ສຳເລັດ.

- ເພີ້ມທະວີການຈັດຕັ້ງປະຕິບັດວຽກງານເຄື່ອນໄຫວ, ກວດກາລາດຕາເວນ ເພື່ອສະກັດກັ້ນການລັກລອບຕັດໄມ້ເຄື່ອງປ່າຂອງດົງ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ.

- ສ້າງຕັ້ງຕາໜ່າງປ່າໄມ້ຂັ້ນບ້ານແລະສ້າງດ່ານກວດກາເຂົ້າອອກຕາມຈຸດຫຼໍ່ແຫຼມຕ່າງໆໃນປ່າສະຫງວນໃຫ້ໄດ້ 9 ຈຸດ ແລະ ປ່າປ້ອງກັນໃຫ້ໄດ້ 7 ຈຸດໃນ 5 ເມືອງ.

- ດຳເນີນການສ້າງກົນໄກລະບຽບການ ແລະ ສຶກສາຂໍ້ມູນພື້ນຖານໃນການຄຸ້ມຄອງ, ການຫຼຸດຜ່ອນທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ.

**5). ວຽກງານຄຸ້ມຄອງສິ່ງແວດລ້ອມ, ໄພພິບັດ ແລະ ຕິດຕາມການປ່ຽນແປງດິນຟ້າອາກາດ.**

- ດຳເນີນການຕິດຕາມດ້ານສິ່ງແວດລ້ອມໂຄງການຂຸດຄົ້ນແລະປຸງແຕ່ງແຮ່ຄຳບ້ານວັງຕັດໃຫ່ຍເມືອງຊານໄຊ, ໂຄງການໄຟຟ້ານ້ຳຕົກເຊກະໝານ 1, ນ້ຳກົງ 0, 1, 2, 3, ເຊປຽນ, ເຊນ້ຳນ້ອຍ, ເຊຊຸ, ໂຄງການປູກພືດອຸດສະຫະກຳ, ໂຮງງານອຸດສະຫະກຳພາຍໃນແຂວງແລະກິດຈະການລົງທຶນຕ່າງໆພາຍໃນແຂວງ.

- ສ້າງຍຸດທະສາດແລະແຜນດຳເນີນງານສິ່ງແວດລ້ອມຂອງແຂວງ, ສ້າງຈິດສຳນຶກດ້ານສິ່ງແວດລ້ອມໃຫ້ແກ່ປະຊາຊົນບັນດາເຜົ່າໃນທົ່ວແຂວງ, ຊຸກຍູ້ການສ້າງແຜນຄຸ້ມຄອງສິ່ງແວດລ້ອມໃນລະດັບຄອບຄົວໃຫ້ສຳເລັດ 100% ພ້ອມທັງສ້າງຕົວເມືອງສາມັກຄີໄຊ ແລະ ໄຊເສດຖາໃຫ້ເປັນຕົວເມືອງ "ສີຂຽວ, ສະອາດ ແລະ ງາມຕາ".

- ດຳເນີນການສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ເມືອງ ແລະ ບ້ານດາເນີນການປະເມີນຄວາມຕ້ອງການ ແລະ ດຳເນີນງານສ້າງຕັ້ງລະບົບເຕືອນໄພລ່ວງໜ້າຢູ່ບັນດາພື້ນທີ່ມີຄວາມສ່ຽງເປັນຕົ້ນ: ເມືອງສະໜາມໄຊ, ສາມັກຄີໄຊ, ໄຊເສດຖາ ແລະ ເມືອງພູວົງ.

- ດຳເນີນການສ້າງແຜນການເພື່ອຮັບມື ແລະ ຕອບໂຕ້ ເຂດທີ່ມີຄວາມສ່ຽງຈາກໄພພິບັດ ເປັນຕົ້ນ: ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມຂັ້ນແຂວງ ແລະ ຂັ້ນເມືອງ

- ເພີ່ມທະວີການຮ່ວມມືກັບສາກົນ ໃນການເຄື່ອນໄຫວວຽກງານຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນຮອນ ເພື່ອສະໜັບສະໜູນໃຫ້ແກ່ການເຄື່ອນໄຫວສຳລັບການປ່ຽນແປງຂອງດິນຟ້າອາກາດ ແລະ ການຄຸ້ມຄອງໄພພິບັດ. ພ້ອມທັງສ້າງຈິດສຳນຶກໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃຫ້ແກ່ປະຊາຊົນບັນດາເຜົ່າ ແລະ ດຳເນີນການຈັດຕັ້ງປະຕິບັດແຜນງານໂຄງການບູລິມະສິດ ມີຈຳນວນ 5 ໂຄງການ.

**⊕ ວຽກຈຸດສຸມ, ແຜນງານ ແລະ ໂຄງການ**

1) ສູ້ຊົນສ້າງສຳມະໂນທີ່ດິນໃຫ້ໄດ້ 50.000 ຕອນໃນ 5 ຕົວເມືອງ, ສຳຫຼວດວັດແທກ, ພິສູດຫຼັກຖານຂຶ້ນທະບຽນອອກໃບຕາດິນໃຫ້ໄດ້ 30.000 ຕອນ, ສ້າງສັນຍາເຊົ່າ-ສຳປະທານໃຫ້ໄດ້ 25 ໂຄງການ ເນື້ອທີ່ 41.000 ເຮັກຕາ, ລວມມູນຄ່າເກັບລາຍຮັບທັງໝົດ 6,4 ຕື້ກີບ.

2) ສູ້ຊົນວາງແຜນ-ຈັດສັນນຳໃຊ້ທີ່ດິນຈຸລະພາກພາຍໃນ 3 ເມືອງ ລວມມີ 68 ບ້ານຄື: ເມືອງໄຊເສດຖາ 20 ບ້ານ, ເມືອງສະໜາມໄຊ 22 ບ້ານ ແລະ ເມືອງສາມັກຄີໄຊ 26 ບ້ານ.

3) ດຳເນີນການສຳຫຼວດຊັບພະຍາກອນນ້ຳໜ້າດິນ-ນ້ຳໃຕ້ດິນ, ກຳນົດຈຸດຕິດຕາມກວດກາ ແລະ ເກັບກຳຕົວຢ່າງຄຸນນະພາບນ້ຳຈຳນວນ 16 ຈຸດ ໃນ 7 ສາຍນ້ຳຫຼັກຂອງແຂວງ.

4) ຕິດຕາມ-ກວດກາຄຸນນະພາບນ້ຳທີ່ປ່ອຍອອກຈາກຄົວເຮືອນ, ຫ້າງຮ້ານ, ບໍລິສັດ, ລັດວິສະຫະກິດ, ໂຮງຈັກໂຮງງານຕ່າງໆ.

5) ສ້າງຕັ້ງສະຖານີອຸຕຸນິຍົມ-ອຸທົກກະສາດ ປະເພດ II ຈຳນວນ 2 ແຫ່ງ ຢູ່ເມືອງພູວົງ ແລະ ເມືອງຊານໄຊ, ສະຖານີອຸຕຸການບິນ 1 ແຫ່ງຢູ່ສະໜາມບິນສາກົນອັດຕະປື ແລະ ພ້ອມທັງປັບປຸງສະຖານີວັດແທກປະລິມານນ້ຳຝົນຈຳນວນ 8 ຈຸດທີ່ມີແລ້ວ.

6) ດຳເນີນການສ້າງກົນໄກ ແລະ ລະບົບຖານຂໍ້ມູນການຄຸ້ມຄອງການຂຸດຄົ້ນ ແລະ ການສຳຫຼວດແຮ່ທາດແບບຄົບຊຸດ

7) ວາງແຜນສຳຫຼວດຈັດສັນປ່າສະຫງວນ, ປ່າປ້ອງກັນພ້ອມທັງເຮັດວຽກງານການຟື້ນຟູປ່າແບບທຳມະຊາດ ແລະ ປູກໃນເຂດປ່າຊຸດໂຊມ.

8) ດຳເນີນການສ້າງກົນໄກລະບຽບການ ແລະ ສຶກສາຂໍ້ມູນພື້ນຖານໃນການຄຸ້ມຄອງ, ການຫຼຸດຜ່ອນທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ.

9) ສ້າງຍຸດທະສາດ ແລະ ແຜນດຳເນີນງານສິ່ງແວດລ້ອມຂອງແຂວງ, ສ້າງຈິດສຳນຶກດ້ານສິ່ງແວດລ້ອມໃຫ້ແກ່ປະຊາຊົນບັນດາເຜົ່າໃນທົ່ວແຂວງພ້ອມທັງສ້າງຕົວເມືອງສາມັກຄີໄຊ ແລະ ໄຊເສດຖາໃຫ້ເປັນຕົວເມືອງສີຂຽວ, ສະອາດ ແລະງາມຕາ.

10) ສາງແຜນທີ່ ແລະ ລະບົບເຕືອນໄພລ່ວງໜ້າຄົບຊຸດ (ອຸປະກອນທົດລອງ, ເຄື່ອງມື, ສິ່ງອຳນວຍຄວາມສະດວກ).

11) ກໍ່ສ້າງພະນັກງານວິຊາການສະເພາະດ້ານໃຫ້ມີຄຸນນະພາບໃນໜ້າວຽກທີ່ຮັບຜິດຊອບ.

### (3). ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ

**⊕ ທິດທາງ**

ການພັດທະນາຄົນແມ່ນປັດໃຈສຳຄັນໃນການພັດທະນາປະເທດ ໂດຍສະເພາະໃນຍຸກຂອງວິທະຍາສາດ-ເຕັກໂນໂລຊີ ແລະ ຍຸກແຫ່ງການເຊື່ອມໂຍງ ຈຳເປັນຕ້ອງໄດ້ສ້າງຄົນໃຫ້ມີຄວາມຫລາກຫລາຍທາງດ້ານລະດັບຄວາມຮູ້, ຄວາມສາມາດ ແລະ ຫລາຍສາຂາວິຊາຊີບ, ສ້າງໃຫ້ໄດ້ຜູ້ຊ່ຽວຊານສະເພາະດ້ານ ເພື່ອປະກອບເຂົ້າໃນອົງການຈັດຕັ້ງຂັ້ນຕ່າງໆທັງພາກລັດ ແລະ ເອກະຊົນ ເພື່ອໃຫ້ເຂົາເຈົ້າປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດ ແລະ ສາມາດດຳເນີນທຸລະກິດສ່ວນຕົວຂອງຕົນເອງ.

**⊕ ຄາດໝາຍຕົ້ນຕໍ:**

- ສ້າງໃຫ້ໄດ້ນາຍຊ່າງດ້ານກໍ່ສ້າງ ແລະ ສ້ອມແປງພາຫະນະ ແລະ ອື່ນໆ,

- ສ້າງໃຫ້ໄດ້ນັກວິສະວະກອນໃນຂະແໜງໄຟຟ້າ, ກໍ່ສ້າງ, ບໍ່ແຮ່, ທໍລະນີສາດ ແລະ ອື່ນໆ,
- ສ້າງໃຫ້ໄດ້ຜູ້ຄຸ້ມຄອງ-ບໍລິຫານດ້ານຕ່າງໆ ເປັນຕົ້ນແມ່ນ ບໍລິຫານທຸລະກິດ, ການເງິນ, ເສດຖະສາດ, ນັກກົດໝາຍ ແລະ ທະນາຍຄວາມ.
- ສ້າງຄວາມເຂັ້ມແຂງໃຫ້ຫົວໜ່ວຍທຸລະກິດ ໂດຍສະເພາະແມ່ນວິສາຫະກິດຂະໜາດນ້ອຍ ແລະ ກາງ.

⊕ **ວຽກງານຈຸດສຸມ ແລະ ໂຄງການຕົ້ນຕໍ:**

(1) ສຸມໃສ່ປັບປຸງ ແລະ ຂະຫຍາຍຫຼັກສູດໃນລະດັບອາຊີວະສຶກສາ ແລະ ມະຫາວິທະຍາໄລ.

(2) ປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງຮັບໃຊ້ໃຫ້ແກ່ການຮຽນ-ການສອນ ແລະ ຝຶກອົບຮົມວິຊາຊີບດ້ານຕ່າງໆ.

(3) ປັບປຸງ ແລະ ພັດທະນາກົນໄກການປະສານງານລະຫວ່າງພາກລັດ ແລະ ເອກະຊົນ ໃນການສ້າງນາຍຊ່າງ ແລະ ວິຊາການຜູ້ຊຳນານງານ.

## (4). ການຄຸ້ມຄອງ ແລະ ບໍລິຫານລັດ

ສືບຕໍ່ປັບປຸງ ແລະ ບູລະນະ ລະບົບການເມືອງ ປະຊາທິປະໄຕປະຊາຊົນ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ, ໂດຍສືບຕໍ່ຍຸດທະສາດຫັນລົງຮາກຖານການເມືອງຕິດພັນກັບການສ້າງ ແລະ ກຸ່ມບ້ານພັດທະນາ ເຮັດໃຫ້ລະບົບການເມືອງປະຊາທິປະໄຕປະຊາຊົນ ໄດ້ຮັບການບູລະນະຕາມທິດສ້າງລັດແຫ່ງກົດໝາຍ ແລະ ມີຄວາມສາມາດໃນການປະຕິບັດພາລະບົດບາດຂອງຕົນ ໄດ້ຢ່າງມີຄວາມສັກສິດຍິ່ງໆຂຶ້ນ.

### 4.1. ວຽກງານສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

ເອົາໃຈໃສ່ປັບປຸງການຈັດຕັ້ງ, ໃຫ້ສອດຄ່ອງຕາມພາລະບົດບາດ ແລະ ສະພາບຄວາມເປັນຈິງ ເປັນຕົ້ນຕ້ອງເພີ່ມກຳມະການພັກແຂວງ ເຂົ້າໃນໂຄງປະກອບບຸກຄະລະກອນຂອງສາພາແຫ່ງຊາດ, ເພີ່ມຈຳນວນສະມາຊິກສະພາແຫ່ງຊາດປະຈຳການ ແຕ່ 50-60% ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ກະກຽມຄວ່ມພ້ອມດ້ານຕ່າງໆ ເພື່ອຮອງຮັບໃຫ້ແກ່ການສ້າງຕັ້ງສະພາທ້ອງຖິ່ນ, ຍົກສູງຄຸນນະພາບໃນການເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນບັນດາເຜົ່າ, ເອົາໃຈໃສ່ ແກ້ໄຂຄຳຮ້ອງຂໍຄວາມເປັນທຳໃຫ້ວ່ອງໄວ ແລະ ຮັບປະກັນຄວາມຍຸຕິທຳ, ຍົກສູງຄຸນນະພາບໃນການພິຈາລະນາຮັບຮອງບັນຫາສຳຄັນຂອງທ້ອງຖິ່ນຕົນ ແລະ ວຽກງານການຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ ແລະ ອົງການຕຸລາການ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ເອົາໃຈໃສ່ຕໍ່ວຽກງານການລົງພົບປະຊາຊົນຜູ້ມີສິດເລືອກຕັ້ງ ເພື່ອເກັບກຳຂໍ້ມູນ ແລະ ຄວາມມຸ້ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ, ພ້ອມທັງຜັນຂະຫຍາຍຜົນສຳເລັດກອງປະຊຸມຂອງສະພາແຫ່ງຊາດແຕ່ລະຄັ້ງໃຫ້ທົ່ວເຖິງ.

### 4.2. ວຽກງານອົງການໄອຍະການ ແລະ ສານປະຊາຊົນ

ເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍຂອງຂະແໜງການຕ່າງໆໃນທົ່ວແຂວງໃຫ້ເລິກເຊິ່ງ ແລະ ມີຈຸດສຸມ ເປັນຕົ້ນ ການດຳເນີນຄະດີຂອງອົງການສືບສວນ-ສອບສວນ, ການດຳເນີນຄະດີໃນທີ່ປະຊຸມສານ, ການຈັດຕັ້ງປະຕິບັດຄຳຕັດສີນຂອງສານ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ສະຖານທີ່ປະຕິບັດໂທດ. ນຳໃຊ້ມາດຕາການທາງດ້ານກົດໝາຍຢ່າງເຂັ້ມງວດເພື່ອຮັບປະກັນແກ່ການຄົ້ນຄ້ວາແກ້ໄຂຄະດີໃຫ້ທ່ວງທັນກັບກຳນົດເວລາ ແລະ ໃຫ້ສຳເລັດ 95% ຂຶ້ນໄປຂອງຄະດີທີ່ເຂົ້າມາທັງໝົດ.

ປັບປຸງແບບແຜນວິທີເຮັດວຽກຂອງກົງຈັກບໍລິຫານສານປະຊາຊົນແຂວງໃຫ້ສອດຄ່ອງກັບກົດໝາຍ, ເພີ່ມທະວີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການນຳໃຊ້ມາດຕາການທາງດ້ານກົດໝາຍຢ່າງເຂັ້ມງວດ ແນໃສ່ການພິຈາລະນາແກ້ໄຂຄະດີໃຫ້ສຳເລັດ 90% ຂຶ້ນໄປຂອງຄະດີທັງໝົດ, ເພື່ອຮັບປະກັນບໍ່ໃຫ້ຜູ້ກະທຳຜິດຫຼຸດພົ້ນອອກຈາກການລົງໂທດ ແລະ ບໍ່ລົງໂທດຜູ້ທີ່ບໍ່ໄດ້ກະທຳຜິດ.

### 4.3. ວຽກງານຍຸຕິທຳ

- ເອົາໃຈໃສ່ໂຄສະນາສ້າງສະຕິເຄົາລົບກົດໝາຍ ໃຫ້ແກ່ພະນັກງານ ແລະປະຊາຊົນບັນດາເຜົ່າດ້ວຍຫຼາຍຮູບການ ແລະ ວິທີການ, ຮັບປະກັນໃຫ້ພົນລະເມືອງໄດ້ເຂົ້າຮ່ວມຮັບຟັງ 90% ຂຶ້ນໄປ, ເອົາໃຈໃສ່ໂຄສະນາກົດໝາຍທາງວິທະຍຸ, ໂທລະໂຄງໃຫ້ເປັນປົກກະຕິ ແລະ ທົ່ວເຖິງ, ປັບປຸງ ແລະ ຝຶກອົບຮົມໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໃຫ້ໄດ້ 100% ຂອງໜ່ວຍໄກ່ເກ່ຍໃນທົ່ວແຂວງ, ສ້າງຄອບຄົວປອດຄະດີໃຫ້ໄດ້ 10,000 ຄອບຄົວຂຶ້ນໄປຕໍ່ປີສ້າງບ້ານປອດຄະດີໃຫ້ໄດ້ 25 ບ້ານຂຶ້ນໄປຕໍ່ປີ, ເປີດຮຽນກົດໝາຍຊັ້ນຕົ້ນໃຫ້ແກ່ອຳນາດການປົກຄອງ ແລະປະຊາຊົນຢູ່ຮາກຖານໃຫ້ໄດ້ປີລະ 1 ຊຸດໃນ 5 ເມືອງ, ຄາດຄະເນມີຜູ້ເຂົ້າຮຽນຢ່າງໜ້ອຍຊຸດລະ 150 ຄົນຂຶ້ນໄປ, ຝຶກອົບຮົມກົດໝາຍໄລຍະສັ້ນໃຫ້ແກ່ພະນັກງານຫຼັກແຫຼ່ງໃນທົ່ວແຂວງໃຫ້ໄດ້ 2 ຊຸດຕໍ່ປີ, ຄາດຄະເນມີຜູ້ເຂົ້າຝຶກອົບຮົມບໍ່ໃຫ້ຫຼຸດ 50 ຄົນຕໍ່ຊຸດ;
- ສູ້ຊົນຈັດຕັ້ງປະຕິບັດຄຳຕັດສິນໃຫ້ສຳເລັດຫຼາຍກວ່າ 60% ຂອງຄຳຕັດສິນທັງໝົດ ຫຼືໃຫ້ສຳເລັດ 24 ເລື່ອງຕໍ່ພະນັກງານປະຕິບັດໜຶ່ງຄົນຕໍ່ປີ, ຄົ້ນຄ້ວາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງສັນຍາປະເພດຕ່າງໆໃຫ້ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ 100%;
- ປະສານສົມທົບກັບຂະແໜງການຕ່າງໆ ເພື່ອຈັດຕັ້ງປະຕິບັດວຽກງານສ້າງນິຕິກຳ, ການໂຄສະນາເຜີຍແຜ່ກົດໝາຍ ແລະ ການຈັດຕັ້ງປະຕິບັດກົດໝາຍໃນທົ່ວແຂວງໃຫ້ດີຂຶ້ນເທື່ອລະກ້າວ.

### 4.4. ອົງການບໍລິຫານ

ປັບປຸງແບບແຜນວິທີເຮັດວຽກ ແລະ ກົນໄກການປະສານງານໃຫ້ກົມກຽວເປັນເອກະພາບໄປຄຽງຄູ່ກັບການປັບປຸງພາລະບົດບາດຂອງແຕ່ລະອົງການ-ຂະແໜງການອ້ອມຂ້າງແຂວງໃຫ້ໄປຕາມທິດໂດຍການແບ່ງຂັ້ນຄຸ້ມຄອງ ແລະມອບໝາຍຄວາມຮັບຜິດຊອບໃຫ້ແກ່ເມືອງຫລາຍຂຶ້ນ; ປະຕິບັດມະຕິ 03 ຂອງກົມການເມືອງກ່ຽວກັບ 3 ສ້າງເປັນຈິງ.

ເພີ່ມທະວີຄວາມສັກສິດແລະປະສິດທິພາບຂອງການບໍລິຫານລັດກໍ່ຄືການຄຸ້ມຄອງເສດຖະກິດ-ສັງຄົມ ຕາມກົດໝາຍດ້ວຍການປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ; ເພີ່ມທະວີລະບອບການຕິດຕາມກວດກາຕີລາຄາການຈັດຕັ້ງປະຕິບັດນະໂຍບາຍ ແລະ ລະບຽບກົດໝາຍຂອງລັດໃຫ້ເປັນປົກກະຕິ; ພ້ອມກັນນັ້ນກໍ່ສຸມໃສ່ກວດກາການປະຕິບັດໜ້າທີ່, ການປະຕິບັດວິໄນຂອງພະນັກງານຕິດພັນກັບການະກັດກັ້ນ ແລະ ແກ້ໄຂບັນຫາການສໍ້ລາດບັງຫລວງ.

### 4.5. ບັນດາອົງການຈັດຕັ້ງມະຫາຊົນ

ສືບຕໍ່ເສີມຂະຫຍາຍຄວາມເປັນເຈົ້າການຢ່າງໜັກແໜ້ນ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ເພີ່ມທະວີຄວາມເອົາໃຈໃສ່ໃນການສຶກສາອົບຮົມສະມາຊິກ ແລະ ມະຫາຊົນ ໃນການປະຕິບັດບັນຄຳຂວັນ, ຂໍ້ແຂ່ງຂັນ ແລະ ກິດຈະກຳຕ່າງໆປະກອບສ່ວນເຮັດໃຫ້ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ປະກົດຜົນເປັນຈິງ.

### (5). ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

#### 5.1. ວຽກງານປ້ອງກັນຊາດ

ອອກແຮງສ້າງກຳລັງ ປກຊ ໃຫ້ນັບມື້ນັບເຂັ້ມແຂງຮອບດ້ານ ໂດຍສະເພາະ ດ້ານຄຸນທາດການເມືອງ, ທາດແທ້ປະຕິວັດ ແລະ ມູນເຊື້ອວິລະຊົນ; ກໍ່ສ້າງ ແລະ ບຳລຸງພະນັກງານໃຫ້ຫລັກໝັ້ນທາງດ້ານເມືອງໜັກແໜ້ນ, ມີຄວາມອົງອາດກ້າຫານ, ກຳແໜ້ນ ແລະ ປະຕິບັດແນວທາງປ້ອງກັນຊາດທົ່ວປວງຊົນ, ມີຄວາມກຽມພ້ອມ ແລະ ເສຍສະຫລະສູງ, ເຄົາລົບ ແລະ ປະຕິບັດວິໄນຢ່າງເຂັ້ມງວດ. ເອົາໃຈໃສ່ສືບຕໍ່ເພີ່ມທະວີຄວາມໜັກແໜ້ນເຂັ້ມແຂງ ແລະ ຍົກສູງຄວາມສາມາດກຽມພ້ອມສູ້ຮົບ, ສຸມໃສ່ປັບປຸງພື້ນຖານໂຄງລ່າງ, ວັດຖຸ-ເຕັກນິກ, ປະກອບພາຫະນະ, ອາວຸດຍຸດໂທປະກອນທີ່ທັນສະໄໝເທື່ອລະກ້າວ; ຍົກລະດັບຄຸນນະພາບຊີວິດຂອງພະນັກງານພາຍໃນກຳລັງປ້ອງກັນອາວຸດໃຫ້ມີຄວາມພ້ອມໃນທຸກດ້ານ. ເດັດດ່ຽວຍຶດໝັ້ນແນວທາງການຕ່າງປະເທດຂອງພັກ, ສ້າງສະພາບທີ່ເອື້ອອຳນວຍໃຫ້ແກ່ການພັດທະນາ ແລະປົກປັກຮັກສາປະເທດຊາດ; ສືບຕໍ່ຮ່ວມມືກັບກຳລັງ ປກຊ ຂອງບັນດາປະເທດເພື່ອນມິດຍຸດທະສາດ ໂດຍສະເພາະ ສສຫວຽດນາມ ແລະ ເສີມຂະຫຍາຍການຮ່ວມມືກັບບັນດາປະເທດໃກ້ຄຽງ

#### 5.2. ວຽກງານປ້ອງກັນຄວາມສະຫງົບ

ປັບປຸງ ແລະ ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ມີຈັນຍາບັນ-ຈັນຍາທຳ, ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ມີຄວາມສາມາດດ້ານວິຊາສະເພາະ ເພື່ອເປັນກຳລັງແຮງໃນການຮັກສາຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;ເອົາໃຈໃສ່ ແລະ ເພີ່ມທະວີ ການກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ຢູ່ຂັ້ນຮາກຖານບ້ານ ເພື່ອຮັບປະກັນຄວາມສະຫງົບປອດໄພ. ຕິດຕາມ ແລະ ກວດກາການເຂົ້າອອກເມືອງ, ການຄຸ້ມຄອງພົນລະເມືອງໃຫ້ຖືກຕ້ອງຕາມລະບຽບ.

### (6). ການຮ່ວມມືກັບສາກົນ ແລະ ພາກພື້ນ

ສືບຕໍ່ຍຶດໝັ້ນໃນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ແລະ ເປີດກວ້າງການພົວພັນຕ່າງປະເທດ; ສືບຕໍ່ປັບປຸງ ແລະ ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືຮອບດ້ານກັບບັນດາແຂວງຂອງປະເທດເພື່ອນມິດຍຸດທະສາດ ໂດຍສະເພາະບັນດາແຂວງພາກກາງ ແລະ ພາກໃຕ້ຂອງ ສສ ຫວຽດນາມ; ສືບຕໍ່ຊຸກຍູ້ສົ່ງເສີມການພົວພັນຮ່ວມມື, ຂົນຂວາຍ ແລະ ຍາດແຍ່ງທຶນຊ່ວຍເຫລືອທາງການເພື່ອການພັດທະນາຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ, ສະຖາບັນການເງິນ, ມູນລະນິທິຕ່າງໆ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ. ເຂົ້າຮ່ວມແກ້ໄຂຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນລາວ-ກຳປູເຈຍ ແລະ ອຳນວຍຄວາມສະດວກແກ່ການສຳຫລວດ ແລະ ການປັກຫລັກໝາຍຊາຍແດນ ຂອງຄະນະກຳມະການຊາຍແດນແຫ່ງຊາດ.

## IV. ມາດຕະການຈັດຕັ້ງປະຕິບັດ ແລະ ການແບ່ງຄວາມຮັບຜິດຊອບໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດບັນດາເປົ້າໝາຍ ແລະ ຄາດໝາຍສູ້ຊົນຂອງແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ໃຫ້ສຳເລັດຢ່າງມີປະສິດທິຜົນສູງ, ສະເໜີໃຫ້ບັນດາພະແນກການ, ຫ້ອງການ, ອົງການທຽບເທົ່າອ້ອມຂ້າງແຂວງ ແລະ ບັນດາເມືອງໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການຕົ້ນຕໍ ດັ່ງນີ້:

⊕ **ມາດຕະການຈັດຕັ້ງປະຕິບັດ**

- ຄະນະພັກ, ອໍານາດການປົກຄອງທຸກຂັ້ນ ຕ້ອງເປັນເຈົ້າການຫັນເອົາເນື້ອໃນແຜນພັດທະນາເສດຖະກິດ-ສັງຄົມຄົມ 5 ປີຄັ້ງທີ VIII ໄປຜັນຂະຫຍາຍໃຫ້ກາຍເປັນແຜນງານ, ໂຄງການລະອຽດຂອງແຕ່ລະຂະແໜງການ, ກົມກອງ, ຮາກຖານ ແລະ ເຜີຍແຜ່ໃຫ້ພະນັກງານ, ປະຊາຊົນຊັ້ນຄົນຕ່າງໆໃນສັງຄົມເຊື່ອມຊຶມຢ່າງທົ່ວເຖິງ ແລະ ເລິກເຊິ່ງເພື່ອພ້ອມກັນສືບຕໍ່ຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດເປັນຢ່າງດີ.

- ປັບປຸງແບບແຜນວິທີເຮັດວຽກຂອງຄະນະພັກ-ອໍານາດການປົກຄອງທຸກຂັ້ນ ໃຫ້ສອດຄ່ອງກັບການພັດທະນາໃນໄລຍະໃໝ່. ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ສ້າງບ້ານ-ກຸ່ມບ້ານພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນເມືອງນ້ອຍໃນຊົນນະບົດ ຕາມທິດ 3 ສ້າງໃຫ້ສໍາເລັດຕາມເປົ້າໝາຍ.

- ຕັ້ງໜ້າສຶກສາອົບຮົມການເມືອງ-ນໍາພາແນວຄິດໃຫ້ສະມາຊິກພັກ, ພະນັກງານ, ປະຊາຊົນຊັ້ນຄົນຕ່າງໆໃນສັງຄົມເຊື່ອມຊຶມກໍາແໜ້ນ ແລະ ພ້ອມກັນຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ມະຕິຄໍາສັ່ງຕ່າງໆ ເວົ້າລວມເວົ້າສະເພາະແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງອາງອອກໃຫ້ປະກົດຜົນເປັນຈິງ.

- ເອົາໃຈໃສ່ຮັກສາສະຖຽນລະພາບດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມຍຸຕິທໍາແລະຄວາມປອດໄພຂອງສັງຄົມ ໃຫ້ມີຄວາມສະຫງົບໝັກແໜ້ນ ເພື່ອສ້າງເງື່ອນໄຂອໍານວຍໃຫ້ແກ່ການພັດທະນາ, ການຂະຫຍາຍຕົວຂອງເສດຖະກິດຢ່າງຕໍ່ເນື່ອງ ແລະ ໝັ້ນທຽ່ງ, ປັບປຸງຊີວິດການເປັນຢູ່ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນບັນດາເຜົ່າລົງເທື່ອລະກ້າວ, ເພື່ອນໍາພາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020.

- ເພີ່ມທະວີການຄຸ້ມຄອງໂຄງການລົງທຶນຂອງລັດໃຫ້ໄປຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ, ຕິດຕາມກວດກາ, ປະເມີນຜົນໂຄງການຢ່າງເປັນລະບົບ, ບໍ່ອະນຸຍາດດໍາເນີນໂຄງການນອກແຜນ ຫຼື ເກີນທຶນທີ່ສະພາອະນຸມັດໃນແຜນ, ນໍາໃຊ້ກົນໄກການປະມູນ-ຈັດຊື້ຈັດຈ້າງໃຫ້ສອດຄ່ອງກັບລະບຽບກົດໝາຍ.

- ຂະຫຍາຍຖານການຜະລິດລົງສູ່ຊົນນະບົດໃນເຂດຫ່າງໄກສອກຫຼີກ, ພັດທະນາຊັບພະຍາກອນມະນຸດລວມທັງຝຶກອົບຮົມສີມືແຮງງານ ແລະ ສ້າງວຽກເຮັດງານທໍາ ໃຫ້ປະຊາຊົນຜູ້ທຸກຍາກ ໄດ້ມີລາຍຮັບ ເພື່ອຍົກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນເທື່ອລະກ້າວ.

- ເອົາໃຈໃສ່ສ້າງບຸກຄະລາກອນປະເພດຕ່າງໆ ເຊັ່ນ: ກໍາມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການ, ວິສະວະກອນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ຈັດການ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່.

- ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມ ເອົາໃຈໃສ່ປັບປຸງອໍານາດລັດໃຫ້ມີປະສິດທິພາບ, ມີຄວາມສັກສິດ, ປອດໃສ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງໂດຍມີກົງຈັກການຈັດຕັ້ງທີ່ສົມຄູ່ ແລະ ກະທັດຮັດສົມເຫດສົມຜົນ; ເດັດດ່ຽວກໍາຈັດປັດເປົ່າພະຍາດອາດຍາສິດ, ການສໍ້ລັດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆໃນກົງຈັກລັດ ກໍ່ຄືໃນຖັນແຖວພະນັກງານໃນການເຂົ້າຮ່ວມຂະບວນການພັດທະນາ ແລະ ສ້າງສາປະເທດຊາດເວົ້າລວມ, ເວົ້າສະເພາະຂະບວນການພັດທະນາແຂວງອັດຕະປື.

- ເພີ່ມທະວີການກໍ່ສ້າງຮາກຖານ-ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໂດຍຖືເອົາວຽກງານສ້າງບ້ານ ແລະ ກຸ່ມບ້ານພັດທະນາເປັນໃຈກາງຕາມ 4 ເນື້ອໃນ 4 ຄາດໝາຍ, ຈັດສັນພູມລໍາເນົາແລະອາຊີບຄົງທີ່ໃຫ້ແກ່ປະຊາຊົນ, ສ້າງຄວາມຢູ່ດີກິນດີໃຫ້ແກ່ປະຊາຊົນ, ສ້າງຄວາມຍຸຕິທໍາໃນສັງຄົມ, ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ-ຊົນນະບົດ, ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ.

- ປັບປຸງ ແລະ ແກ້ໄຂຂອດປະສານງານ, ການແບ່ງຂັ້ນຄຸ້ມຄອງ ລະຫວ່າງແຂວງ, ເມືອງ ແລະ ບ້ານ ຕາມທິດທາງທີ່ພັກວາງອອກ ຄື: ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃຫ້ປະກົດຜົນເປັນຈິງ.

- ເພີ່ມທະວີການພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ເພື່ອນມິດຍຸດທະສາດ ຫາໂອກາດດຶງດູດຍາດແຍ່ງເອົາການຊ່ວຍເຫຼືອລ້າ ແລະ ກູ້ຢືມດ້ອຍອັດຕາດອກເບ້ຍຕ່ຳ ຈາກອົງການຈັດຕັ້ງສາກົນ, ບຸກລະຄົນ ແລະ ສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ, ສ້າງໃຫ້ໂຄງປະກອບເສດຖະກິດຕາມທິດຫັນເປັນອຸດສະຫະກຳ ແລະ ທັນສະໄໝເປັນກ້າວໆ.

### ⊕ ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມຄັ້ງທີ VIII (2016-2020) ທີ່ວາງໄວ້ໃຫ້ໄດ້ໝາກຜົນ ສະເໜີໃຫ້ບັນດາຫົວໜ້າຫົວໜ້າພະແນກການ, ບັນດາເຈົ້າເມືອງ, ຫົວໜ້າຫ້ອງການຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃນການຊີ້ນຳໜ່ວຍງານຕ່າງໆ ທີ່ຂຶ້ນກັບຕົນເຮັດສຳເລັດໜ້າທີ່ໆໄດ້ມອບໝາຍ ໂດຍມີການແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງແຕ່ຂັ້ນແຂວງຫາຂັ້ນເມືອງ ເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ ແລະ ປະສິດທິຜົນ, ແຕ່ລະຂັ້ນມີໜ້າທີ່ຮັບຜິດຊອບ ດັ່ງນີ້:

- ພະແນກແຜນການ ແລະ ການລົງທຶນ: ອອກບົດແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ແຜນການລົງທຶນຂອງລັດ; ມີໜ້າທີ່ສະຫຼຸບ, ສັງລວມ, ຕີລາຄາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ການລົງທຶນຂອງລັດຢ່າງເປັນປົກກະຕິ.

- ພະແນກການເງິນ: ເປັນຜູ້ຄຸ້ມຄອງ, ຕິດຕາມການສະໜອງ ແລະ ການນຳໃຊ້ງົບປະມານຂອງລັດ ໃນຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດຂອງບັນດາພະແນກການ, ອົງການທຽບເທົ່າ ແລະ ບັນດາເມືອງ. ພ້ອມທັງສະຫຼຸບ, ສັງລວມສະພາບການຈັດຕັ້ງປະຕິບັດແຜນການນຳໃຊ້ງົບປະມານເຂົ້າໃນການລົງທຶນຂອງລັດເປັນແຕ່ລະງວດ ເພື່ອລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

- ບັນດາຂະແໜງການອ້ອມຂ້າງແຂວງ, ອົງການທຽບເທົ່າ ແລະ ບັນດາເມືອງ: ມີໜ້າທີ່ສະຫລຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນການລົງທຶນຂອງລັດໃນຂອບເຂດທີ່ຕົນຮັບຜິດຊອບ ເປັນແຕ່ລະງວດ, 6 ເດືອນ, ປະຈຳປີ, ເຄິ່ງສະໄໝ ແລະ 5 ປີ ແລ້ວສົ່ງເຖິງຂະແໜງແຜນການ ແລະ ການລົງທຶນ ເປັນປົກກະຕິ ພ້ອມທັງມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ໃນຂັ້ນຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ.

- ອົງການປົກຄອງທ້ອງຖິ່ນຂັ້ນເມືອງ ແລະ ບ້ານ ຕ້ອງມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນຂັ້ນຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ; ໃນກໍລະນີທີ່ບັນດາພະແນກການແລະຫ້ອງການ ໄດ້ມອບໂຄງການລົງທຶນຂອງລັດໃຫ້ເມືອງຈັດຕັ້ງປະຕິບັດນັ້ນ ກໍ່ໃຫ້ເມືອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ; ນອກນັ້ນ, ບັນດາເມືອງຍັງມີໜ້າທີ່ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດໃນຂອບເຂດທີ່ຕົນຮັບຜິດຊອບໃຫ້ຫ້ອງການແຜນການເມືອງ ເປັນແຕ່ລະງວດຢ່າງເປັນປົກກະຕິ.

- ບັນດາຫ້ອງການຕ່າງໆອ້ອມຂ້າງເມືອງ ຕ້ອງໄດ້ເປັນເອກະພາບກັນໃນການຈັດສັນໂຄງການລົງທຶນໃນແຕ່ລະສົກປີຂອງເມືອງ ເພື່ອສະເໜີເອົາບັນດາໂຄງການດັ່ງກ່າວບັນຈຸເຂົ້າໃນແຜນການ 5 ປີຂອງເມືອງ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຕາມຄວາມອາດສາມາດຕົວຈິງຂອງງົບປະມານໃນແຕ່ລະປີ.

- ແຂວງເປັນຜູ້ຄົ້ນຄວ້າ, ສັງລວມ ບັນດາໂຄງການບູລິມະສິດຂອງເມືອງ, ພ້ອມທັງສະເໜີເຖິງສູນກາງ ເພື່ອປະຕິບັດຕາມຂະບວນການຕ່າງໆຂອງລະບົບແຜນການ. ຈາກນັ້ນ, ກໍ່ສະເໜີຂໍທຶນພາຍໃນ ແລະ ລະດົມຂົນຂວາຍທຶນຮອນຈາກຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາຕ່າງໆມາຈັດຕັ້ງປະຕິບັດ.

- ພະແນກແຜນການ ແລະ ການລົງທຶນແຂວງ ແລະ ຫ້ອງການແຜນການເມືອງ ເອົາໃຈໃສ່ຕິດຕາມ, ຊຸກຍູ້ກວດກາ, ປະເມີນຜົນ ແລະ ລາຍງານໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ.

- ຄະນະຊີ້ນໍາກຸ່ມບ້ານ ຕ້ອງສົມທົບແໜ້ນກັບອໍານາດການປົກຄອງແຕ່ລະບ້ານ ແລະ ກອງກໍ່ສ້າງຮາກຖານທີ່ປະຈໍາຢູ່ກຸ່ມບ້ານດັ່ງກ່າວ ເປັນຜູ້ຈັດຕັ້ງເຜີຍແຜ່, ແນະນໍາ, ນໍາພາຈັດຕັ້ງປະຕິບັດແຜນດັ່ງກ່າວ ແລະ ລາຍງານຜົນຕໍ່ອໍານາດການປົກຄອງຂັ້ນເມືອງຮັບຊາບເປັນແຕ່ລະໄລຍະ.

- ມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ເປັນໃຈກາງປະສານງານລະຫວ່າງ ຂະແໜງການ, ອົງການທຽບເທົ່າອ້ອມຂ້າງແຂວງ ແລະ ບັນດາເມືອງ ຈັດຕັ້ງຜັນຂະຫຍາຍແຜນ 5 ປີ ຄັ້ງທີ VIII ສະບັບນີ້ໃຫ້ເປັນອັນລະອຽດ, ມີປະສິດທິພາບ ແລະ ມີປະສິດທິຜົນສູງ.

**ອັດຕະປື, ວັນທີ 8/08/2015**